# ຈຸດປະກາຍ

ISSN 1813-3630

ພິມອອກເທື່ອທີ 3



## ທັດສະນະ
## ຕໍ່ການພັດທະນາໃນ ສ.ປ.ປ.ລາວ

ການປະຕິຮູບທາງດ້ານເສດຖະກິດໃນປະເທດທີ່ກຳລັງຫັນປ່ຽນ, ການສິດສອນພາສາ, ຢູ່ຮ່ວມກັນໂດຍສັນຕິ, ການເຮັດໄຮ່ເລື່ອນລອຍຈຳກັດປະລິມານນ້ຳໃນດິນ

# ຈຸດປະກາຍ

## ພິມຄັ້ງທີ 3


**ການປະຕິຮູບທາງດ້ານເສດຖະກິດໃນປະເທດທີ່ກຳລັງຫັນປ່ຽນ:** 5
*ທີ່ເກີດຂຶ້ນອີກຄັ້ງຂອງ ສປປ ລາວ*
*by Chi Do Pham*

**ການສິດສອນພາສາ:** 19
*ການວິເຄາະເສດຖະກິດໃນການນຳໃຊ້ ບັນດາ ພາສາຊົນເຜົ່າເຂົ້າໃນການສຶກສາ ຕັ້ງແຕ່ຕົ້ນຢູ່ໃນປະເທດລາວ.*
*ໂດຍ: ຣິຊາດ ນູນານ.*

**ຢູ່ຮ່ວມກັນໂດຍສັນຕິ:** 33
*ຂໍ້ຂັດແຍ້ງລະຫວ່າງຄົນ ແລະ ຊ້າງ ແລະ ຄວາມອາດສາມາດໃນການແກ້ໄຂບັນຫາ*
*ໂດຍ Arlyne Johnson, Khamkhoune Khounboline, Thaibault Ledecq, and Roland Eve*

**ການເຮັດໄຮ່ເລື່ອນລອຍຈຳກັດປະລິມານນ້ຳໃນດິນ:** 44
*ການສູນເສຍຝຸ່ນ ນອນຕົມ ແລະ ທາດກາກບອນໃນດິນເນີນ*
*Vincent Chaplot*


## ການແລກປ່ຽນຂໍ້ມູນເພື່ອສົ່ງເສີມການພັດທະນາ

ໃນເດືອນມີນາປີ 2003, ທີມງານອົງການສະຫະປະຊາຊາດປະຈຳຢູ່ ສປປ ລາວ ໄດ້ພົບປະເພື່ອປຶກສາຫາລື ເຖິງວິທີການເພື່ອສົ່ງເສີມການໂອ້ລົມສົນທະນາ ແລະ ແລກປ່ຽນຂໍ້ມູນຂ່າວສານ ເຊິ່ງກັນ ແລະ ກັນ ໃນການເຮັດວຽກ ເພື່ອການພັດທະນາຂອງປະເທດ. ທີມງານດັ່ງກ່າວຈິ່ງໄດ້ຕົກລົງສ້າງໜັງສືວາລະສານເພື່ອເປັນເວທີຂອງການໂອ້ລົມສົນທະນາ ແລະ ປຶກສາຫາລືໃນດ້ານວຽກງານ ເລີ່ມເຮັດບົດບັນທຶກ ທີ່ຈະສະໜອງກອງປະຊຸມ ໂຕ້ວາທີວ່າດ້ວຍວຽກງານການພັດທະນາ, ແລະ ຫຼັງຈາກນັ້ນໄດ້ສ້າງຄະນະກຳມະການຮຽບຮຽງ ເພື່ອຊີ້ນຳນຳພາ. ຄະນະກຳມະການຮຽບຮຽງວາລະສານ ຈຸດປະກາຍ ເຊື່ອໝັ້ນ ຢ່າງຍິ່ງວ່າ ຈຸດປະສົງຂອງການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການພັດທະນາໃນ ສປປ ລາວ ຈະດຳເນີນໄປໄດ້ດີກວ່າເກົ່າ ຖ້າຫາກມີການແລກປ່ຽນຂໍ້ມູນຂ່າວສານ ແລະ ແນວຄວາມຄິດທີ່ສ້າງສັນ. ບົດເລື່ອງທີ່ສະເໜີໃນວາລະສານດັ່ງກ່າວນີ້ ຈະເປັນສິ່ງທ້າທາຍແນວຄວາມຄິດຂອງພວກເຮົາໃນປະຈຸບັນ ແລະ / ຫຼື ມີຂໍ້ມູນຂ່າວສານ ຍັງບໍ່ທັນໄດ້ຮັບການພິມເຜີຍແຜ່ມາກ່ອນ. ພວກເຮົາຫວັງຢ່າງຍິ່ງວ່າວາລະສານ ຈຸດປະກາຍຈະເປັນສິ່ງກະຕຸ້ນຊຸກຍູ້ການໂອ້ລົມສົນທະນາກ່ຽວກັບວຽກງານ ການພັດທະນາໄດ້ຢ່າງຫ້າວຫັນ ແລະ ປະກອບສ່ວນເຮັດໃຫ້ເກີດມີຄວາມເຂົ້າໃຈ ທີ່ດີຂຶ້ນກ່ຽວກັບສິ່ງທ້າທາຍ ໃນການພັດທະນາຢູ່ໃນ ສປປ ລາວ.

# ຄຳນຳ

ການເລືອກເອົາບົດເລື່ອງ ມາລົງໃນວາລະສານຈຸດປະກາຍ ໃນແຕ່ລະສະບັບນັ້ນ ໄດ້ກາຍມາເປັນສິ່ງທ້າທາຍຫຼາຍຍິ່ງຂຶ້ນ, ເພາະວ່າ ມີຫຼາຍບົດເລື່ອງທີ່ສົ່ງເຂົ້າມາໃນທຸກໆເດືອນ. ພວກເຮົາດີໃຈຫຼາຍ ເພາະວ່າ ນີ້ອາດຈະເປັນສັນຍານບອກໃຫ້ເຮົາຮູ້ວ່າ ນັກຊ່ຽວຊານຕ່າງປະເທດ, ນັກພັດທະນາ ແລະ ນັກວິຊາການ ເລີ່ມໃຫ້ຄວາມສົນໃຈນັບມື້ນັບຫຼາຍຂຶ້ນ. ເຖິງແນວໃດກໍ່ຕາມ, ພວກເຮົາກໍ່ຍັງບໍ່ທັນພໍໃຈ ກັບຈຳນວນເອກະສານທີ່ພວກເຮົາໄດ້ຮັບ, ໂດຍສະເພາະຢ່າງຍິ່ງຈາກນັກຂຽນຄົນລາວທັ່ງທີ່ວາລາສານນີ້ ກໍ່ເພື່ອຄົນລາວເອງ ສ່ວນນັກແປພາສາ ຂອງພວກເຮົາເຮັດວຽກຢ່າງໜັກ ເພື່ອພະຍາຍາມສັນຫາ ເນື້ອໃນທີ່ຊາວຕ່າງປະເທດ ສົ່ງມານັ້ນ ມາແປເປັນພາສາລາວ, ຂ້າພະເຈົ້າຮູ້ວ່າ ການແປພາສາລາວ ໄປເປັນເນື້ອໃນພາສາອັງກິດນັ້ນ ແມ່ນງ່າຍກວ່າ.

ກອງບັນນາທິການໄດ້ຄັດເລືອດເອົາສີ່ບົດເລື່ອງທີ່ແຕກຕ່າງກັນມາລົງໃນວາລະສານ ສະບັບປະຈຸບັນ ແລະ ມີບາງແງ່ມຸມທີ່ໜ້າສົນໃຈ ຊຶ່ງຈະໄດ້ຈັດພິມໃນຄັ້ງທີສີ່ ທີ່ຈະມາເຖິງນີ້. ເອກະສານບົດທຳອິດ ແມ່ນມາຈາກ ດຣ. ຈີພັນ ໂດ, ອະດີດຕາງໜ້າກອງທຶນການເງິນສາກົນ (IMF) ປະຈຳສປປລາວ ແລະ ອີກຜູ້ໜຶ່ງຊຶ່ງມີຄວາມຮູ້ຊ່ຽວຊານ ດ້ານນະໂຍບາຍເສດຖະກິດໃນປະເທດທີ່ກຳລັງພັດທະນາ. ການປະກອບສ່ວນ ຂອງທ່ານ ຣິຊາຣ໌ດ ນູນ່ານ (Richard Noonan) ໃນດ້ານເສດຖະສາດຂອງການ ສຶກສາພາສາຊົນເຜົ່າ ແມ່ນປະກົດຜົນຫຼ້າຊ້າ ແລະ ຂະຫຍາຍວົງກວ້າງອອກ ສຳລັບຫົວຂໍ້ທີ່ທ່ານສຸກສະຫວ່າງ ສີມະນະ ໄດ້ຍົກຂຶ້ນມາ ໃນສະບັບທີ່ແລ້ວ.

ອາລີນ ຈອນສັນ (Arlyne Johnson) ແລະ ນັກຂຽນຮ່ວມ ໄດ້ໃຫ້ບົດລາຍງານທີ່ດີເລີດກ່ຽວກັບບັນຫາອະນາຄົດ ຂອງຊ້າງລາວ. ສັດປະເສີດເຫຼົ່ານີ້ມີບົດບາດທີ່ສຳຄັນຕໍ່ວັດທະນະທຳ ແລະ ປະຫວັດສາດຂອງລາວ, ແລະ ອາດຈະກາຍເປັນຊັບພະຍາກອນໃນອະນາຄົດໃນດ້ານການພັດທະນາການທ່ອງທ່ຽວ, ສ່ວນບົດເລື່ອງສຸດທ້າຍ, ມາຈາກ Vincent Chaplot ທີ່ທວນຄືນສູ່ເລື່ອງການຖາງປ່າເຮັດໄຮ່ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ. ຫຼັກຖານທາງດ້ານວິທະຍາສາດຂອງ ທ່ານ Chaplot ໃຫ້ຮູ້ວ່າ ທີ່ຈິງແລ້ວການຖາງປ່າເຮັດໄຮ່ ອາດຈະເປັນວິທີການຮັກສາດິນໃນເຂດພູດອຍ ທີ່ສະໜອງອາຫານ ໃຫ້ເປັນແງ່ຄິດສຳລັບນັກວາງແຜນພັດທະນາຊົນນະບົດ.

ຄວາມຄິດເຫັນທີ່ສະເໜີໃນບົດເລື່ອງເຫຼົ່ານີ້ແມ່ນຫຼາກຫຼາຍ ແລະ ບາງຄັ້ງກໍ່ມີຄວາມຂັດແຍ້ງກັນ, ແທ້ທີ່ຈິງແລ້ວມັນເປັນການແລກປ່ຽນຄວາມຄິດເຫັນ, ຄວາມຄິດເຫັນ ແລະ ການສຶກສາຄົ້ນຄວ້າ ແມ່ນມີຄວາມສຳຄັນສຳລັບການບັນລຸຜົນ ໃນການພັດທະນາຊັບພະຍາກອນມະນຸດແບບຍືນຍົງ ແລະ ການລົບລ້າງຄວາມທຸກຈົນ. ອີກຢ່າງໜຶ່ງ ຂ້າພະເຈົ້າຂໍເຊີນໃຫ້ທ່ານເປີດໃຈອ່ານມັນ ແລະ ຄຳນຶງຢູ່ສະເໝີວ່າ ຖ້າທ່ານບໍ່ເຫັນດີນຳ ແລະ ສາມາດສະໜອງຫຼັກທີ່ດີໄດ້ ໃນມຸມມອງທີ່ແຕກຕ່າງ, ວາລະສານຈຸດປະກາຍກໍ່ແມ່ນເວທີສຳລັບການຈັດພິມເຜີຍແຜ່.

ຟິນ ເຣສເກ ນຽນເຊັນ
ຜູ້ປະສານງານອົງການສະຫະປະຊາຊາດປະຈຳລາວ

# ຈົດໝາຍ

## ເພື່ອນຮ່ວມງານ

ຂ້າພະເຈົ້າໄດ້ອ່ານວາລະສານ ຈຸດປະກາຍທັງສອງສະບັບ, ຂ້າພະເຈົ້າເຂົ້າໃຈດີວ່າ ອົງການສະຫະປະຊາດ ເພື່ອການພັດທະນາ(UNCT) ໄດ້ສຸມຈິດສຸມໃຈໃສ່ວາລະສານນີ້ຢ່າງເຕັມທີ່ແລ້ວ, ແຕ່ຂ້າພະເຈົ້າຄິດວ່າຄຸນນະພາບ ການແປເປັນພາສາລາວບໍ່ຄ່ອຍດີປານໃດ. ຂ້າພະເຈົ້າເກືອບບໍ່ເຂົ້າໃຈໃນບາງເອກະສານ ແລະ ພົບວ່າເອກະສານອື່ນໆກໍ່ສັບສົນ(ຕົວຢ່າງເຊັ່ນ ວິທີ ທີ່ບໍລິສັດຕ່າງໆ ຮຽນຮູ້ ແລະ ແມ່ຂອງ ທີ່ນອນຢູ່ໃນສະບັບສຸດທ້າຍ). ຂ້າພະເຈົ້າຕ້ອງໄດ້ສົມທຽບ ກັບບົດທີ່ເປັນພາສາອັງກິດ ເພື່ອໃຫ້ເຂົ້າໃຈດີຍິ່ງຂຶ້ນ. ອີກຢ່າງໜຶ່ງ ແມ່ນເນື້ອໃນຂອງບົດເລື່ອງ ແມ່ນເວົ້າເປັນສັບເຕັກນິກ ຫຼາຍໂພດ, ຂ້າພະເຈົ້າບໍ່ຄິດວ່າ ມັນຈະມີປະໂຫຍດແກ່ປະຊາຊົນລາວສ່ວນຫຼາຍ. ຕ້ອງຂໍເວົ້າກັນແບບກົງໆເລີຍວ່າ, ບາງບົດເລື່ອງ ຍາວ ແລະ ທັງໜ້າເບື່ອ. ຈາກການປຶກສາຫາລືກັບເພື່ອນ ແລະ ເພື່ອນຮ່ວມງານ, ພວກຂ້າພະເຈົ້າຢາກໃຫ້ມັນກະທັດຮັດ ແຕ່ໃຫ້ຂໍ້ມູນຄົບຖ້ວນ ແລະ ສະຫຼຸບລວມຢ່າງຄັກແນ່.

## ສົ່ງມາທາງອີເມລ

ບັນນາທິການ: ຂອບໃຈທີ່ທ່ານເວົ້າອອກມາກົງໆ! ຍອມຮັບວ່າມັນມີບັນຫາເລື່ອງ ການແປສັບເຕັກນິກມາເປັນ ພາສາລາວ, ແຕ່ມັນກໍ່ໜ້າສົນໃຈ ທີ່ໜຶ່ງໃນບົດເລື່ອງທີ່ຜູ້ອ່ານບໍ່ເຂົ້າໃຈນັ້ນ ທີ່ຈິງແລ້ວມັນຂຽນເປັນພາສາລາວກ່ອນ ແລ້ວຈຶ່ງມາຂຽນເປັນພາສາອັງກິດນຳຫຼັງ. ໜຶ່ງໃນມາດຖານທີ່ຢູ່ ເບື້ອງຫຼັງການຈັດພິມວາລະສານຈຸດປະກາຍ ແມ່ນຄວາມຊຳນານດ້ານການອ່ານໃນປະເທດລາວຍັງຕ່ຳ ຊຶ່ງເປັນຜົນມາຈາກການຈັດພິມໜັງສືວາລະສານຕ່າງໆມີໜ້ອຍ. ພວກເຮົາຈະສືບຕໍ່ຈັດພິມໜັງສືວາລະສານກ່ຽວກັບເຕັກນິກ ແລະ ການພັດທະນາ ທັງໃນພາສາລາວ ແລະ ພາສາອັງກິດ, ແລະ ຂໍຄວາມກະລຸນາໃຫ້ບັນດາຜູ້ອ່ານ ຈົ່ງໄດ້ສະໜອງບົດເລື່ອງທີ່ໜ້າສົນໃຈມາໃຫ້ແກ່ພວກເຮົາດ້ວຍ.

## ການເຮັດໄຮ່

## ເພື່ອນຮ່ວມງານ

Pandey, S. et al ໄດ້ໃຫ້ທັດສະນະທີ່ດີຕໍ່ຄວາມອາດສາມາດໃນການຂະຫຍາຍພື້ນທີ່ປູກເຂົ້າພາຍໃນເຂດພູເຂົາທາງພາກເໜືອຂອງລາວ(ສະບັບທີ 2). ຂ້າພະເຈົ້າຢາກໃຫ້ຄຳເຫັນວ່າ:

- ບົດເລື່ອງນັ້ນໄດ້ເວົ້າເຖິງການສຶກສາຄົ້ນຄວ້າ ທີ່ສະເໜີໃຫ້ຮູ້ການພົວພັນກັນ ລະຫວ່າງຈຳນວນດິນນາ ແລະ ລະດັບຄວາມ ພຽງພໍ/ອຸດົມສົມບູນ ຂອງອາຫານ. ຊຶ່ງໄດ້ສະເໜີວ່າ (ສາຍພົວພັນທາງກັນ) ຜູ້ທີ່ມີດິນນາກວ້າງຍ່ອມເປັນຜູ້ທີ່ຮັ່ງມີ ແລະ ໂດຍສະຫລຸບແລ້ວ ການຂະຫຍາຍເນື້ອທີ່ນາ ໃຫ້ກວ້າງອອກນັ້ນ ໄດ້ນຳມາຊຶ່ງຄວາມພຽງພໍດ້ານສະບຽງອາຫານ ແລະ ຄວາມຮັ່ງມີ. ສະຫລຸບກໍ່ຄື ຊາວກະສິກອນຜູ້ທີ່ຮັບເອົາ ການປ່ຽນແປງໃໝ່ຈາກໂຄງການນັ້ນ ແມ່ນຮັ່ງມີຂຶ້ນກວ່າເກົ່າ ການປ່ຽນແປງດັ່ງກ່າວ ແມ່ນຖືກນຳໃຊ້ທົ່ວໄປໃນໂລກ. ເຖິງແນວໃດກໍ່ຕາມ ມັນກໍ່ບໍ່ເປັນຈິງສະເໝີໄປ, ສ່ວນຫລາຍຊາວກະສິກອນຜູ້ທີ່ນຳໃຊ້ວິທີການປ່ຽນແປງໃໝ່ນີ້ ແມ່ນເປັນຜູ້ທີ່ມີຖານະດີ ແລະ ເງື່ອນໄຂການດຳລົງຊີວິດກໍ່ດີກວ່າ, ເຊັ່ນວ່າພວກເຂົາເອງກໍ່ມີເງື່ອນໄຂ ໃນການຂະຫຍາຍເສດຖະກິດຄອບຄົວຢູ່ແລ້ວ.

- ໃນບົດເລື່ອງຍັງໄດ້ກ່າວວ່າ ຂໍ້ຫຍຸ້ງຍາກໃນການຂະຫຍາຍເນື້ອທີ່ນາອອກໄປຕື່ມນັ້ນ ດຽວນີ້ມັນໄດ້ມີຂໍ້ຈຳກັດຍ້ອນບໍ່ມີດິນທີ່ເໝາະສົມ ແລະ ນ້ຳພຽງພໍ. ອີງຕາມປະສົບການທີ່ເຄີຍເຮັດວຽກຢູ່ປະເທດເນປານມາ ເປັນເວລາຫ້າປີ, ຂ້າພະເຈົ້າຈຶ່ງເວົ້າໄດ້ວ່າ ຂໍ້ຈຳກັດທາງດ້ານເຕັກນິກໃນການຂະຫຍາຍເນື້ອທີ່ນາໃນພື້ນທີ່ພູດອຍ ຂອງລາວນັ້ນແມ່ນໃຫຍ່ຫລວງຫລາຍ. ລະບົບຊົນລະປະທານສ່ວນຫລາຍໃນປະເທດລາວແມ່ນປະກອບມີເຂື່ອນຂ້າມນ້ຳ, ເຮັດໃຫ້ມີຕະຄອງສັ້ນ. ສ່ວນໃນພື້ນທີ່ພູເຂົາ, ນ້ຳທີ່ໄຫລເຂົ້າມາແມ່ນໄຫລຂະໜານໄປພ້ອມກັບ ແມ່ນ້ຳ, ເຮັດໃຫ້ເກີດມີຕະຄອງຍາວ ທີ່ມີຄວາມອາດສາມາດສູງກວ່າ. ຂໍ້ຈຳກັດໃນການຂະຫຍາຍພື້ນທີ່ນາໃນເຂດພູດອຍຂອງລາວ ແມ່ນເປັນຍ້ອນຂາດຄວາມຊຳນານ ທາງດ້ານເຕັກນິກ, ພ້ອມທັງຂາດປັດໄຈໃນການ ບົວລະບັດຮັກສາ(ຈຳນວນຊາວກະສິກອນທີ່ໃຊ້ນ້ຳຊົນລະປະທານເຮັດນາມີໜ້ອຍ) ແລະ ເງື່ອນໄຂດ້ານການເງິນ. ອີກຢ່າງໜຶ່ງ, ການຄອບຄອງຂະໜາດທີ່ດິນໃນອາຊີ ສ່ວນຫລາຍແມ່ນຂຶ້ນກັບຄວາມສາມາດຂອງເຈົ້າຂອງທີ່ດິນໃນການໃນຄາດໄຖ. ໃນປະເທດລາວ ການຄາດໄຖສ່ວນຫລາຍແມ່ນໃຊ້ກົນຈັກ, ແຕ່ໃນພື້ນທີ່ພູເຂົາການຄາດໄຖດ້ວຍກົນຈັກແມ່ນມີຂໍ້ຈຳກັດຍ້ອນສະພາບຂອງດິນ. ການຂະຫຍາຍເນື້ອທີ່ນາມີຂໍ້ຈຳກັດຍ້ອນຄວາມສາມາດໃນການຄາດໄຖດິນ.

- ໃນບົດວິເຄາະມູນຄ່າຜົນປະໂຫຍດ ທີ່ໄດ້ສະເໜີໄປນັ້ນ, ເຫັນວ່າມູນຄ່າຕົ້ນຕໍຂອງການສ້າງເນື້ອທີ່ນາຜືນໃໝ່ ແມ່ນການສ້າງຕະຄອງນ້ຳ, ໜາມໝາກຈັບ ແລະ ຕະຄອງຊົນລະປະທານ. ຄາດວ່າຈະຕ້ອງໃຊ້ຈ່າຍປະມານ 300 ໂດລາສະຫະລັດ ຕໍ່ເຮັກຕາ, ຕາມບົດສຳຫລວດຂອງ Troesch ໃຫ້ຮູ້ວ່າ. ຕົວເລກນີ້ເບິ່ງຄືວ່າປະເມີນຄ່ານ້ອຍໄປ. ຊາວກະສິກອນບໍ່ໄດ້ໄລ່ຄ່າຕົ້ນທຶນເຕັມ(ບໍ່ພຽງແຕ່ເງິນເທົ່ານັ້ນ, ແຕ່ຍັງມີ ຄ່າແຮງງານນຳອີກ) ການຂະຫຍາຍເນື້ອທີ່ເອງ ກໍ່ຂ້ອນຂ້າງງ່າຍ. ຈຸດຄຸ້ມທຶນແມ່ນກຳນົດເອົາສີ່ປີ. ການປະເມີນອາດຈະບໍ່ຖືກຕ້ອງ ຫລືບໍ່ກໍ່ແມ່ນດ້ານການເງິນມີຄວາມສຳຄັນຂຶ້ນເລື້ອຍໆ. ມັນເປັນສິ່ງທີ່ໜ້າສົນໃຈໃນການຊອກຫາລາຄາ ການສ້າງຕະຄອງນ້ຳ ຊຶ່ງມັນໄດ້ກາຍເປັນສິ່ງທີ່ບໍ່ຄຸ້ມທຶນ. ຖ້າພວກເຮົາລົງທຶນຕື່ມອີກ 500ໂດລາສະຫະລັດ ເພື່ອຕິດຕັ້ງຊົນລະປະທານ, (ລວມທັງໝົດເປັນ 800ໂດລາສະຫະລັດ), ອັດຕາທີ່ໄດ້ຄືນມາແມ່ນ 20% ແລະ ຈຸດຄຸ້ມທຶນກໍ່ຈະຂຶ້ນເປັນສິບປີ. ຖ້າລົງທຶນຕື່ມອີກ 1,000ໂດລາສະຫະລັດ(ລວມທັງໝົດເປັນ13,000ໂດລາສະຫະລັດ) ກໍ່ຈະໃກ້ຄຽງກັບອັດຕາຫລຸດຜ່ອນ 10%. ເຖິງແມ່ນວ່າຈຸດຄຸ້ມທຶນຈະສາມາດບັນລຸໄດ້ໃນໄລຍະ25 ປີກໍ່ຕາມ. ອັດຕາຫລຸດຜ່ອນກໍ່ຈະເພີ່ມຂຶ້ນເປັນ 25% ຢ່າງຫລີກລ່ຽງບໍ່ໄດ້. ເມື່ອນັ້ນກໍ່ຈະມີເປີເຊັນມູນຄ່າສຸດທິໃນປະຈຸບັນ ຫລາຍກວ່າ 200ໂດລາສະຫະລັດ.

ເຖິງແນວໃດກໍ່ຕາມ, ຂ້າພະເຈົ້າກໍ່ຂໍເນັ້ນຍ້ຳວ່າຄຳເຫັນເຫລົ່ານີ້ບໍ່ໄດ້ມີຄວາມສຳຄັນໜ້ອຍໄປກວ່າ ເນື້ອໃນສຳຄັນ ຂອງບົດເລື່ອງນີ້: ການລົງທຶນໃສ່ລະບົບຊົນລະປະທານຂະໜາດນ້ອຍ ອາດຈະປະກອບສ່ວນສຳຄັນເຂົ້າໃນ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດພູດອຍໃຫ້ດີຂຶ້ນ.

Rick Dubbeldam
rd_kw@hotmail.com

**ອົງການສະຫະປະຊາຊາດໃນ ສປປ ລາວ.ໄດ້ໃຫ້ການສະໜັບສະໜູນ ການຜະລິດວາລະສານຈຸດປະກາຍ. ມຸມມອງໃນການພັດທະນາລາວ ໂດຍມີເປົ້າໝາຍເພື່ອສົ່ງເສີມການສົນທະນາບັນຫາທັງໝົດ ທີ່ພົວພັນເຖິງການພັດທະນາພາຍໃນປະເທດ. ກອງບັນນາທິການເປັນຜູ້ກວດກາບົດຄືນເບິ່ງບົດຄວາມທີ່ສະເໜີໃນສະບັບນີ້. ຄຳຄິດເຫັນທີ່ສະແດງອອກ ໃນການພິມຄັ້ງນີ້ລ້ວນແລ້ວແຕ່ເປັນຂອງນັກຂຽນເອງ ແລະ ບໍ່ຈຳເປັນຈະຖືວ່າເປັນຕົວແທນຂອງອົງການສະຫະປະຊາຊາດໃນ ສປປ ລາວ.**

# ການປະຕິຮູບທາງດ້ານເສດຖະກິດໃນປະເທດທີ່ກຳລັງຫັນປ່ຽນ: ທີ່ເກີດຂຶ້ນອີກຄັ້ງຂອງ ສປປ ລາວ

by Chi Do Pham

*ເອກະສານສະບັບນີ້ ເປັນແຜນຜັງຊີ້ບອກເຖິງການປ່ຽນແປງນະໂຍບາຍ ທາງດ້ານເສດຖະກິດຂອງສປປລາວ ຕັ້ງແຕ່ກາງຊຸມປີ1980, ທີ່ປະສົບທັງຜົນສຳເລັດ ແລະ ບັນຫາຕ່າງໆ ໃນຄວາມພະຍາຍາມເພື່ອຈະສ້າງເສດຖະກິດທິດທາງການຕະຫຼາດ. ຜູ້ຂຽນໄດ້ໂຕ້ວ່າລັດວິສາຫະກິດ ແລະ ໜີ້ບໍ່ອອກຜົນຍັງຄົງເປັນອຸປະສັກຕໍ່ເສດຖະກິດແຫ່ງຊາດ ແລະ ສະຫຼຸບໂດຍລວມກໍ່ຄື, ນະໂຍບາຍພື້ນຖານ ແລະ ນະໂຍບາຍແບບໃໝ່ກໍ່ຍັງຄົງເປັນສິ່ງຈຳເປັນ ຖ້າຫາກວ່າປະເທດຊາດຢາກກ້າວໃຫ້ທັນກັບເສດຖະກິດຂອງປະເທດເພື່ອນບ້ານໃກ້ຄຽງ.*

## ຄວາມເປັນມາຂອງການປະຕິຮູບເສດຖະກິດ ແລະ ເງື່ອນໄຂການລິເລີ່ມ

ພາຍຫຼັງປີ 1975 ໄດ້ເກີດມີການປະຕິວັດຄອມມູນິດຂຶ້ນໃນສປປລາວ, ແລ້ວຈຶ່ງເກີດມີເສດຖະກິດລັດຄຸ້ມຄອງ ຊຶ່ງຖືວ່າເປັນພາກສ່ວນທີ່ສຳຄັນ, ວຽກງານດ້ານກະສິກຳຍັງຄົງແມ່ນພາກສ່ວນເອກະຊົນລາຍຍ່ອຍເປັນຜູ້ຄຸ້ມຄອງ. ລາຄາຜົນຜະລິດທາງດ້ານກະສິກຳກໍ່ແມ່ນລັດເປັນຜູ້ກຳນົດ, ການຄ້າຂາຍລະຫວ່າງແຂວງດ້ວຍກັນແມ່ນຖືກຈຳກັດ, ຄ່າແຮງງານທີ່ຈ່າຍໃຫ້ພາກສ່ວນສຳນັກງານຂອງລັດສ່ວນຫຼາຍແມ່ນຈ່າຍເປັນເງິນປື້ມ, ຊຶ່ງສາມາດຈ່າຍຊື້ເຄື່ອງຂອງພາຍໃນຮ້ານຄ້າຂອງລັດເທົ່ານັ້ນ. ການຄວບຄຸມລາຄາສິນຄ້າພາຍໃນ ແລະ ອັດຕາແລກປ່ຽນເງິນຕາທີ່ສູງເກີນຂອບເຂດ ໄດ້ນຳໄປສູ່ຕະຫຼາດທີ່ມີຄວາມເທົ່າທຽມກັນໃນດ້ານການແລກປ່ຽນສິນຄ້າ ແລະ ຕ່າງປະເທດ (Ljunggren 1993; Bourdet 1995).

ໃນດ້ານອຸດສະຫະກຳ, ປະກອບມີຍອດລວມຜະລິດຕະພັນພາຍໃນ (GDP) ພຽງເລັກໜ້ອຍເທົ່ານັ້ນ, ສ່ວນຫຼາຍແມ່ນເນັ້ນໃສ່ການຜະລິດອຸດສະຫະກຳເບົາ, ໂດຍມີລະບົບການວາງແຜນ ຂອງລັດເປັນກົນໄກຄວບຄຸມເປັນສ່ວນຫຼາຍ. ລັດວິສາຫະກິດຖືບັນຊີກວມເອົາຜົນຜະລິດອຸດສະຫະກຳເຖິງ 80% ແລະ ບັນດາບໍລິສັດເຫຼົ່ານີ້ມີໜ້າທີ່ໂອນເອົາຕົວເລກທີ່ຕັ້ງເປົ້າໝາຍໄວ້ນັ້ນເຂົ້າໃນງົບປະມານ, ໂດຍບໍ່ຄຳນຶງວ່າສະຖານະພາບ ທາງດ້ານການເງິນຂອງເຂົາເຈົ້າຈະເປັນຄືແນວໃດ. ສະນັ້ນພວກເຂົາຈຳເປັນຕ້ອງໄດ້ກູ້ຢືມເງິນຈາກລະບົບທະນາຄານເປັນຈຳນວນຫຼວງຫຼາຍເພື່ອນຳມາຊ່ວຍໃນການດຳເນີນກິດຈະການ. ຜົນທີ່ຕາມມາກໍ່ຄືມັນຮຽກຮ້ອງໃຫ້ມີນະໂຍບາຍທາງດ້ານການເງິນ ເພື່ອຕອບສະໜອງຄວາມຕ້ອງການທາງດ້ານສິນເຊື່ອຂອງວິສາຫະກິດລັດ, ເຊັ່ນດຽວກັບການຂາດດຸນຂອງງົບປະມານປະຈຳປີຂອງລັດຖະບານ, ເປັນແຮງຍູ້ໜູນໃຫ້ເກີດມີຄວາມກົດດັນທາງດ້ານພາວະເງິນເຟີ້.

## ນະໂຍບາຍເສລີພາບທາງດ້ານການຄ້າ ແລະ ລາຄາ

ໃນປີ1986, ລັດຖະບານໄດ້ເລີ່ມນຳໃຊ້ກົນໄກເສດຖະກິດແບບໃໝ່ (NEM), ວາລະໃໝ່ທີ່ມີຄວາມກະຕືລືລົ້ນຢາກປ່ຽນນະໂຍບາຍທາງດ້ານການຄ້າ ແລະ ລາຄາ. ວິສາຫະກິດເອກະຊົນມີເສລີພາບ

ໃນການກຳນົດລະດັບການຜະລິດ, ຜົນຜະລິດແບບປະສົມປະສານ, ການລົງທຶນ, ການຈ້າງງານ ແລະ ຄ່າຈ້າງແຮງງານດ້ວຍຕົນເອງ, ລາຄາເກັບຊື້ຜົນຜະລິດກະສິກຳແມ່ນມີອິດສະຫຼະ: ຊາວກະສິກອນເລີ່ມໄດ້ຮັບເງິນສົດເປັນຄ່າຕອບແທນຜົນຜະລິດຂອງເຂົາເຈົ້າ; ການເກັບຊື້ ແລະ ຈຳໜ່າຍເຂົ້າຂອງລັດແບບຜູກຂາດນັ້ນຈຶ່ງໄດ້ສິ້ນສຸດລົງ.

ນອກຈາກນີ້ລາຄາຂາຍຍ່ອຍ, ຍົກເວັ້ນການຊົມໃຊ້ສະເພາະຂອງລັດ ແລະ ການຄົມມະນາຄົມທາງອາກາດພາຍໃນປະເທດ ແມ່ນໄດ້ຮັບເສລີພາບ. ພາກສ່ວນເອກະຊົນແມ່ນຍັງຖືກກຳນົດ ໃຫ້ເຂົ້າຮ່ວມຢ່າງສົມບູນໃນການຜະລິດ ແລະ ການຈຳໜ່າຍ(ແຈກຢາຍ) ສິນຄ້າ ແລະ ການບໍລິການເປັນສ່ວນຫຼາຍ. ໄດ້ມີດຳລັດອອກມາເພື່ອໃຫ້ສິດເສລີພາບ ແກ່ບັນດາບໍລິສັດເອກະຊົນຕ່າງໆແລະໃຫ້ເຂົາເຈົ້າສາມາດມີກຳໄລໄດ້ຫຼັງຈາກຫັກຄ່າພາສີໄປແລ້ວ. ຂອບເຂດຂອງວິສະຫະກິດເອກະຊົນ ແລະ ວິສະຫະກິດແບບປະສົມໃນເວທີການຄ້າສາກົນ ໄດ້ຮັບການຂະຫຍາຍໃຫ້ກວ້າງອອກ. ລະບົບການແລກປ່ຽນມີຄວາມສະດວກຍິ່ງຂຶ້ນ ໂດຍມີອັດຕາແລກປ່ຽນທີ່ເປັນທາງການແບບ ເປັນລະດັບອັນໜຶ່ງອັນດຽວ ໃກ້ຄຽງກັບອັດຕາແລກປ່ຽນຂອງຕະຫຼາດທີ່ມີຄວາມເທົ່າທຽມກັນ.

## ນະໂຍບາຍທາງດ້ານສະເຖຍລະພາບ

ໃນໄລຍະຕົ້ນຂອງຊຸມປີທີ່ມີການປະຕິຮູບ, ກໍ່ຍັງຄົງຂາດແຮງຍູ້ໜູນທາງດ້ານງົບປະມານ ບໍ່ວ່າພາກລັດກໍ່ຄືເອກະຊົນຊຶ່ງມັນນຳໄປສູ່ການພິມເງິນອອກນຳໃຊ້ ແລະ ບໍ່ມີຂໍ້ຈຳກັດໃນການຮັບສິນເຊື່ອຈາກລະບົບທະນາຄານ, ແລະ ດ້ວຍເຫດນີ້ເອງມັນຈຶ່ງນຳໄປສູ່ພາວະເງິນເຟີ້ທີ່ມີອັດຕາແລກປ່ຽນສູງ. ຕົກມາຮອດປີ 1989, ລັດຖະບານຍັງສືບຕໍ່ອາໄສກູ້ເງິນຈາກທະນາຄານຢ່າງຫຼວງຫຼາຍ ເພື່ອນຳມາແກ້ໄຂການຂາດດຸນຂອງງົບປະມານປະຈຳປີ. ນອກຈາກນີ້ແລ້ວ, ລະບົບທະນາຄານ ກໍ່ຍັງໃຫ້ສິນເຊື່ອແກ່ວິສາຫະກິດເອກະຊົນນຳອີກ, ເຖິງແມ່ນວ່າເສລີພາບໃນການກູ້ຢືມເງິນຂອງພວກເຂົາ ແລະ ຄວາມພະຍາຍາມໃນການວາງໂຄງສ້າງຄືນໃໝ່ນັ້ນຈະຍັງໃໝ່ຢູ່ກໍ່ຕາມ. ພາວະເງິນເຟີ້ໄດ້ຖີບຕົວຂຶ້ນກາຍ 100% ຂອງອັດຕາປະຈຳປີໃນຊ່ວງກ່ອນກາງປີ 1989, ສ່ວນຫຼາຍແມ່ນຍ້ອນການຂາດດຸນທາງດ້ານການເງິນ, ປະກອບກັບຄ່າແຮງງານທີ່ເພີ່ມສູງຂຶ້ນ ໃນພາກສ່ວນເອກະຊົນເພື່ອທົດແທນ ການຈ່າຍຄ່າອາຫານເປັນເງິນປົ້ມ, ແລະ ອີກສ່ວນໜຶ່ງກໍ່ແມ່ນຍ້ອນຜົນກະທົບທີ່ເກີດຈາກໄພແຫ້ງແລ້ງທີ່ຮຸນແຮງໃນຊ່ວງປີ 1987-88.

---

*ການຄວບຄຸມການເງິນໄດ້ຊ່ວຍສ້າງຄວາມໝັ້ນໃຈໃນຄ່າຂອງເງິນ*

*ກັບຄືນມາໃໝ່ ແລະ ເລີ່ມມີລະບົບທະນາຄານການຄ້າຂຶ້ນມາ*

---

ສິ່ງນີ້ມັນໄດ້ເປັນສັນຍານເຕືອນໃຫ້ລັດຖະບານ ຕ້ອງໄດ້ຕັດສິນໃຈໃຊ້ມາດຕະການດ້ານສະຖຽນລະພາບໃນທ້າຍປີ 1989, ໃນນາມຂອງໂຄງການປັບໂຄງສ້າງໃໝ່ເພື່ອຄວາມເຂົ້າໃຈ ໂດຍໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງຄູ່ຮ່ວມສັນຍາແບບສອງຝ່າຍ ແລະ ຫຼາຍຝ່າຍ. ນອກເໜືອຈາກການປະກອບສ່ວນທາງດ້ານການເງິນແລ້ວ, ອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອເຫຼົ່ານີ້ ຍັງໄດ້ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກທົ່ວໄປ ແລະ ຄຳແນະນຳກ່ຽວກັບນະໂຍບາຍເພື່ອສະໜັບສະໜູນການພັດທະນາລະບົບການເງິນ ຂອງລັດຖະບານໃຫ້ມີຄວາມເຂັ້ມແຂງ ແລະ ນະໂຍບາຍທາງດ້ານ ການເງິນທີ່ອອກແບບເພື່ອຫຼຸດຜ່ອນການຂາດດຸນຂອງງົບປະມານ ແລະ ຕັດຮອນການເພີ່ມເຕີມເງິນສົດໃນເສດຖະກິດ.

ໃນດ້ານການເງິນ, ໄດ້ມີການປະຕິຮູບລະບົບພາສີອາກອນທີ່ສຳຄັນສອງຄັ້ງຄືໃນປີ 1988 ແລະ ປີ 1989, ຊຶ່ງມັນໄດ້ຊ່ວຍເພີ່ມລາຍຮັບຂອງລັດຖະບານຂຶ້ນຕື່ມອີກ ທັງຈາກພາສີໂດຍທາງກົງ ແລະທາງອ້ອມ. ຄວາມພະຍາຍາມດັ່ງກ່າວນີ້ກໍ່ເພື່ອເກັບລາຍຮັບໃຫ້ໄດ້ຮັບຜົນສຳເລັດເປັນຢ່າງສູງ, ໂດຍອີງໃສ່ການສະໜັບສະໜູນທາງດ້ານການເມືອງທີ່ເຂົາເຈົ້າໄດ້ຮັບນັ້ນ. ອັດຕາສ່ວນລາຍຮັບ/ຍອດລວມຜະລິດຕະພັນພາຍໃນ (GDP) ໄດ້ເພີ່ມຂຶ້ນຈາກ 8.2% ໃນປີ 1989 ມາເປັນ 12% ໃນປີ 1993. ໃນຂະນະດຽວກັນລາຍຈ່າຍໃນປະຈຸບັນ ກໍ່ຢູ່ຄົງທີ່ຍ້ອນສ່ວນແບ່ງຂອງຍອດລວມ ຜະລິດຕະພັນພາຍໃນ (GDP), ສະນັ້ນການຂາດດຸນທາງດ້ານງົບປະມານຈຶ່ງໄດ້ຫຼຸດລົງຈາກ 12.5% ຂອງຍອດລວມຜະລິດຕະພັນພາຍໃນ (GDP) ໃນປີ 1989 ມາເປັນ 4.4% ໃນປີ 1993. ການຂາດດຸນດັ່ງກ່າວຍັງໄດ້ຮັບການຊ່ວຍເຫຼືອ ທາງດ້ານການເງິນຢ່າງເຕັມທີ່ຈາກພາຍນອກ, ໂດຍບໍ່ຕ້ອງອາໄສການເງິນຈາກທະນາຄານ.

ມາດຕະການທີ່ໄດ້ຮັບຜົນດີໃນການຄວບຄຸມໄພເງິນເຟີ້ນັ້ນແມ່ນນະໂຍບາຍທາງດ້ານການເງິນທີ່ມີປະສິດຕິພາບອັນປະກອບມີ: (i) ໃຫ້ສິນເຊື່ອທະນາຄານແກ່ລັດຖະບານ; (ii) ຫຼຸດຜ່ອນການໃຫ້ສິນເຊື່ອທະນາຄານແກ່ລັດວິສາຫະກິດ ແລະ (iii) ນຳໃຊ້ລະບົບການຝາກເງິນປະຈຳ 3ເດືອນ ແລະ ປະຈຳ 1 ປີ ໂດຍໃຫ້ອັດຕາດອກເບ້ຍສູງ ເພື່ອດຶງດູດເອົາເງິນສົດເຂົ້າທະນາຄານ ແລະ ຊຸກຍູ້ສົ່ງເສີມໃຫ້ມີການຝາກປະຢັດ. ໂດຍປະຕິບັດຕາມມາດຕະການເຫຼົ່ານີ້, ການຈໍລະຈອນເງິນສົດພາຍໃນໄດ້ຫຼຸດລົງຈາກ89% ໃນປີ 1989 ລົງມາຮອດ 16% ໃນປີ 1991.

ຜົນຂອງການຕໍ່ສູ້ຕ້ານໄພເງິນເຟີ້ນັ້ນເກີດຂຶ້ນແບບກະທັນຫັນ: ໃນແຕ່ລະປີໄພເງິນເຟີ້ໄດ້ຫຼຸດຜ່ອນລົງຈາກ 76% ໃນທ້າຍປີ 1989 ລົງມາເປັນ 10%ໃນທ້າຍປີ 1991; ຊຶ່ງມັນໄດ້ຫຼຸດລົງຕື່ມອີກເປັນ 7% ໃນປີ 1993. ຜົນສຳເລັດໃນການຄວມຄຸມການເງິນ ຍັງໄດ້ຊີ້ໃຫ້ເຫັນອີກວ່າໃນໄລຍະຊ່ວງກາງປີ 1989 ຫາທ້າຍ ປີ 1993 ອັດຕາແລກປ່ຽນເງິນກີບແມ່ນມີຄວາມໝັ້ນທ່ຽງ, ສະນັ້ນຈຶ່ງໄດ້ສືບຕໍ່ຜົນສຳເລັດຂອງການຄວບຄຸມໄພເງິນເຟີ້ຕໍ່ໄປ. ການຄວມຄຸມການເງິນໄດ້ຊ່ວຍສ້າງ ຄວາມໝັ້ນໃຈໃນຄ່າຂອງເງິນກີບຄືນມາໃໝ່ ແລະ ເລີ່ມມີລະບົບທະນາຄານການຄ້າຂຶ້ນມາ (Chi Do Pham 1994 and 1996)

## ມາດຕະການທາງດ້ານໂຄງສ້າງ

ນະໂຍບາຍດ້ານສະເຖຍລະພາບຈະຕ້ອງໄປຄຽງຄູ່ພ້ອມກັບນະໂຍບາຍທາງດ້ານໂຄງສ້າງທີ່ພົ້ນເດັ່ນ.

ການປະຕິຮູບວິສາຫະກິດເອກກະຊົນ ແລະ ໂຄງການໂອນກຳມະສິດຈາກລັດໄປສູ່ເອກກະຊົນ

ລັດຖະບານໄດ້ລິເລີ່ມຕັດສິນໃຈ ດຳເນີນໂຄງການ ເພື່ອໂອນວິສາຫະກິດລັດທັງໝົດເປັນຂອງເອກະຊົນ, ຍົກເວັ້ນເຈັດບໍລິສັດທີ່ຖືວ່າເປັນຍຸດທະສາດ, ຊຶ່ງຍັງຄົງໄວ້ໃນພາກສ່ວນຂອງລັດ ແລະ ໄດ້ຖືກວາງໂຄງສ້າງຄືນໃໝ່. ໂດຍດຳເນີນໄປພ້ອມດຽວກັບຂໍ້ກຳນົດທີ່ສຳຄັນດັ່ງນີ້: (i) ມີພຽງແຕ່ວິສາຫະກິດລັດຂະໜາດນ້ອຍເທົ່ານັ້ນ ທີ່ໂອນເປັນຂອງເອກະຊົນ- ວິສາຫະກິດຂະໜາດໃຫຍ່ ແມ່ນຖືກວາງໂຄງສ້າງໃໝ່ ແຕ່ຍັງຄົງເປັນພາກສ່ວນຂອງລັດ ຫຼື ປະວາງເປັນບາງສ່ວນເທົ່ານັ້ນ; ນອກຈາກນີ້ (ii) ກໍລະນີສ່ວນຫຼາຍແມ່ນພົວພັນເຖິງສັນຍາເຊົ່າ ຫຼື ຂໍ້ຕົກລົງສັນຍາຂອງກຳມະກອນຫຼາຍກວ່າຂາຍໃຫ້ພາກສ່ວນເອກະຊົນໝົດ. ຄວາມຕ້ອງການຂອງລັດຖະບານໄດ້ສະທ້ອນອອກມາໃຫ້ເຫັນໃນຂໍ້ຕົກລົງດັ່ງນີ້: (i)ຂາດເຕັກນິກວິຊາການໃນການຕີລາຄາຊັບສິນ ແລະ ໜີ້ສິນຂອງບັນດາ ວິສາຫະກິດຕ່າງໆ; ແຕ່ສ່ວນຫຼາຍ (ii) ຕ້ອງການຮັກສາຄວາມທົດຍືດໃນຂະບວນການໂອນສິດຈາກລັດມາເປັນຂອງເອກະຊົນ. ການປະຕິຮູບແບບຊ້າໆ ຂອງວິສາຫະກິດລັດໄດ້ກາຍມາເປັນ ສາຍເຫດໃຫຍ່ຂອງບັນຫາດ້ານໂຄງສ້າງໃນປີຕໍ່ມາ. ຕໍ່ມາວິສາຫະກິດລັດຈຶ່ງຮັບຜິດຊອບຕໍ່ການຂະຫຍາຍຕົວຂອງໜີ້ບໍ່ອອກຜົນທີ່ເກີດຂຶ້ນ ຈາກພາກສ່ວນທະນາຄານ, ສະນັ້ນ ມັນຈຶ່ງເຮັດໃຫ້ການພັດທະນາຂອງພາກສ່ວນເອກະຊົນລ່າຊ້າລົງ ເພາະວ່າມັນເປັນກົນໄກສຳລັບການຂະຫຍາຍຕົວທີ່ໄວ ແລະ ຍືນຍົງ ແລະ ເປັນອຸປະສັກຕໍ່ການປະຕິຮູບດ້ານການເງິນນຳອີກ.

## ການປະຕິຮູບທາງດ້ານການເງິນ

ສປປລາວ ໄດ້ເລີ່ມມີຄວາມກ້າວໜ້າໃນດ້ານການສ້າງລະບົບທະນາຄານ ທີ່ມີການເຊື່ອມຕໍ່ກັນລະຫວ່າງສອງຝ່າຍ, ການປະຕິຮູບທາງດ້ານໂຄງສ້າງນັ້ນ ແມ່ນເຄື່ອງມືທີ່ສຳຄັນຂອງຜົນສຳເລັດທາງດ້ານນະໂຍບາຍການເງິນໃນໄລຍະຕົ້ນທີ່ມີການຕັດຮອນໄພເງິນເຟີ້. ສະຖາບັນການເງິນຂອງສາກົນໄດ້ໃຫ້ການສະໜັບສະໜູນ ການປະຕິຮູບລະບົບທະນາຄານ ໂດຍຜ່ານໂຄງການປະກອບທຶນຄືນໃໝ່ໃນລະຫວ່າງປີ 1993-95, ຊ່ວຍໃຫ້ທະນາຄານການຄ້າລັດກຳຈັດບັນຫາໜີ້ບໍ່ອອກຜົນ. ເຖິງແນວໃດກໍ່ຕາມ, ການຂາດການປັບປຸງທາງດ້ານການຄຸ້ມຄອງພາຍໃນ ໃນທະນາຄານເຫຼົ່ານີ້, ແລະ ນະໂຍບາຍສືບຕໍ່ໃຫ້ກູ້ຢືມ ພາຍໃຕ້ທ່າແຮງຂອງລັດຖະບານຫຼາຍກວ່າການໃຫ້ກູ້ຢືມທີ່ຕັ້ງຢູ່ບົນພື້ນຖານການຄ້າແບບມີຜົນກຳໄລ, ສິ່ງຜົນເຮັດໃຫ້ກາຍເປັນຄວາມພະຍາຍາມທີ່ໄຮ້ປະໂຫຍດ. ຜົນກໍ່ຄືໃນທຸກມື້ນີ້, ພາກສ່ວນທະນາຄານກຳລັງປະເຊີນກັບບັນຫາດຽວກັນ ທີ່ເກີດຂຶ້ນຄືກັນກັບໃນປີ 1993-94, ໂດຍປະກອບມີເຄິ່ງໜຶ່ງຂອງຫຼັກຊັບເງິນກູ້ທີ່ໃຊ້ໃນການລົງທຶນ.

## ການສ້າງສະຖາບັນ ແລະ ການປະຕິຮູບລະບົບ

ຄວາມກ້າວໜ້າທີ່ສຳຄັນໃນຂອບເຂດຂອງສະຖາບັນໄດ້ນຳໄປສູ່ການປະຕິຮູບທາງດ້ານເສດຖະກິດທີ່ປະສົບຜົນສຳເລັດແຕ່ປີ 1990-94:

- ຮັບຮອງເອົາລັດຖະທຳມະນູນໃໝ່ໃນທ້າຍປີ 1991 ແລະຂໍ້ບັນຍັດກົດໝາຍທີ່ສຳຄັນອື່ນໆອີກ.

- ຈັດຕັ້ງກຸ່ມລັດຖະມົນຕີສາກົນຂຶ້ນ, ໂດຍມີການປະສານງານທີ່ມີປະສິດທິພາບ ແລະ ພື້ນຖານທີ່ເຂັ້ມແຂງຈາກອຳນາດການປົກຄອງຂັ້ນສູງ, ໃນການຕິດຕາມເບິ່ງການຄຸ້ມຄອງເສດຖະກິດມະຫາພາກ.
- ສ້າງຕັ້ງຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ ແລະ ລິເລີ່ມຄວາມພະຍາຍາມເຄື່ອນໄຫວເພື່ອສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດ (FDI).
- ລວມສູນຄຸ້ມຄອງການຊ່ວຍເຫຼືອຈາກຕ່າງປະເທດ, ການວາງແຜນລົງທຶນຂອງມວນຊົນ ແລະ ການບໍລິຫານຄ່າໃຊ້ຈ່າຍເງິນທຶນຂອງລັດ.

## ຄວາມຫຍຸ້ງຍາກສັບສົນທາງດ້ານການເງິນທີ່ເກີດຂຶ້ນຊ່ວງ ປີ 1998-2000

ຫຼັງຈາກໄລຍະສະເຖຍລະພາບທາງດ້ານເສດຖະກິດມະຫາພາກ ໃນລະຫວ່າງປີ 1990 ຫາ1994, ເສດຖະກິດຂອງລາວກໍ່ໄດ້ປະສົບກັບການຂາດງົບດຸນທາງດ້ານການເງິນທີ່ຮ້າຍແຮງໃນເຄິ່ງທີ່ສອງຂອງຊຸມປີເກົ້າສິບ, ທີ່ສັງເກດເຫັນໄດ້ຢ່າງຊັດເຈນ ກໍ່ຄືພາຍຫຼັງທີ່ມີຜົນກະທົບຢ່າງຮຸນແຮງ ຈາກວິກິດການທາງດ້ານການເງິນໃນພາກພື້ນອາຊີປີ 1998.

ຍ້ອນວ່າການຂາດດຸນທາງບັນຊີຕາມກະແສພາຍນອກໄດ້ແຜ່ວົງກວ້າງ; ລັດຖະບານບໍ່ສາມາດຈ່າຍເງິນເດືອນໃຫ້ພະນັກງານລັດຖະກອນ ໄດ້ຫຼາຍເດືອນຕິດຕໍ່ກັນ ແລະ ກໍ່ໃຫ້ເກີດມີການຄ້າງລາຍຈ່າຍໃຫ້ພາກສ່ວນເອກກະຊົນ, ນຳມາຊຶ່ງຜົນກະທົບຕໍ່ການຈໍລະຈອນເງິນສົດສຳລັບດຳເນີນກິດຈະການ, ພາກສ່ວນທະນາຄານເອງກໍ່ລົ້ມລະລາຍຍ້ອນປະລິມານໜີ້ບໍ່ອອກຜົນທີ່ມີສູງ, ເຮັດໃຫ້ຂາດຄວາມເຊື່ອໝັ້ນຕໍ່ຄ່າເງິນກີບຢ່າງສິ້ນເຊີງ.

ນະໂຍບາຍສິນເຊື່ອໄດ້ຢຸດພັກຊົ່ວຄາວໃນຕົ້ນປີ 1995, ແລະ ກົດລະບຽບດ້ານການເງິນໄດ້ຖືກປະລະໄປໃນປີຕໍ່ມາ. ການຂາດດຸນທາງດ້ານງົບປະມານທີ່ໜັກໜ່ວງທີ່ເກີດຂຶ້ນພາຍຫຼັງປີ1997 ໄດ້ເປັນສັນຍານບອກຊີ້ໃຫ້ເຫັນການຂາດດຸນການເງິນຈາກພາກສ່ວນທະນາຄານ, ຊຶ່ງມັນໄດ້ນຳໄປສູ່ການຈໍລະຈອນເງິນສົດຄືນໃໝ່ ທີ່ຂະຫຍາຍວົງກວ້າງອອກຢ່າງໄວວາໃນເສດຖະກິດ ແລະ ເປັນແຮງຍູ້ໜູນເຮັດໃຫ້ເກີດໄພເງິນເຟີ້ຂຶ້ນຢ່າງຮຸນແຮງ, ຊຶ່ງເພີ່ມຂຶ້ນເປັນສາມທົບໃນໄລຍະກ່ອນປີ 1999 ແລະ ຖືວ່າມັນໄດ້ກາຍເປັນປະສົບການທີ່ປະຊາຊົນລາວຫຼາຍຄົນຊິນເຄີຍກັບມັນໄປແລ້ວ.

ທີ່ສັງເກດເຫັນຊັດເຈນກວ່າໝູ່ແມ່ນ, ການຫຼຸດຄ່າເງິນກີບລົງໂດຍທີ່ບໍ່ມີການຄິດຕຶກຕອງໃຫ້ດີໄດ້ຖືກຮັບຮອງເອົາຕັ້ງແຕ່ປີ 1995 ເປັນຕົ້ນມາ, ບໍ່ມີການຮຽກຮ້ອງການສະໜັບສະໜູນ ທາງດ້ານການເງິນຢ່າງຈິງຈັງ ແລະ ນະໂຍບາຍດ້ານການເງິນ ທີ່ເຄີຍຈັດຕັ້ງປະຕິບັດໄດ້ຜົນສຳເລັດມາແລ້ວໃນໄລຍະປີ 1988-90. ສິ່ງນີ້ໄດ້ກາຍເປັນສາຍເຫດໃຫ້ເກີດມີກະແສຟອງ ການຫຼຸດຄ່າຫົວໜ່ວຍເງິນຕາແຫ່ງຊາດພາຍໃຕ້ການເຊື່ອມຕໍ່ທີ່ສັບຊ້ອນຂອງວົງຈອນ"ການຂາດດຸນງົບປະມານ- ການຈໍລະຈອນເງິນສົດຈາກທະນາຄານທີ່ຫຼາຍເກີນຂອບເຂດ-ພາວະເງິນເຟີ້-ການຫຼຸດຄ່າເງິນຕາ". ຄ່າຂອງເງິນກີບຕອນນີ້ແມ່ນ 10,800/ໂດລາ, ເມື່ອທຽບກັບອັດຕາແລກປ່ຽນໃນທົດສະວັດກ່ອນແມ່ນ 720/ໂດລາ.

ເຫດຜົນທີ່ພາໃຫ້ຂາດສະເຖຍລະພາບທາງດ້ານເສດຖະກິດແບບຊ້ຳຊາກຄືແນວນີ້ແມ່ນຍ້ອນນະໂຍບາຍເສດຖະກິດມະຫາພາກຍັງມີຈຸດອ່ອນ ແລະ ການລ່າຊ້າຂອງການປະຕິຮູບໂຄງສ້າງ, ຊຶ່ງພວກເຮົາຈະໄດ້ປຶກສາຫາລືກັນໃນບົດລຸ່ມນີ້.

## ສາຍເຫດຂອງບັນຫາ: ຂາດລະບຽບການດ້ານການເງິນ

ການບໍລິຫານຄຸ້ມຄອງລາຍຮັບທີ່ຍັງອ່ອນນັ້ນ ແມ່ນບັນຫາໃຫຍ່ທີ່ເກີດຂຶ້ນຊ້ຳຊາກໃນເສດຖະກິດຂອງລາວ, ເຖິງແມ່ນວ່າຈະໄດ້ຮັບການຊ່ວຍເຫຼືອ ທາງດ້ານເຕັກນິກຈາກສະຖາບັນການເງິນ ສາກົນກໍ່ຕາມ. ອັດຕາສ່ວນຂອງລາຍຮັບ/ຍອດລວມຜະລິດຕະພັນພາຍໃນລວມມີ 11,2%ໃນລະຫວ່າງປີ 1998-2000, ຢຸດຢູ່ໃນລະດັບດຽວກັນກັບໄລຍປີ 1992-93. ໃນຂະນະດຽວກັນລາຍຈ່າຍ ຂອງລັດຖະບານທັງໝົດເພີ່ມຂຶ້ນປະມານ 21,9% ຂອງຍອດລວມຜະລິດຕະພັນພາຍໃນ, ເມື່ອສົມທຽບກັບ 19,4% ໃນປີ 1992-93. ການປະຕິຮູບທີ່ໄປໆຢຸດໆ ນັ້ນບໍ່ໄດ້ຊ່ວຍຫຍັງໃນຂະບວນການຫັນປ່ຽນເລີຍ, ໂດຍສະເພາະແລ້ວແມ່ນການກະຈາຍອຳນາດ ທາງດ້ານການເງິນຈາກສູນກາງສູ່ທ້ອງຖິ່ນ, ຊຶ່ງມັນໄດ້ເຮັດໃຫ້ການເກັບລາຍຮັບຂອງລັດຖະບານໃນຂັ້ນສູນກາງມີຈຸດອ່ອນ ແລະ ເປັນອຸປະສັກຕໍ່ການໂອນງົບປະມານຈາກແຂວງທີ່ມີເຫຼືອໄປແຂວງທີ່ຂາດດຸນ.

ພ້ອມດຽວກັນນີ້ການປະຕິຮູບທີ່ຊັກຊ້າຂອງພາກສ່ວນວິສາຫະກິດລັດ, ຍັງສືບຕໍ່ເປັນແຮງກົດດັນທີ່ຮຸນແຮງໃຫ້ແກ່ນະໂຍບາຍດ້ານການເງິນ ໂດຍຜ່ານຄວາມຕ້ອງການແບບຄົງທີ່ສຳລັບການຂາດດຸນດ້ານການເງິນຂອງພາກລັດ. ທີ່ສັງເກດເຫັນໄດ້ຢ່າງຈະແຈ້ງກໍ່ຄືຄວາມອ່ອນແອທາງດ້ານການເງິນຂອງວິສາຫະກິດລັດ ແລະ ຜົນທີ່ຕາມມາຈາກໜີ້ບໍ່ອອກຜົນທີ່ເປັນແຮງກົດດັນຕໍ່ທະນາຄານການຄ້າຂອງລັດ.

## ການສູ້ຊົນບັນຫາຂອງພາກສ່ວນທະນາຄານ

ບັນຫາຕ່າງໆຂອງພາກສ່ວນທະນາຄານໃນລາວແມ່ນມີສາຍເຫດຕົ້ນຕໍມາຈາກສາມປັດໄຈໃຫຍ່ຄື:

- ໜີ້ບໍ່ອອກຜົນທີ່ມີຫຼາຍ, ຊຶ່ງສາຍເຫດຕົ້ນຕໍແມ່ນມາຈາກ ນະໂຍບາຍການກູ້ຢືມ ໜ້າທີ່ຂອງລັດຖະບານ
- ການເສຍດຸນອັດຕາແລກປ່ຽນກັບຕ່າງປະເທດທີ່ມີສູງ, ສ່ວນຫຼາຍແມ່ນຍ້ອນວິກິດການທາງດ້ານເສດຖະກິດໃນໄລຍະປີ 1997-99, ບວກກັບການຂາດສະເຖຍລະພາບ ທາງດ້ານເສດຖະກິດມະຫາພາກຂອງ ສປປ ລາວ
- ໂຄງສ້າງຂອງພາກສ່ວນທະນາຄານລາວທີ່ມີມູນຄ່າສູງ, ສ່ວນຫຼາຍແມ່ນຍ້ອນອົງກອນ ແລະ ການຄຸ້ມຄອງບໍ່ມີປະສິດທິພາບ

## ການລວມບັນຫາເລື່ອງການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ (ODA), ລັກສະນະ ແລະ ຂອບເຂດຂອງ"ຈຸດອ່ອນ" ໃນ ສປປ ລາວ

ສປປ ລາວແມ່ນຂຶ້ນກັບການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ (ODA) ຢ່າງຕາຍຕົວ, 70% ຂອງການລົງທຶນໃນພາກສ່ວນຂອງລັດແມ່ນລ້ວນແລ້ວແຕ່ທຶນຊ່ວຍເຫຼືອ, ຊຶ່ງອາດຈະຖືໄດ້ວ່າເປັນເສດຖະກິດທີ່ຫັນປ່ຽນທີ່ມີລັກສະນະສະເພາະຂອງ ສປປ ລາວ. ໃນຊຸມປີທີ່ຜ່ານມານີ້, ມີສອງບັນຫາລວມກັນທີ່ການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ (ODA) ປະສົບໃນລະຫວ່າງຂະບວນການກະຈາຍອອກໄປ ໃນວຽກງານການຄຸ້ມຄອງການ ຊ່ວຍເຫຼືອລະຫວ່າງບັນດາກະຊວງຕ່າງໆ ແລະ ຄວາມສາມາດໃນການຮັບເອົາທີ່ຕ່ຳ.

ມີຄວາມຈຳເປັນອັນຮີບດ່ວນ ທີ່ລັດຖະບານຈະຕ້ອງໄດ້ປັບປຸງການຄຸ້ມຄອງການຊ່ວຍເຫຼືອຈາກພາຍນອກ ແລະ ປະສານງານກັບຜູ້ທີ່ໃຫ້ການຊ່ວຍເຫຼືອ, ເພື່ອຮັກສາພາບພົດທີ່ເຂັ້ມແຂງທັງໃນດ້ານລາຍຮັບແຫ່ງຊາດ ແລະ ການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ(ODA) ໃຫ້ດີກວ່າເກົ່າ. ຊຶ່ງຈະເປັນການປັບປຸງການປະສານງານດ້ານການລົງທຶນຂອງພາກລັດ, ເຊັ່ນດຽວກັບລາຍຈ່າຍທີ່ຊ້ຳຊາກ.

ເມື່ອເວົ້າເຖິງ"ຄວາມສາມາດໃນການຮັບເອົາ", ມັນມີຄວາມແຕກຕ່າງກັນລະຫວ່າງຜູ້ໃຫ້ການຊ່ວຍເຫຼືອ ແລະ ລັດຖະບານໃນມຸມມອງຂອງລັກສະນະ ແລະ ຂອບເຂດຂອງບັນຫາບຸກຄະລາກອນທີ່ລາວກຳລັງປະເຊີນ. ຢ່າງທີ່ສອງຝ່າຍຮັບຮູ້ນຳກັນເຖິງບັນຫາການຂາດເຂີນບຸກຄະລາກອນ, ບໍ່ມີຄວາມເຂົ້າໃຈກັນລະຫວ່າງສອງຝ່າຍໃນດ້ານຂອງປະລິມານ ແລະ ຄວາມຮີບຮ້ອນທີ່ຂາດເຂີນ. ຝ່າຍທີ່ໃຫ້ການຊ່ວຍເຫຼືອ ເຫັນວ່າມີຄວາມຂາດເຂີນໃນດ້ານປະລິມານ, ສ່ວນລັດຖະບານເຫັນວ່າບັນຫາເລື່ອງບຸກຄະລາກອນແມ່ນຖືວ່າເປັນວຽກງານປະຈຳ ຂອງການມອບໝາຍວຽກງານ ໃຫ້ແກ່ຜູ້ທີ່ເໝາະສົມຕາມໜ້າທີ່ ທີ່ເຫັນວ່າເໝາະສົມໂດຍບໍ່ຕ້ອງພິຈາລະນາເຖິງວຸດທິການສຶກສາທີ່ແທດເໝາະ.

---

*ມີຄວາມຈຳເປັນອັນຮີບດ່ວນທີ່ລັດຖະບານຈະຕ້ອງໄດ້ປັບປຸງການຄຸ້ມຄອງການຊ່ວຍເຫຼືອຈາກພາຍນອກ ແລະ ປະສານງານກັບຜູ້ທີ່ໃຫ້ການຊ່ວຍເຫຼືອ, ເພື່ອຄວບຄຸມລາຍຮັບແຫ່ງຊາດ ແລະ ການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ(ODA) ໃຫ້ດີກວ່າເກົ່າ.*

---

## ຄວາມຈຳເປັນໃນການຟື້ນຟູຍຸດທະສາດເພື່ອພັດທະນາພາກສ່ວນເອກະຊົນ ແລະ ການກັບຄືນມາລົງທຶນໂດຍກົງຂອງຕ່າງປະເທດ (FDI)

ປະເທດຊາດໄດ້ປະສົບກັບການຢຸດຊະງັກໃນການລົງທຶນຂອງພາກເອກະຊົນ, ໂດຍສະເພາະແມ່ນການລົງທຶນຄັ້ງໃໝ່ໂດຍກົງຈາກຕ່າງປະເທດ, ການລົງທຶນໂດຍກົງຈາກຕ່າງປະເທດ/ຍອດລວມຜະລິດຕະພັນພາຍໃນໄດ້ມີອັດຕາສ່ວນຫຼຸດລົງຈາກ 5%ໃນປີ 1994-95 ມາເປັນ 2% ໃນປີ 2003, ມີຄວາມຈຳເປັນທີ່ລັດຖະບານ ຈະຕ້ອງໄດ້ເບິ່ງຄືນໃໝ່ໃນເລື່ອງ: ທຸລະກິດເອກະຊົນຫຼາຍແຫ່ງພາກັນຈົ່ມຕຳໜິເລື່ອງກົດລະບຽບຂອງລາດຊະການ ແລະ ການສໍ້ລາດບັງຫຼວງທີ່ຮຽກຮ້ອງໃຫ້ມີໃບອະນຸຍາດ ແລະ ດຳເນີນກິດຈະການໃຫ້ມີຜົນກຳໄລ.

ໃນຈຸດນີ້ຈຳເປັນຕ້ອງໄດ້ສ້າງເງື່ອນໄຂ ທາງດ້ານທຸລະກິດເພື່ອການພັດທະນາພາກສ່ວນເອກະຊົນ. ທ່າມກາງບັນຫາຕ່າງໆກໍ່ໄດ້ມີການສ້າງ"ກົດໝາຍວິສາຫະກິດ"ຂຶ້ນມາ, ໂດຍປະຕິບັດຕາມຜົນງານຂອງຫວຽດນາມທີ່ປະສົບຜົນສຳເລັດເມື່ອບໍ່ດົນມານີ້, ຊຶ່ງເປັນການກຳນົດການສ້າງ ແລະ ດຳເນີນກິດຈະການວິສາຫະກິດການຄ້າ, ແນໃສ່ເພື່ອເຮັດໃຫ້ຂັ້ນຕອນການຈົດທະບຽນ ແລະ ສົ່ງເສີມໃຫ້ມີການສະໜອງຂໍ້ມູນທີ່ວ່ອງໄວ ຂອງບໍລິສັດເອກກະຊົນພາຍໃນ ແລະ ໃຫ້ການລົງທຶນ ໂດຍກົງຈາກຕ່າງປະເທດ ກັບຄືນມາລົງທຶນໃໝ່ໄດ້ໄວ. ທີ່ສັງເກດເຫັນໄດ້ຊັດເຈນກໍ່ຄື, ການພັດທະນາພາກເອ

ກະຊີນອາດຈະຊ່ວຍສົ່ງເສີມໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດໄດ້ມີສ່ວນຮ່ວມໃນການປະກອບສ່ວນຊຸກຍູ້ໃຫ້ປະເທດຊາດລາວເຮົາ ມີການຂະຫຍາຍຕົວ ແລະ ຫຼຸດຜ່ອນຄວາມທຸກຈົນດ້ວຍການສ້າງວຽກເຮັດງານທຳໃຫ້ມີຫຼາຍຂຶ້ນ.

## ການເພີ່ມເສລີພາບດ້ານການຄ້າ

ຕາມທີ່ໄດ້ກ່າວມາຂ້າງເທິງນັ້ນ, ການໃຫ້ເສລີພາບທາງດ້ານການຄ້າໃຫ້ມີຫຼາຍຂຶ້ນດ້ວຍການກຳຈັດອຸປະສັກທາງດ້ານການຄ້ານັ້ນ ຈະເປັນການກະກຽມໃຫ້ເສດຖະກິດຂອງລາວ ໄດ້ມີການຮ່ວມມືກັບເສດຖະກິດພາຍໃນຂົງເຂດ ແລະ ທົ່ວທຸກມູມໂລກໃນທົດສະວັດໜ້ານີ້.

ສປປ ລາວ ຫາກໍ່ເປີດກວ້າງສູ່ເສດຖະກິດໂລກ. ໃນເມື່ອສອງສາມປີບໍ່ດົນມານີ້, ເຖິງແມ່ນວ່າລັດຖະບານຈະມີບາດກ້າວໃໝ່ຕໍ່ເສລີພາບ ທາງດ້ານການຄ້າກໍ່ຕາມ, ແຕ່ການຄຸ້ມຄອງການຄ້າຂອງປະເທດຍັງບໍ່ທັນມີຈຸດຢືນທີ່ຊັດເຈນ, ລະດັບການນຳເຂົ້າສິນຄ້າຍັງມີສູງ ແລະ ການກະຈາຍໂຄງສ້າງພາສີອາກອນແມ່ນມີສູງ. ເພື່ອແກ້ໄຂບັນຫາຄວາມທ້າທາຍນີ້ຮ່ວມກັນ, ສປປ ລາວ ຕ້ອງຮັບຮອງເອົານະໂຍບາຍການຄ້າ ໂດຍຕົ້ນຕໍແມ່ນແນໃສ່ການເຊື່ອມຊຶມເອົາກົດລະບຽບພາສີອາກອນ ແລະ ກົດລະບຽບເປັນກາງ ພ້ອມທັງລົບລ້າງມາດຕາການກີດກັ້ນການນຳເຂົ້າທີ່ບໍ່ແມ່ນອັດຕາພາສີ (NTBs). ມາດຕາການກີດກັ້ນການນຳເຂົ້າທີ່ບໍ່ແມ່ນ ອັດຕາພາສີສາມແບບທີ່ຍັງຄົງມີຢູ່ພາຍຫຼັງການປະຕິຮູບເສດຖະກິດມາເປັນເວລາ ສອງທົດສະວັດພາຍໃຕ້ກົນໄກເສດຖະກິດແບບໃໝ່; ລະບົບການຈັດສັນແບບພິເສດລະຫວ່າງລັດຖະບານກັບທຸລະກິດເອກະຊົນທີ່ກ່ຽວຂ້ອງກັບການຈ່າຍງົບປະມານ ແລະ ການເຄື່ອນຍ້າຍການຄຸ້ມຄອງ ການຄ້າແບບຜູກຂາດຂ້າມແດນສູ່ປະເທດໄທ.

## ໄລຍະຟື້ນຟູໃໝ່ບາງສ່ວນແຕ່ປີ 2001-2003: ຕໍ່ໄປພວກເຮົາຈະເຮັດແນວໃດ?

ຫຼັງຈາກປະສົບກັບຄວາມຫຍຸ້ງຍາກທາງດ້ານການເງິນລະຫວ່າງປີ 1998-2000 ສ່ວນໜຶ່ງແມ່ນຍ້ອນວິກິດການໃນພາກພື້ນອາຊີ ແລະ ສ່ວນໜຶ່ງກໍ່ຍ້ອນຂາດນະໂຍບາຍທາງດ້ານສະເຖຍລະພາບ, ລັດຖະບານລາວຈຶ່ງໄດ້ຮັບຮອງເອົາແຜນການຟື້ນຟູເສດຖະກິດຫ້າປີ, ທີ່ກວມເອົາປີ 2001-2005, ແນໃສ່ສາມຈຸດປະສົງຕົ້ນຕໍຄື: (i) ເສດຖະກິດເຂັ້ມແຂງ ແລະ ຍືນຍົງ ມີການຂະຫຍາຍຕົວໃນອັດຕາ 7% ຕໍ່ປີ; (ii) ການປະຕິຮູບເສດຖະກິດລາວທີ່ມີໂຄງສ້າງແບບຍືນຍົງ; ແລະ (iii) ສ້າງຄວາມເຂັ້ມແຂງໃຫ້ໂຄງລ່າງພື້ນຖານທາງເສດຖະກິດ ແລະ ສັງຄົມ.

---

*ການຄຸ້ມຄອງການຄ້າຂອງປະເທດຍັງບໍ່ທັນມີຈຸດຢືນທີ່ຊັດເຈນ, ລະດັບການນຳເຂົ້າສິນຄ້າຍັງມີສູງ, ແລະ ການກະຈາຍໂຄງສ້າງພາສີອາກອນແມ່ນມີສູງ.*

---

ໃນນັ້ນ, ການຂະຫຍາຍຕົວທາງດ້ານເສດຖະກິດໂດຍສະເລ່ຍແມ່ນບັນລຸໄດ້ 5.9% ຕໍ່ປີໃນລະຫວ່າງສາມປີທໍາອິດ, ຫຼຸດເປົ້າໝາຍແຜນການ 1.1%, ແຕ່ບັນລຸໄດ້ການຂະຫຍາຍຕົວໃນລະດັບດຽວກັນຕາມບົດບັນທຶກທີ່ນໍາໄປກ່ອນຫ້າປີ. ມີໂຄງສ້າງການປະຕິຮູບດ້ານເສດຖະກິດທີ່ດີຊຶ່ງຕ້ອງການໃຫ້ສ່ວນແບ່ງຂອງຍອດລວມຜະລິດຕະພັນພາຍໃນມີການຂະຫຍາຍຕົວທັງພາກສ່ວນການຜະລິດ ແລະ ບໍລິການ, ໂດຍເພີ່ມຂຶ້ນຈາກ 24.2% ແລະ 20.2% ໃນປີ 2000 ມາເປັນ 26.5 ແລະ 23.3% ໃນປີ 2003 ຕາມລໍາດັບ; ໃນຂະນະທີ່ພາກສ່ວນກະສິກໍາຊໍ້າພັດຫຼຸດລົງຈາກ 55.6% ຂອງສ່ວນແບ່ງຍອດລວມຜະລິດຕະພັນພາຍໃນ ໃນປີ 2000 ມາເປັນ 50.2% ໃນປີ 2003. ນອກຈາກນີ້, ລັດຖະບານຍັງປະສົບຜົນສໍາເລັດໃນການປັບປຸງໂຄງລ່າງພື້ນຖານທາງດ້ານເສດຖະກິດ, ສັງເກດເຫັນໄດ້ວ່າມີການລົງທຶນຢ່າງຫຼວງຫຼາຍໃນວຽກງານຕະໜ່າງທາງຫຼວງແຫ່ງຊາດ.

ໄພເງິນເຟີ້ກໍ່ຖືກດຶງລົງມາຈາກສາມທົບໃນປີ 1999 ແຕ່ຍັງຄົງຢູ່ໃນລະດັບສອງທົບ ແລະ ເໜືອລະດັບເປົ້າໝາຍໃນປີ 2002-2003. ນະໂຍບາຍດ້ານການເງິນ, ໂດຍສະເພາະນະໂຍບາຍງົບປະມານ, ຍັງໄດ້ຮັບຜົນກະທົບທີ່ຮຸນແຮງຈາກແບບທີ່ໄປໆຢຸດໆ ແລະ ຍັງບໍ່ທັນພຽງພໍເທື່ອ.

## ຄວາມຈໍາເປັນໃນການຟື້ນຟູສະເຖຍລະພາບດ້ານເສດຖະກິດມະຫາພາກ

ເມື່ອສຶກສາເບິ່ງຜົນສໍາເລັດທີ່ຜ່ານມາໃນລະຫວ່າງປີ 1989-1994, ເຫັນວ່າລັດຖະບານຈໍາເປັນຈະຕ້ອງໄດ້ສ້າງເງື່ອນໄຂເສດຖະກິດມະຫາພາກທີ່ມີສະເຖຍລະພາບຄືນໃໝ່ ເພື່ອສືບຕໍ່ພັດທະນາປະເທດຊາດໂດຍແນໃສ່ເສັ້ນທາງການຂະຫຍາຍຕົວແບບຍືນຍົງ ແລະ ການຫຼຸດຜ່ອນຄວາມທຸກຈົນ, ໂດຍສະເພາະແລ້ວ, ຄະນະກໍາມະການກໍານົດວາລະກອງປະຊຸມນະໂຍບາຍ ເສດຖະກິດຂັ້ນສູງຄວນຈະໄດ້ຮັບການແຕ່ງຕັ້ງຢ່າງຮີບດ່ວນໃນລະດັບສູງສຸດເພື່ອສ້າງລະບຽບວາລະກອງປະຊຸມເສດຖະກິດແຫ່ງຊາດ ແລະ ຕິດຕາມການຈັດຕັ້ງປະຕິບັດເປັນລາຍເດືອນ.

- ຕົວບົ່ງຊີ້ຜົນສໍາເລັດທີ່ສໍາຄັນຈະເປັນການຟື້ນຟູຄວາມໝັ້ນໃຈໃນຄ່າຂອງເງິນກີບໃນອີກ ປີໜຶ່ງຫຼືສອງປີຕໍ່ໜ້າ.
- ໜ້າທີ່ຕົ້ນຕໍທີ່ສໍາຄັນໃນການປັບປຸງເງື່ອນໄຂດ້ານການເງິນຂອງປະເທດຊາດແມ່ນຟື້ນຟູກົດລະບຽບງົບປະມານໃນພາກສ່ວນຂອງລັດ, ດ້ວຍການຫຼຸດຜ່ອນການຂາດດຸນດ້ານງົບປະມານໂດຍການເພີ່ມລາຍຮັບ ແລະ ລວມເອົາມາດຕະການຄ່າໃຊ້ຈ່າຍເຂັ້ມງວດ.
- "ຂໍ້ຈໍາກັດດ້ານງົບປະມານ"ຈໍາເປັນຕ້ອງໄດ້ຮັບການຟື້ນຟູໃນດ້ານການດໍາເນີນກິດຈະການຂອງວິສາຫະກິດລັດ ແລະ ການໃຫ້ສິນເຊື່ອແກ່ວິສາຫະກິດທີ່ຂາດທຶນຈະຕ້ອງໄດ້ລະງັບໄວ້ຢ່າງເດັດຂາດ. ມີຄວາມຈໍາເປັນຕາຍຕົວທີ່ຈະຕ້ອງໄດ້ເພີ່ມທະວີການປະຕິຮູບ ແລະ ໂອນວິສາຫະກິດລັດໄປເປັນຂອງເອກະຊົນ.
- ເພື່ອແກ້ໄຂບັນຫາຂອງພາກສ່ວນທະນາຄານ, ນະໂຍບາຍສໍາຄັນແມ່ນຟື້ນຟູກົດລະບຽບດ້ານການເງິນໃນພາກສ່ວນຂອງລັດຕາມທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ, ແລະ ການວາງໂຄງສ້າງທະນາຄານການຄ້າຂອງລັດຄືນໃໝ່. ມີຄວາມຈໍາເປັນຢ່າງຮີບດ່ວນຕ້ອງໄດ້ໃຫ້ອິດສະຫຼະພາບແກ່ທະນາຄານເຫຼົ່ານີ້ຈາກນະໂຍບາຍການກູ້ຢືມ ແລະ ອະນຸຍາດໃຫ້ເຂົາເຈົ້າປະຕິບັດ ຕາມທິດທາງທະນາຄານການຄ້າຢ່າງເຄັ່ງຄັດ. ໃນວຽກງານດັ່ງກ່າວນີ້, ສໍາຄັນກວ່າໝູ່ແມ່ນລັດຖະບານຕ້ອງສືບຕໍ່ປະຕິຮູບວິສາຫະກິດລັດເພື່ອຊຸກຍູ້ ໃຫ້ພາກສ່ວນທະນາຄານມີການປະຕິຮູບຄືນໃໝ່, ທີ່ສັງເກດເຫັນໄດ້ຢ່າງຊັດເຈນແມ່ນການຫຼຸດຜ່ອນໜີ້ບໍ່ອອກຜົນ(NPLs). ຍ້ອນວ່າເປັນຄວາມຈໍາເປັນພື້ນ

ຖານສຳລັບຄວາມພະຍາຍາມເພື່ອປະກອບທຶນຄືນໃໝ່, ທາງທະນາຄານເອງຈຳເປັນຕ້ອງໄດ້ຟື້ນຟູກິດລະບຽບການໃຫ້ສິນເຊື່ອ ແລະ ປັບປຸງການຄຸ້ມຄອງຂອງຕົນເພື່ອປ້ອງກັນ ການເຄື່ອນໄຫວກິດຈະການແບບຂາດທຶນ.

## ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES)

ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES) ແມ່ນແຜນງານນະໂຍບາຍຈຸດປະສົງທັງສອງຂອງປະເທດ ສຳລັບເສັ້ນທາງການຂະຫຍາຍຕົວແບບຍືນຍົງ ແລະ ການຫຼຸດຜ່ອນຄວາມທຸກຈົນ. ສິ່ງນັ້ນໄດ້ສະທ້ອນໃຫ້ເຫັນເປົ້າໝາຍການພັດທະນາປະເທດຊາດໄລຍະຍາວຂອງ ສປປ ລາວໃນລະຫວ່າງສອງທົດສະວັດທີ່ຜ່ານມາ, ຊຶ່ງປະກອບມີ:

- ເພື່ອຫັນປ່ຽນເສດຖະກິດຄຸ້ມຄອງຈາກສູນກາງມາເປັນເສດຖະກິດທີ່ອີງໃສ່ຕະຫຼາດເປັນພື້ນຖານເພື່ອໃຫ້ບັນລຸຜົນໃນການສ້າງປະສິດທິພາບທາງດ້ານເສດຖະກິດ
- ເພື່ອບັນລຸໄດ້ການພັດທະນາສັງຄົມ ແລະ ການຂະຫຍາຍຕົວດ້ານເສດຖະກິດທີ່ເປັນທຳ
- ເພື່ອປັບປຸງໃຫ້ທົ່ວສັງຄົມຢູ່ດີມີສຸກ ໃນຂະນະດຽວກັນກໍ່ຊຸກຍູ້ສົ່ງເສີມທາງດ້ານຈິດໃຈ ແລະ ຊີວິດວັດທະນະທຳ ແລະ ຄວາມເປັນເອກກະພາບຂອງປວງຊົນດາເຜົ່າດ້ວຍກັນ

ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES) ລວມມີໂຄງການລະດັບຊາດອັນສະເພາະຫຼາຍໂຄງການ. ພາກສ່ວນດັ່ງກ່າວຈະໄດ້ປຶກສາຫາລືເຖິງບາງປັດໄຈທີ່ສຳຄັນຂອງວາລະປະຊຸມໃນຂັ້ນຕໍ່ໄປ(ກອງທຶນການເງິນສາກົນ (IMF) 2003; ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP 2003).

## ການປະຕິຮູບວຽກງານບໍລິຫານຂອງພາກລັດເພື່ອການປົກຄອງທີ່ດີກວ່າເກົ່າ

ສິ່ງນີ້ຈະເປັນປັດໄຈທີ່ສຳຄັນໃນການປະຕິຮູບໃນອະນາຄົດ. ໃນບາງຊ່ວງ, ລັດຖະບານ ສປປ ລາວກໍ່ຍອມຮັບໃນບັນຫາດ້ານການປົກຄອງ, ໂດຍສະເພາະຢ່າງຍິ່ງແມ່ນບັນຫາເລື່ອງການສໍ້ລາດບັງຫຼວງ ແລະ ລະບຽບລາດຊະການທີ່ຫຼາຍເກີນຂອບເຂດ. ວຽກງານການປັບປຸງການປົກຄອງແມ່ນສ່ວນໜຶ່ງໃນແຜນງານນະໂຍບາຍຂອງລັດຖະບານ ເພາະວ່າຊັບພະຍາກອນຂອງລັດທີ່ມີຈຳກັດຈະຕ້ອງຖືກນຳໃຊ້ໃຫ້ມີປະສິດທິພາບ ເພື່ອບໍ່ໃຫ້ມັນກະທົບເຖິງຄວາມອາດສາມາດ ໃນການຊ່ວຍເຫຼືອຄົນທຸກຈົນ.

ໃນທົດສະວັດທີ່ຜ່ານມາ, ອຳນາດການປົກຄອງໄດ້ຮັບຜິບຊອບການປະຕິຮູບວຽກງານບໍລິຫານຂອງລັດໃນຫຼາຍລະດັບໂດຍແນໃສ່ປັບປຸງເສດຖະກິດລະບົບລັດຄຸ້ມຄອງ ມາເປັນເສດຖະກິດແບບອີງໃສ່ຕະຫຼາດເປັນພື້ນຖານ. ເຖິງແນວໃດກໍ່ຕາມ, ການບໍລິຫານຂອງພາກລັດກໍ່ຍັງຄົງໄດ້ຮັບຜົນກະທົບຈາກຄຳສັ່ງແບບດຽວກັນ, ການປະສານງານທີ່ບໍ່ມີປະສິດທິພາບ, ຂາດກົດເກນການຄຸ້ມຄອງ ແລະ ລະບຽບການ, ແລະ ເງິນເດືອນກໍ່ຕ່ຳຫຼາຍ. ຜົນທີ່ຕາມມາຄືການບໍລິການຂອງພາກລັດມີຈຸດອ່ອນຢ່າງຫຼວງຫຼາຍບໍ່ສາມາດປະຕິບັດງານໄດ້ຢ່າງມີປະສິດທິພາບ.

ບົດຮຽນທີ່ສຳຄັນທີ່ໄດ້ຮຽນຮູ້ໃນ ສປປ ລາວ ແມ່ນຄຳຖາມເລື່ອງຜົນກະທົບທີ່ຕາມມາຈາກການກະຈາຍອຳນາດຈາກສູນກາງສູ່ທ້ອງຖິ່ນ. ຄວາມຮີບຮ້ອນໃນການກະຈາຍ ອຳນາດຈາກສູນກາງສູ່ທ້ອງຖິ່ນນັ້ນ ມີຜົນກະທົບທີ່ເປັນອັນຕະລາຍຕໍ່ຄວາມສາມາດຂອງລັດຖະບານໃນຂັ້ນສູນກາງໃນການຄຸ້ມ

ຄອງຂະບວນການດັ່ງກ່າວນີ້, ໂດຍສະເພາະແລ້ວແມ່ນໃນດ້ານງົບປະມານ, ແລະ ການຮັບຜິດຊອບຕໍ່ແຜນການພັດທະນາແຫ່ງຊາດ ແລະ ການປະຕິຮູບ. ການເກັບລາຍຮັບເຂົ້າງົບປະມານທັງຈາກພາສີ ແລະ ອາກອນພາຍໃນທີ່ບໍ່ມີປະສິດທິພາບ ແມ່ນຕົວຢ່າງຂອງການປົກຄອງທີ່ບໍ່ມີປະສິດທິພາບ. ນອກຈາກນີ້ແລ້ວ, ການກະຈາຍອຳນາດດ້ານງົບປະມານ ຈາກສູນກາງສູ່ທ້ອງຖິ່ນທີ່ໄດ້ປະຕິບັດ ເມື່ອສາມປີທີ່ຜ່ານ ມານີ້ກໍ່ແມ່ນເຫດຜົນພື້ນຖານອັນທີສອງສຳລັບລາຍຮັບທີ່ເກັບໄດ້ບໍ່ພຽງພໍ ເພາະວ່າລັດຖະກອນໃນລະດັບແຂວງຍັງສາມາດທ້າທາຍຕໍ່ການ ຄວບຄຸມຂອງລັດຖະບານຂັ້ນສູນກາງ ໄດ້ດ້ວຍການປິດບັງ ລາຍຮັບດ້ານອາກອນທີ່ສຳຄັນ. ການກະຈາຍອຳນາດດ້ານງົບປະມານຈາກສູນກາງສູ່ທ້ອງຖິ່ນຈຳເປັນຕ້ອງໄດ້ຮັບການທົບທວນຄືນ ແລະ ພິຈາລະນາຢ່າງຮີບດ່ວນ.

## ປັບປຸງການຈັດຕັ້ງປະຕິບັດການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ (ODA)

ໂດຍອີງໃສ່ຄວາມຕ້ອງການການຊ່ວຍເຫຼືອໃນດ້ານການຄຸ້ມຄອງ ແລະ ຄວບຄຸມ, ທີ່ສຳຄັນແມ່ນການທົບທວນຄືນການປະຕິຮູບ ດ້ານສະຖາບັນໃນຂັ້ນຕໍ່ໄປ: ບົດບາດຂອງບັນດາກະຊວງຕ່າງໆທີ່ເໝາະສົມ(ການວາງແຜນ, ການເງິນ, ແລະ ກະຊວງການຕ່າງປະເທດທີ່ຮັບຜິດຊອບການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດ) ຈຳເປັນຕ້ອງໄດ້ຮັບການກຳນົດ ແລະ ປະສານງານ. ນອກຈາກນີ້ແລ້ວ, ສິ່ງສຳຄັນອີກຢ່າງໜຶ່ງແມ່ນຕ້ອງໄດ້ພິຈາລະນາເຖິງຄວາມຊັດເຈນ ແລະ ສາມາດອະທິບາຍໄດ້ເຖິງການຊ່ວຍເຫຼືອທີ່ໄດ້ຮັບ ເພາະວ່າປະກົດເຫັນ"ຜູ້ໃຫ້ການຊ່ວຍເຫຼືອຫຼຸດໜ້ອຍຖອຍລົງ" ອີງໃສ່ຄວາມຊັດເຈນໃນດ້ານການຊ່ວຍເຫຼືອຂອງປະເທດ.

---

*ພາກສ່ວນເອກະຊົນໃນ ສປປ ລາວ ອາດຈະກາຍເປັນ*
*ຜູ້ປະກອບສ່ວນສຳຄັນຕົ້ນຕໍໃນດ້ານຍອດລວມຜະລິດຕະພັນ*
*ພາຍໃນ (GDP) ເພື່ອການຂະຫຍາຍຕົວທີ່ຍືນຍົງ.*

---

ຄວາມຈຳເປັນໃນວິທີການແບບສ້າງສັນເພື່ອສົ່ງເສີມ ໃຫ້ມີການຈັດຕັ້ງປະຕິບັດການຊ່ວຍເຫຼືອດ້ານການພັດທະນາຈາກຕ່າງປະເທດນັ້ນແມ່ນບັນຫາທີ່ຮີບດ່ວນທີ່ສຸດສຳລັບປະເທດ ແລະ ກຸ່ມຜູ້ໃຫ້ການຊ່ວຍເຫຼືອ. ເຊັ່ນດຽວກັນ, ກຸ່ມຜູ້ໃຫ້ການຊ່ວຍເຫຼືອຕ້ອງໄດ້ກະກຽມເພື່ອກວດກາຄືນເບິ່ງວິທີການຊ່ວຍເຫຼືອດ້ານເຕັກນິກ ແລະ ເລີ່ມຄວາມພະຍາຍາມຮ່ວມກັນໃນດ້ານການເຄື່ອນໄຫວ ເພື່ອບັນລຸຜົນສຳເລັດ ໃນການຖ່າຍທອດຄວາມຮູ້ ແລະ ຄວາມຊຳນານທີ່ເປັນຈິງໃຫ້ແກ່ເພື່ອນຮ່ວມງານໃນທ້ອງຖິ່ນນັ້ນໆ.

## ຟື້ນຟູຍຸດທະສາດຄືນໃໝ່ເພື່ອການພັດທະນາພາກສ່ວນເອກະຊົນ

ໃນຂະນະທີ່ຈີນ ແລະ ຫວຽດນາມບັນລຸຜົນສຳເລັດເປັນທີ່ໜ້າພໍໃຈ ໃນຄວາມພະຍາຍາມເພື່ອຊຸກຍູ້ສົ່ງເສີມການພັດທະນາພາກສ່ວນເອກະຊົນ ເພາະວ່າມັນແມ່ນກົນຈັກເພື່ອ ການຂະຫຍາຍຕົວໃນໄລຍະສອງສາມປີທີ່ຜ່ານມາ, ພາກສ່ວນເອກະຊົນໃນ ສປປ ລາວ ຂ້ອນຂ້າງຈະງຽບເຫງົາ. ຍົກເວັ້ນພຽງວິສາຫະກິດລັດພຽງສອງສາມແຫ່ງເທົ່ານັ້ນ(ທີ່ໄດ້ຮັບເງິນອຸດໜູນ ແລະ ສິດທິພິເສດຈາກລັດຖະບານ), ບໍລິສັດທ່ອງທ່ຽວ ແລະ ການບໍລິການສະໜອງອາຫານຕົ້ນຕໍໃຫ້ຕົວເມືອງ ແລະ ການຈັດຕັ້ງສ້າງທຸ

ລະກິດຄືນໃໝ່, ຫົວໜ່ວຍທຸລະກິດເອກະຊົນຫຼາຍແຫ່ງປະສົບກັບວິກິດການໃນການດຳເນີນທຸລະກິດ, ການລົ້ມລະລາຍ ແລະ ການຫຼົ້ມຈົມໃນທຸລະກິດ. ຜົນຕາມມາກໍ່ຄືພາກສ່ວນການລົງທຶນ ໂດຍກົງຈາກຕ່າງປະເທດກໍ່ຫຼຸດໜ້ອຍຖອຍລົງໄປຕາມໆກັນ.

ເພື່ອແກ້ໄຂປັ່ງນແປງສະພາບດັ່ງກ່າວນີ້, ປະສົບການຈາກຈີນ ແລະ ຫວຽດນາມໄດ້ໃຫ້ບົດຮຽນອັນລ້ຳຄ່າແກ່ ສປປ ລາວ ເຮົາ. ພາກສ່ວນເອກະຊົນໃນ ສປປ ລາວ ອາດ ຈະກາຍເປັນຜູ້ປະກອບສ່ວນສຳຄັນ ຕົ້ນຕໍໃນດ້ານຍອດລວມຜະລິດຕະພັນພາຍໃນ (GDP) ເພື່ອການຂະຫຍາຍຕົວທີ່ຍືນຍົງ. ເພາະວ່າພາກສ່ວນດັ່ງກ່າວນີ້ໂດຍຕົ້ນຕໍແລ້ວແມ່ນປະກອບມີວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ, ມີຄວາມຈຳເປັນຢ່າງຍິ່ງ ທີ່ລັດຖະບານຈະຕ້ອງໄດ້ສົ່ງເສີມ ການຂະຫຍາຍຕົວຂອງວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍເຫຼົ່ານີ້ (SMEs) ຊຶ່ງຈະຮັບປະກັນໃຫ້ມີການເຄື່ອນໄຫວ ທາງດ້ານການດຳເນີນ ທຸລະກິດຂອງວິສາຫະກິດລັດ ແລະ ເອກະຊົນ ລວມທັງບັນດາບໍລິສັດທີ່ທີ່ມີການລົງທຶນໂດຍກົງຈາກຕ່າງປະເທດ (FDI).

## ເສລີພາບທາງດ້ານການຄ້າ

ການໃຫ້ເສລີພາບທາງດ້ານການຄ້າຈະເປັນການສ້າງພື້ນຖານ ໃຫ້ແກ່ໂຄງການຫຼຸດຜ່ອນຄວາມທຸກຈົນແຫ່ງຊາດ ເພາະວ່າມັນຈະເປັນການສົ່ງເສີມໃຫ້ພາກສ່ວນເອກະຊົນມີການພັດທະນາ, ຊຸກຍູ້ໃຫ້ມີການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ແລະ ທັງເປັນການເປີດກວ້າງໃຫ້ມີການແຂ່ງຂັນກັນທາງດ້ານກຳລັງການຕະຫຼາດ. ການຄ້າສາມາດສ້າງໂອກາດ ໃຫ້ມີການຈ້າງງານເກີດຂຶ້ນ ທັງໃນຕົວເມືອງ ແລະຊົນນະບົດ.

ສະນັ້ນການຮ່ວມມືທາງດ້ານເສດຖະກິດ ໃນຕໍ່ໜ້ານີ້ຈະຊ່ວຍກະຕຸກຊຸກຍູ້ໃຫ້ ສປປ ລາວ ຫັນປ່ຽນໄປສູ່ລະບົບເສດຖະກິດ ທີ່ອີງໃສ່ຕະຫຼາດເປັນພື້ນຖານ. ໃນການກະກຽມເພື່ອໃຫ້ ສປປ ລາວ ໄດ້ມີການຮ່ວມມືກັບພາຍໃນພາກພື້ນ (ASEAN and AFTA) ແລະ ໃນລະດັບໂລກ (WTO ອົງການການຄ້າໂລກ) ແລະ ສາຍພົວພັນການຄ້າແບບທຳມະດາ ບົນພື້ນຖານຂໍ້ຕົກລົງສົນທິສັນຍາການຄ້າກັບສະຫະລັດອາເມລິກາ), ສຳຄັນແມ່ນຕ້ອງໄດ້ກຳຈັດອຸປະສັກທີ່ກີດຂວາງການສົ່ງອອກ ແລະ ນຳເຂົ້າ. ແຕ່ທີ່ສຳຄັນອີກຢ່າງໜຶ່ງກໍ່ຄື ການກວດສອບເບິ່ງຜົນກະທົບທາງດ້ານວັດທະນະທຳ ແລະ ສັງຄົມໃນການຮ່ວມມືດ້ານສັງຄົມນີ້.

## ການພັດທະນາເສດຖະກິດແບບອີງໃສ່ ຊັບພະຍາກອນເປັນພື້ນຖານ: ນຳໃຊ້ທ່າແຮງການສົມທຽບ

ເສດຖະກິດຂອງລາວແມ່ນເອື່ອຍອີງໃສ່ພື້ນຖານຊັບພະຍາກອນທຳມະຊາດຂອງປະເທດຊາດຢ່າງຫຼວງຫຼາຍ, ໃນນັ້ນມີ ປ່າໄມ້, ນ້ຳ, ດິນ ແລະ ຊັບພະຍາກອນບໍ່ແຮ່. ໃນຂະນະທີ່ຊັບພະຍາກອນປ່າໄມ້ແມ່ນຖືກຂຸດຄົ້ນມານຳໃຊ້ຢ່າງຫຼວງຫຼາຍແລ້ວ, ຊັບພະຍາກອນນ້ຳ, ດິນ ແລະ ບໍ່ແຮ່ສ່ວນໃຫຍ່ແມ່ນຍັງບໍ່ທັນໄດ້ບຸກເບີກ. ເຖິງແມ່ນວ່າຈະເປັນທີ່ເຂົ້າໃຈກັນດີວ່າ ອຳນາດການປົກຄອງ ປາດຖະໜາຢາກຈະຮັກສາສະເຖຍລະພາບທາງດ້ານສັງຄົມ ແລະ ການເມືອງ ໄປຄຽງຄູ່ກັບການຮັກສາຄຸນຄ່າທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີກໍ່ຕາມ, ແຕ່ຄວາມທຸກຈົນທີ່ກວມເອົາພົນລະເມືອງ

ສ່ວນຫຼາຍຂອງຊາດນັ້ນ ໄດ້ຕັ້ງຄຳຖາມອັນເຄັ່ງຕຶງ ຮຽກຮ້ອງໃຫ້ມີວາລະກອງປະຊຸມ ທາງດ້ານນະໂຍບາຍໃນທິດສະວັດໜ້າ.

## ສະຫຼຸບ

ຕັ້ງແຕ່ປີ 1986 ເປັນຕົ້ນມາ, ສປປລາວໄດ້ຈັດຕັ້ງປະຕິບັດການປະຕິຮູບຫຼາຍຮູບແບບພາຍໃຕ້ກົນໄກເສດຖະກິດແບບໃໝ່, ໃນດ້ານການບໍລິຫານຂອງພາກລັດ, ງົບປະມານ, ການທະນາຄານ, ວິສາຫະກິດລັດ ແລະ ລະບົບທີ່ຖືກກົດໝາຍ. ພາຍໃນນະໂຍບາຍເປີດກວ້າງທົ່ວໄປ, ການປັບປຸງເສດຖະກິດ ແລະ ສັງຄົມທີ່ສຳຄັນໄດ້ປະກົດເປັນຮູບປະທຳ. ເຖິງຢ່າງໃດກໍ່ຕາມ, ພາຍຫຼັງເກືອບສອງທົດສະວັດຂອງການຈັດຕັ້ງປະຕິບັດ, ກົນໄກເສດຖະກິດແບບໃໝ່ນີ້ໄດ້ສະແດງໃຫ້ເຫັນການໝົດກຳລັງແຮງ ແລະ ຈຳເປັນທີ່ຕ້ອງໄດ້ປະຕິບັດຕາມຍຸດທະສາດ ການພັດທະນາທັງໝົດອີກຢ່າງໜຶ່ງ ຊຶ່ງຈະມັນຈະຊ່ວຍໃຫ້ສປປລາວໄດ້ມີໂອກາດຮ່ວມມືກັບເສດຖະກິດຂອງໂລກ.

ນອກຈາກນີ້ແລ້ວ, ຄວາມໄວໃນການປັບປຸງລະບົບໃນ ສປປ ລາວ ຍັງຫຼ້າຫຼັງ ເມື່ອທຽບກັບຄວາມໄວຂອງໂລກພາຍນອກທີ່ກຳລັງປ່ຽນແປງ. ຜົນສຸດທ້າຍ, ສປປ ລາວ ຈຶ່ງຕົກຢູ່ໃນທ່າແຮງ ທີ່ເສຍປະໂຫຍດ ໃນດ້ານຂອງການເຄື່ອນໄຫວໃນຂົງເຂດອາຊີກ່ອນໄລຍະໂລກາພິວັດ. ກົນໄກ, ທີ່ຍິ່ງໃຫຍ່ຄ້າຍຄືກັບກົນໄກເສດຖະກິດແບບໃໝ່, ຈຳເປັນຈະຕ້ອງໃຫ້ທ່ວງທັນກັບສິ່ງທ້າທາຍໃນການຮ່ວມມື, ເປັນຈຸດປະສົງທີ່ບໍ່ສາມາດບັນລຸໄດ້ດ້ວຍມາດຕະການທົດແທນ ແລະ ຄວາມພະຍາຍາມທີ່ບໍ່ເຕັມເມັດເຕັມໜ່ວຍໃນການປະສານງານ.

## ກ່ຽວກັບຜູ້ຂຽນ

Chi Do Pham ແມ່ນເປັນຜູ້ຕາງໜ້າຂອງກອງທຶນການເງິນສາກົນ (IMF) ທີ່ປະຈຳຢູ່ໃນນະຄອນຫຼວງວຽງຈັນ ໃນຕົ້ນຊຸມປີ 1990, ແລະ ທັງເປັນຜູ້ທີ່ໃຫ້ຄຳແນະນຳແກ່ຜູ້ນຳລັດຖະບານ ຂັ້ນສູງກ່ຽວກັບນະໂຍບາຍດ້ານເສດຖະກິດ

## ເອກະສານອ້າງອີງ


Bourdet, Yves(1992)ສະເຖຍລະພາບທາງດ້ານເສດຖະກິດມະຫາພາກພາຍໃຕ້ເງື່ອນໄຂການປ່ຽນແປງໃໝ່ໃນສປປລາວ, ເສດຖະກິດແບບຄອມມິວນິດ ແລະ ການປະຕິຮູບເສດຖະກິດ, Vol. 4, No. 4.

ກອງທຶນການເງິນສາກົນ(IMF), ບົດລາຍງານຂອງເສນາທິການ ແລະ ການພັດທະນາເສດຖະກິດເມື່ອບໍ່ດົນມານີ້ໃນໃນ ສປປລາວ, 2003

Ljungren, B(1993) ຕະຫຼາດເສດຖະກິດພາຍໃຕ້ການປົກຄອງຂອງລະບອບຄອມມິວນິດ - ການປະຕິຮູບໃນຫວຽດນາມ, ສປປ ລາວ ແລະ ກຳປູເຈ່ຍ, ໃນ Ljungren, B. (ed) ສິ່ງທ້າທາຍຂອງການປະຕິຮູບໃນອິນໂດຈີນ, ສະຖາບັນ"າເວີດ(Harvard) ເພື່ອການພັດທະນາສາກົນ, ຈັດພິມໂດຍມະຫາວິທະຍາໄລຮາເວີດ.

Pham, Chi Do (ed) (1994), ການພັດທະນາເສດຖະກິດໃນສປປ ລາວ: ໃນຂອບເຂດປີ 2000, ວຽງຈັນ: ທະນາຄານແຫ່ງສປປ ລາວ

Pham, Chi Do and Ichiro Otani (eds) (1996), ລະບົບການປະຕິຮູບ ແລະ ການດັດແກ້ ຂອງ ສປປ ລາວ, IMF Occasional Paper No. 137, Washington D.C.: IMF

UNDP (ອົງການສະຫະປະຊາຊາດ ເພື່ອການພັດທະນາ) ຍຸດທະສາດການຂະຫຍາຍຕົວ (ພັດທະນາ) ຂອງຊາດ ແລະ ການລຶບລ້າງຄວາມທຸກຈົນ (NGPES) (mimeo, 2003)

# ການສິດສອນພາສາ: ການວິເຄາະເສດຖະກິດໃນການນຳໃຊ້ ບັນດາພາສາຊົນເຜົ່າເຂົ້າໃນການສຶກສາ ຕັ້ງແຕ່ຕົ້ນຢູ່ໃນປະເທດລາວ.

ໂດຍ: ຣິຊາດ ນູນານ.

*ສປປ ລາວ ແມ່ນຊາດໜຶ່ງທີ່ມີຫລາຍຊົນເຜົ່າເຊິ່ງມີເກືອບ 50 ພາສາເວົ້າ ຂອງກຸ່ມຊົນເຜົ່າທີ່ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ອີງຕາມການສຳຫລວດປະຊາກອນໃນປີ 1995, ໄດ້ສະແດງໃຫ້ເຫັນວ່າມີ 64% ຂອງປະຊາກອນກຸ່ມພາສາລາວໄທຍ່. ລັດຖະບານລາວໄດ້ສຸມໃສ່ດຳເນີນການສຶກສາຂັ້ນຕົ້ນ ສຳລັບທຸກຄົນໃຫ້ມີຄຸນນະພາບ (EFA) ແຕ່ວ່າ ເພື່ອເຮັດໃຫ້ປະສົບຜົນສຳເລັດໃນອັດຕາສູງໂດຍຄ່າສິ້ນເປືອງຕ່ຳ, ການຮ່ຳຮຽນໃນຂັ້ນປະຖົມ ຈະຕ້ອງຕອບສະໜອງທາງດ້ານພາສາທີ່ເຮັດໃຫ້ເດັກນ້ອຍເຂົ້າໃຈ. ປະສົບການໃນຫລາຍໆ ປະເທດໄດ້ຊີ້ໃຫ້ເຫັນວ່າເດັກນ້ອຍຊົນເຜົ່າສ່ວນຫລາຍ ສາມາດຮຽນແນວຄິດຂັ້ນພື້ນຖານ ແລະ ສາມາດຮູ້ໜັງສືລາວຢ່າງມີປະສິດທິພາບ ດ້ວຍການການສິດສອນຂັ້ນຕົ້ນເປັນພາສາໃດໜຶ່ງທີ່ພວກເຂົາຮູ້ແລ້ວ ແລະ ນຳໃຊ້ພາສານັ້ນເປັນພື້ນຖານ ໃນການຮຽນພາສາລາວ. ການວິເຄາະ ເສດຖະກິດນີ້ສ່ວນໃຫຍ່ແມ່ນສຸມໃສ່ຄຸນຄ່າ ຂອງການນຳໃຊ້ບັນດາພາສາຊົນເຜົ່າເຂົ້າໃນ ການສິດສອນ ແຕ່ວ່າ ມັນຍັງໄດ້ເວົ້າເຖິງດ້ານຜົນປະໂຫຍດ ແລະ ດ້ານການເງິນ.*

ຄວາມສະເໝີພາບ, ຄຸນນະພາບ ແລະ ປະສິດທິພາບ ແມ່ນນະໂຍບາຍອັນສຳຄັນ ດ້ານການສຶກສາຂອງລາວ. ຄວາມສາມາດຂອງເດັກນ້ອຍໃນການເຂົ້າໃຈ ແລະ ຜົນໄດ້ຮັບຈາກການສິດສອນແມ່ນ ບັນຫາສຳຄັນອັນໜຶ່ງ ກ່ຽວກັບຄຸນນະພາບທີ່ຈະຕ້ອງນຳເອົາ ໄປຄົ້ນຄິດເພື່ອຈະບັນລຸເປົ້າໝາຍ ຂອງການສຶກສາສຳລັບທຸກຄົນ ຖ້າວ່າທຸກໆຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ. ປະເທດລາວແມ່ນ ເປັນປະເທດໜຶ່ງ ທີ່ຮັ່ງມີໄປດ້ວຍຫລາຍພາສາຊົນເຜົ່າທີ່ແຕກຕ່າງ ແລະ ມີຈຳນວນເດັກນ້ອຍ ຫລາຍກ່ວາ 30% ທີ່ມີ ພາສາແມ່ຂອງຕົນເອງຫລາຍກ່ວາພາສາປະຈຳຊາດຄື: ພາສາລາວ. ນີ້ໄດ້ສະແດງໃຫ້ເຫັນ ເຖິງຫລາຍສິ່ງທ້າທາຍໜັກໜ່ວງ ຂອງພະນັກງານສຶກສາ, ຊຶ່ງເປັນຜູ້ທີ່ມີໜ້າທີ່ເຮັດໃຫ້ເດັກນ້ອຍ ທັງຫລາຍ ເຫລົ່ານັ້ນມີຄວາມສາມາດຮຽນຮູ້ໄດ້ຈາກການສິດສອນ ຢູ່ໃນໂຮງຮຽນຂັ້ນປະຖົມ ແລະ ສາມາດ ເອົາພາສານັ້ນໄປນຳໃຊ້ເວລາຢູ່ໃນບ້ານ.

ການສຶກສາຄົ້ນຄວ້າຢູ່ບັນດາປະເທດອື່ນໆກ່ຽວກັບພາສາຊົນເຜົ່າ ສະແດງໃຫ້ເຫັນວ່າ ເດັກນ້ອຍຮຽນຮູ້ແນວຄິດຂັ້ນພື້ນຖານ ແລະ ສາມາດອ່ານອອກຂຽນໄດ້ຢ່າງມີປະສິດທິພາບ ຖ້າວ່າການສິດສອນຂັ້ນຕົ້ນ (ສາມລະດັບທຳອິດ) ເປັນພາສາຂອງພວກເຂົາເອງ (UNESCO 2003; Stroud, 2002). ຈຸດປະສົງຂອງເອກະສານນີ້ແມ່ນເພື່ອຕີລາຄາມູນຄ່າໃນການສິດສອນເປັນ ພາສາຊົນເຜົ່າໃນລະດັບ 1-3 ຢູ່ບັນດາໂຮງຮຽນທີ່ສອນປົກກະຕິໃນທ້ອງຖິ່ນ ແລະ ບັນດາຊຸມຊົນຕ່າງໆ. ບັນຫາສຳຄັນໃນການຕັດສິນມູນຄ່າແມ່ນ: (ກ) ດ້ານຈຳນວນ ແລະ ບ່ອນຢູ່ອາໄສຂອງບັນດາກຸ່ມພາສາຊົນເຜົ່າ. (ຂ) ຄວາມສາມາດເຂົ້າໃຈທາງດ້ານພາສາທີ່ມີຄວາມແຕກຕ່າງກັນນັ້ນຫລາຍປານໃດ, (ຄ) ບ່ອນຢູ່ ແລະ ການນຳໃຊ້ພາສາການຄ້າ ຫລື ພາສາປະສົມ. (ງ) ແລະ ເດັກນ້ອຍນັກຮຽນມີຄວາມສາມາດເຂົ້າ

ໃຈຕໍ່ບັນດາພາສາຊຸມຊົນຕ່າງໆເຫລົ່ານັ້ນຫລາຍປານໃດ. ເອກະສານສະບັບນີ້ ຍັງເວົ້າຫຍໍ້ກ່ຽວກັບຜົນປະໂຫຍດທາງເສດຖະກິດ (ປະສິດທິພາບ, ຄວາມສະເໝີພາບ ແລະ ການພັດທະນາເສດຖະກິດສັງຄົມ) ໃນການໃຊ້ພາສາຊົນເຜົ່າເຂົ້າໃນການສິດສອນ ແລະ ແຫລ່ງທາງການເງິນທີ່ສະໜັບສະໜູນມູນຄ່າໃນການພັດທະນາ.

## ບ່ອນຢູ່ອາໄສຂອງກຸ່ມພາສາຊົນເຜົ່າ.

*ປະຊາກອນທີ່ໃຊ້ພາສາຊົນເຜົ່າ*

| *ຊົນເຜົ່າ* | *%* |
|---|---|
| ລາວໄຕ | *64* |
| ມອນຂະແມ | *22* |
| ລາວສູງ | *7* |
| ລາວເທິງ | *2* |
| ອື່ນໆ | *5* |
| ລວມ | *100* |

ແຫລ່ງຈາກ: ການ ສຳຫລວດປະຊາກອນ ປີ 1995

ຈຳນວນບ່ອນຢູ່ອາໄສ: ປະເທດລາວແມ່ນປະເທດໜຶ່ງ ທີ່ມີຫລາຍຊົນຊາດ, ເຊິ່ງມັນໄດ້ຖືກບັນທຶກໄວ້ ໃນລັດຖະທຳມະນູນຢ່າງ ແຈ່ມແຈ້ງ ແລະ ເປັນຈິງ. ການສຳຫລວດ ປະຊາກອນໃນປີ 1995 ນັ້ນມັນໄດ້ເປັນ ເອກະສານທີ່ຢັ້ງຢືນວ່າມີ 47 ກຸ່ມພາສາຊົນເຜົ່າ. ນັກພາສາສາດ ແລະ ນັກມະນຸດ ວິທະຍາ ໄດ້ຢັ້ງຢືນວ່າ ມີພາສາຊົນເຜົ່າ ແລະ ພາສາຊົນເຜົ່າຍ່ອຍເຖິງ 230 ພາສາ. ອີງຕາມການສຳຫລວດ ປະຊາກອນໃນປີ 1995 ພາສາລາວເອງ (ລາວໄຕ) ປະກອບດ້ວຍ 4 ພາສາ ຕ່າງກັນ ເຊິ່ງລວມກັນມີ 64%. ສ່ວນໃຫຍ່ພາສາທີ່ໃຊ້ ມີພາສາມອນຂະແມ 22% ຂອງປະຊາກອນ, ພາສາມົ້ງມຽນ, (ມົ້ງຢ້າວ) ປະມານ 7% ຂອງປະຊາກອນ ແລະ ຕິເບດໂຕເບີແມນ ມີ 2%. ແຕ່ລະກຸ່ມພາສາເຫຼົ່ານີ້ປະກອບມີຄວາມແຕກຕ່າງໃນ ຄວາມເຂົ້າໃຈ ເຊິ່ງກັນ ແລະ ກັນໄດ້ທັງຫຼາຍ ແລະ ໜ້ອຍ, ແຕ່ວ່າບາງກຸ່ມພາສາ ທີ່ແຕກຕ່າງ ແມ່ນ ບໍ່ສາມາດເຂົ້າໃຈເຊິ່ງກັນ ແລະ ກັນໄດ້ເລີຍ. ມີກຸ່ມພາສາທີ່ແຕກຕ່າງກັນຊຶ່ງພວກເຂົາບໍ່ສາມາດ ເຂົ້າໃຈເຊິ່ງກັນ ແລະ ກັນແຕ່ວ່າຢູ່ໃນນັ້ນມີບາງ ພາສາ ທີ່ພວກເຂົາອາດສາມາດເຂົ້າໃຈກັນໄດ້ດີ ຫລື ເຂົ້າໃຈ ກັນໄດ້ໜ້ອຍ. (Chamberlain and ພິມສົມບັດ; Chamberlain). ມັນສັບສົນຫລາຍເພາະວ່າ ປະຊາຊົນຈຳນວນຫລວງຫລາຍ ແມ່ນເວົ້າ ພາສາເຫລົ່ານີ້ໄດ້ຫລາຍກ່ວາໜຶ່ງພາສາ ແລະ ອີງຕາມທ້ອງຖິ່ນບ່ອນຢູ່ ມີຫລາຍພາສາ ທີ່ແຕກຕ່າງກັນໄດ້ນຳໃຊ້ເປັນພາສາການ ຄ້າ ຫລື ພາສາປະສົມ.

ຕະກຸນຂອງພາສາລາວໄຕແມ່ນຖືກນຳໃຊ້ດ້ວຍໜຶ່ງ ກຸ່ມໃຫຍ່ ຄື: ລາວ. ສາມກຸ່ມທີ່ໃຫຍ່ທີ່ສຸດແມ່ນພົວພັນພໍເຂົ້າໃຈເຊິ່ງກັນແລະກັນ. ຕະກຸນພາສາມອນຂະແມ ແມ່ນຖືກນຳໃຊ້ໂດຍກຸ່ມຂະມຸເປັນຈຳນວນຫລາຍ ເຊິ່ງຢູ່ໃນນັ້ນມີຄວາມແຕກຕ່າງກັນ ແຕ່ວ່າ 8 ກຸ່ມຊົນເຜົ່ານັ້ນແມ່ນໃຊ້ພໍເຂົ້າໃຈກັນ. ຕະກຸນພາສາມົ້ງຢ້າວ ແມ່ນຖືກນຳ ໃຊ້ໂດຍກຸ່ມຊົນເຜົ່າມົ້ງຢ່າງ ເປັນຈຳນວນຫລວງຫລາຍ ແລະ ມີຄວາມສາມາດເຂົ້າໃຈຊຶ່ງກັນ ແລະ ກັນໄດ້ດີ.

ຕະກຸນພາສາຕິເບໂຕເບີແມນ ແມ່ນຖືກສ້າງຂຶ້ນດ້ວຍພາສາຕ່າງໆ ແລະ ເປັນພາສາໃຊ້ພໍເຂົ້າໃຈກັນໃນບັນດາກຸ່ມ. ກຸ່ມທີ່ໃຫຍ່ສຸດແມ່ນກຸ່ມກໍ(ອະຄາ) ປະກອບດ້ວຍກຸ່ມຍ່ອຍຕ່າງໆຢ່າງກວ້າງຂວາງພາສາເຫລົ່ານີ້ ແມ່ນບໍ່ໄດ້ຄົ້ນຄ້ວາລົງເລິກປານໃດ. ກຸ່ມທີ່ໃຫຍ່ທີ່ສຸດທີສອງ ແມ່ນໄທຜູ້ນ້ອຍ ເຊິ່ງປະກອບດ້ວຍ 3 ກຸ່ມແຕກຕ່າງກັນ ແລະ ໃຊ້ເປັນພາສາປະສົມຢ່າງຫລວງຫລາຍ.

ບ່ອນທີ່ຢູ່ອາໄສ: ລາວໄຕສ່ວນຫລາຍແມ່ນໄດ້ດຳລົງຊີວິດຢູ່ເຂດທົ່ງພຽງ ແລະ ໃກ້ເຂດແມ່ນ້ຳ. ຊາວຂະ

ມຸແມ່ນ ໄດ້ຢູ່ກະຈາຍທົ່ວພື້ນທີ່ທາງບັນດາແຂວງພາກເໜືອ ແລະ ຊາວມົ້ງແມ່ນກະແຈກກະຈາຍຢູ່ບັນດາແຂວງພາກເໜືອ ແລະ ພາກກາງຢ່າງກ້ວາງຂວາງ. ບັນດາຊົນເຜົ່າທີ່ນ້ອຍກ່ວາແມ່ນກະຈາຍຢູ່ໃນບັນດາໝູ່ບ້ານນ້ອຍ ທີ່ຫ່າງໄກສອກຫລີກທົ່ວທຸກພາກຂອງປະເທດ. ອີງຕາມການສຳຫລວດປະຊາກອນໃນປີ 1995, ໃນເວລານັ້ນ ປະຊາກອນຊົນເຜົ່າສ່ວນນ້ອຍສ່ວນຫລາຍອາໄສຢູ່ໃນ 60 ຕົວເມືອງຂອງ 133 ເມືອງໃນທົ່ວປະເທດ. ປະຊາກອນຊົນເຜົ່າສ່ວນນ້ອຍຢູ່ໃນຕົວເມືອງເຫລົ່ານີ້ມີປະມານ 1.4 ລ້ານ ຄົນໃນປີ 2004. ຫລື ເກືອບໜຶ່ງສ່ວນສີ່ຂອງປະຊາກອນທັງໝົດ ແລະ ສອງສ່ວນ ສາມຂອງປະຊາກອນຊົນເຜົ່າສ່ວນນ້ອຍ. ທ່າອ່ຽງເຫລົ່ານີ້ແມ່ນໄດ້ເຊື່ອງຊ້ອນ ເນື້ອຫາທີ່ຕ່າງກັນໃນການແຜ່ກະຈາຍຂອງໝູ່ບ້ານ ແລະ ຄອບຄົວ.

<u>ຮູບທີ່ 1: ຮູບແບບຊ່ວງໄລຍະການຢູ່ກະຈາຍຂອງຊົນເຜົ່າ.</u>




ບົນພື້ນຖານການຄົ້ນຄ້ວາທາງດ້ານມະນຸດສາດ ແລະ ພາສາສາດຢ່າງລະອຽດຖີ່ຖ້ວນ, ແຜນທີ່ພາສາຂອງລາວແມ່ນໄດ້ສະແດງໃຫ້ເຫັນຊ່ວງໄລຍະຄວາມແຕກຕ່າງໃນການຢູ່ອາໄສຂອງກຸ່ມຊົນເຜົ່າ (SIL International). ໃນບໍ່ດົນກໍ່ຈະໄດ້ຈັດພິມແຜນທີ່ລະອຽດກ່ວານີ້ກ່ຽວກັບຊ່ວງໄລຍະກ່ຽວກັບບ່ອນຢູ່ອາໄສຂອງກຸ່ມຊົນເຜົ່າ ເພື່ອທີ່ຈະສະແດງຮູບແບບຕ່າງໆ, ກັບຮອຍແຕ້ມວົງມົນຫວ່າງກ້ວາງສະແດງເຖິງໜຶ່ງກຸ່ມ, ຮູບວົງມົນຕໍ່ກັນຍາວສະແດງເຖິງກຸ່ມທີ່ສອງ ແລະ ຮູບດອນນ້ອຍຢູ່ກະຈາຍສະແດງເຖິງກຸ່ມທີສາມ. ຊ່ວງໄລຍະ ແລະ ຈຳນວນບ່ອນຢູ່ອາໄສ, ພາສາຕ່າງໆທີ່ໃຊ້ເຂົ້າໃຈກັນ ແລະ ການເລືອກມີສ່ວນຮ່ວມ ແມ່ນບັນຫາສຳຄັນທັງດ້ານປະສິດທິພາບ ແລະ ຄວາມສະເໝີພາບເພື່ອເຮັດໃຫ້ການຮ່ຳຮຽນ ຂອງທຸກໆຄົນມີຄຸນນະພາບ ໂດຍບໍ່ຄຳນຶງເຖິງວ່າເປັນພາສາຊົນເຜົ່າໃດ.

## ຄວາມສາມາດເຂົ້າໃຈກັນ ແລະ ການເລືອກເຟັ້ນ.

ເຖິງແມ່ນວ່າຢູ່ໃນລາວ ມີພາສາທີ່ແຕກຕ່າງກັນຢ່າງຫລາກຫລາຍ, ແຕ່ກໍ່ມີແຜນທີ່ກ່ຽວກັບຊົນເຜົ່າໜ້ອຍ ຫລື ການຄົ້ນຄວ້າກ່ຽວກັບຄວາມສາມາດເຂົ້າໃຈກັນຂອງຫລາຍພາສາທີ່ແຕກຕ່າງກັນ ຫລື ການນຳໃຊ້ ແລະ ການກະຈາຍຢູ່ຂອງພາສາປະສົມກັນ (Chamberlain and Phomsombath; Chamberlain). ຖ້າສອງພາສາຕ່າງກັນ (ເຊັ່ນ ອາ ແລະ ເບ) ສາມາດເຂົ້າໃຈກັນດີ, ເວລານັ້ນມັນອາດເປັນໄປໄດ້ທີ່ແຕ່ລະກຸ່ມພາສາມີແນວຄິດແຕກຕ່າງກັນເປັນທຳມະດາ( ເຊັ່ນ ທັງ ອາ ຫລື ເບ, ຫລື ປະສົມອາເບ, ຫລື ປະສົມກັນແບບທຳມະດາ ເຊ) ສຳລັບໃຊ້ເຂົ້າໃນການສິດສອນ ຕັ້ງແຕ່ປີທີ່ຮຽນຢູ່ປະຖົມ. ດັ່ງຈະເຫັນ ໄດ້ຢູ່ຂ້າງລຸ່ມນີ້, ຄວາມສາມາດເຂົ້າໃຈກັນ ແລະ ການນຳໃຊ້ ແລະ ການຢູກະຈາຍຂອງພາສາປະສົມ ທີ່ສະແດງໃຫ້ເຫັນສອງບັນຫາທີ່ສຳຄັນ ກ່ຽວກັບມູນຄ່າຂອງຄວາມ ສຳເລັດຂອງການສຶກສາຂັ້ນພື້ນຖານ. ຄວາມສະເໝີພາບໃນການແກ້ໄຂບັນຫາ ກ່ຽວກັບຄວາມຕ້ອງການຂອງການສຶກສາ ໃນປະເທດທີ່ມີ ຫລາຍພາສາຊົນເຜົ່ານັ້ນ ຕ້ອງໃຫ້ເໝາະສົມກັບມູນຄ່າ ແລະ ບົນພື້ນ

ຖານຈຸດມຸ່ງໝາຍສະເພາະ ແລະ ເງື່ອນໄຂຂອງຊຸມຊົນທີ່ແຕກຕ່າງກັນ. ທາງເລືອກຂອງຜູ້ມີສ່ວນຮ່ວມແມ່ນຕ້ອງມີການຄົ້ນຄ້ວາພິຈາລະນາ, ແລະ ທາງເລືອກຂອງຊຸມຊົນນີ້ຕ້ອງຕ່າງຈາກຂອງຊຸມຊົນອື່ນ, ໃນທຳນອງນັ້ນ ມັນມັກມີຄວາມຫຍຸ້ງຍາກໃນການຄາດກະ. ຜູ້ມີສ່ວນຮ່ວມແມ່ນຕ້ອງການຢາກຮູ້ສິດຂອງພວກເຂົາໃນການເລືອກ ວ່າມີທາງເລືອກອັນໃດແດ່ ແລະ ຜົນໄດ້ຮັບຂອງມັນ. ໃນບາງກໍລະນີ, ທາງເລືອກແມ່ນຈະແຈ້ງ ແລະ ໃນກໍລະນີອື່ນໆ ການສຳຫລວດກ່ຽວກັບພາສາ ສັງຄົມສາດແມ່ນຕ້ອງການອະທິບາຍສະຖານະການ ແລະ ໃຫ້ແຈ້ງທາງເລືອກ.

---

*ຜູ້ມີສ່ວນຮ່ວມແມ່ນຕ້ອງການຢາກຮູ້ສິດຂອງພວກເຂົາໃນການເລືອກວ່າ ມີທາງເລືອກອັນໃດແດ່ ແລະ ຜົນໄດ້ຮັບຂອງມັນ*

---

ຮູບແບບຕົວຢ່າງທີ່ສັບສົນກ່ຽວກັບໃນໄລຍະຂອງການກະຈາຍຢູ່ ແມ່ນສະແດງຢູ່ໃນຮູບທີ 1 ຂ້າງເທິງນັ້ນ. ໃນກໍລະນີທີ່ງ່າຍທີ່ສຸດ (ເບິ່ງແບບທີ 1 ຢູ່ຮູບທີ 1). ຊຸມຊົນໃຊ້ພາສາຮ່ວມກັນຕາມກຸ່ມທີ່ໃຫຍ່ກ່ວາຫລາຍກ່ວາຕາມໄລຍະກ້ວາງຂອງຂົງເຂດ. ໃນກໍລະນີຄືແນວນັ້ນ, ຊຸມຊົນອາດຈະຢາກໃຫ້ເດັກນ້ອຍໄດ້ຮັບການສິດສອນຕາມພາສາຊົນເຜົ່າທີ່ໃຊ້ຮ່ວມກັນນັ້ນຕັ້ງແຕ່ຕອນຂັ້ນຕົ້ນ. ແມ່ນແຕ່ໃນກໍລະນີທຳມະດາ, ເຖິງແມ່ນວ່າການຕົກລົງເຫັນດີຍັງບໍ່ເປັນອັນທີ່ແນ່ນອນ. ຊຸມຊົນທີ່ມີສ່ວນຮ່ວມອາດຈະຢາກໃຫ້ເດັກນ້ອຍຂອງພວກເຂົາເຈົ້າໄດ້ຮັບການສິດສອນພາສາລາວໃນ ລະດັບ 1, ໂດຍສະເພາະຖ້າເຫັນວ່າມັນມີຄວາມສຳຄັນຕໍ່ກັບຊຸມຊົນທີ່ເວົ້າພາສາລາວ. ໃນບາງກໍລະນີທີ່ຊ້ອນຊ້າງສັບສົນກ່ວາ ຜູ້ມີສ່ວນຮ່ວມແມ່ນຊຸມຊົນຊົນເຜົ່ານ້ອຍທີ່ແຕກຕ່າງກັນ, ແຕ່ຂົງເຂດຂອງຊົນເຜົ່າກ້ວາງຂວາງກ່ວາ ອາດຈະຢາກໃຫ້ໃຊ້ທັງພາສາທ້ອງຖິ່ນ, ພາສາທີ່ໃຊ້ຢູ່ອ້ອມແອ້ມໃນກຸ່ມ ຫລື ພາສາຊາດ.

ໃນແບບທີ 2, ຖ້າສອງຊຸມຊົນໃຊ້ພາສາຕ່າງກັນມາລວມກັນມັນຈະເປັນມິດກັນ ແລະ ເປັນລະບົບດີ. ລະດັບສູງຂອງການຢູ່ລວມກັນໃນຊຸມຊົນ ອາດຈະງ່າຍໃນການຕົກລົງກັນກ່ຽວກັບການສິດສອນພາສາ. ຖ້າວ່າຢູ່ລວມກັນດີນໆ , ຫລາຍຄົນຈະເວົ້າໄດ້ສອງພາສາ, ດັ່ງນັ້ນ ຊຸມຊົນທີ່ມີສ່ວນຮ່ວມອາດຈະຢາກໃຫ້ໜຶ່ງໃນພາສາເຫລົ່ານັ້ນ (ພາສາທີ່ "ເປັນປະໂຫຍດທີ່ສຸດ" ຫລື "ສຳຄັນກ່ວາ" ) ໃຊ້ເຂົ້າໃນການສິດສອນໃນແຕ່ຂັ້ນຕົ້ນ. ໃນແບບທີ 3: ສອງຊຸມຊົນມີພາສາຕ່າງກັນ (ເຊັ່ນ: A ແລະ B) ບໍ່ຢູ່ລວມກັນ. ຂາດການຢູ່ລວມກັນມັນອາດຈະຍາກ ທີ່ຈະເຮັດໃຫ້ຜູ້ມີສ່ວນຮ່ວມຈາກແຕ່ລະຊຸມຊົນ ຕົກລົງກັນໄດ້ກ່ຽວກັບການນຳໃຊ້ພາສາດຽວ, A ຫລື B, ເຂົ້າໃນການສິດສອນຕັ້ງແຕ່ຂັ້ນຕົ້ນ. ຖ້າວ່າທັງສອງກຸ່ມເຫັນໄດ້ວ່າ ໜຶ່ງໃນພາສາເຫລົ່ານັ້ນມີການນຳໃຊ້ຫລາຍ ແລະ ສຳຄັນກ່ວາ ອາດຈະເປັນໄປໄດ້ທີ່ຈະຕົກລົງກັນ ໃຊ້ພາສານັ້ນ. ທາງເລືອກອີກທາງໜຶ່ງ ແມ່ນພວກເຂົາອາດຈະຕົກລົງກັນໃຊ້ພາສາລາວ. ໃນແບບທີ 4 ຮູບທີ 1, ສອງຊຸມຊົນໃຊ້ພາສາຕ່າງກັນ A ແລະ B ມາຢູ່ລວມກັນໂດຍຜ່ານ ພາສາປະສົມ C ຜູ້ມີສ່ວນຮ່ວມອາດຈະເລືອກທັງ A ແລະ B ເປັນການສິດສອນໃນລະດັບກາງ ຫລື C ນຳມາ. ຖ້າວ່າເດັກນ້ອຍໃນໂຮງຮຽນໃຊ້ພາສານັ້ນເວົ້າ ແລະ ເໝາະສົມສຳລັບການສິດສອນ ຫລື ພາສາລາວ.

## ມູນຄ່າ.

ນັກວິເຄາະເສດຖະກິດ ກ່ຽວກັບມູນຄ່າຂອງການສິດສອນຫລາຍພາສາ ຈະຕ້ອງອີງໃສ່ການ ສະເລ່ຍລວມ ຂອງມູນຄ່າທີ່ລວມຢູ່ໃນການຮ່ຳຮຽນ. ມູນຄ່າແມ່ນເລັ່ງໃສ່ຈາກການເລືອກຮັບເຂົ້າມາ (ນັກຮຽນ,

ຄູສອນ, ວັດຖຸ ແລະ ອຸປະກອນ, ຄວາມສະດວກສະບາຍ, ການດຳເນີນງານ ແລະ ການຮັກສາສ້ອມແປງ) ແລະ ການດຳເນີນ(ຫລັກສູດ ແລະ ການສິດສອນ/ການຮຽນ). ໃນບົດວິເຄາະນີ້, ມີສອງປັດໃຈສຳຄັນທີ່ ມີມູນຄ່າຄື ເງິນເດືອນຄູສອນ ແລະ ວັດຖຸອຸປະກອນ. ເປັນທີ່ຍອມຮັບວ່າ ຫລັກສູດລະດັບຊາດອັນໜຶ່ງ ອັນດຽວໄດ້ຖືກນຳມາໃຊ້ ແຕ່ວ່າການແປມູນຄ່າແມ່ນລວມຢູ່ກັບມູນຄ່າຂອງອຸປະກອນ.

---

*ການສິດສອນພາ ສາຊົນເຜົ່າແນວໃດ ຈຶ່ງສາມາດຕອບ*
*ສະໜອງໃຫ້ເໝາະສົມກັບມູນຄ່າ ໂດຍບໍ່ມີການເພີ່ມຈຳນວນຄູສອນ.*

---

### ມູນຄ່າຕໍ່ນັກຮຽນ ແລະ ຄອບຄົວຂອງພວກເຂົາເຈົ້າ

ມູນຄ່າຕໍ່ກັບນັກຮຽນ ແລະ ຄອບຄົວຂອງພວກເຂົາເຈົ້າສ່ວນໃຫຍ່ແມ່ນມູນຄ່າທາງໂອກາດ (ເສຍລາຍໄດ້ເມື່ອເດັກນ້ອຍໄປໂຮງຮຽນ ແທນທີ່ຈະເຮັດ ວຽກຢູ່ບ້ານ ຫລື ຢູ່ທົ່ງໄຮ່ທົ່ງນາ, ມູນຄ່າອັນນີ້ແມ່ນຕ່ຳສຳລັບເດັກນ້ອຍທີ່ຢູ່ລະດັບຕ່ຳກ່ວາປະຖົມ), ປະກອບກັບ ມູນຄ່າໄປຮັບ-ສົ່ງ, ເຄື່ອງແບບ, ປຶ້ມຮຽນ ແລະ ວັດຖຸອຸປະກອນອື່ນໆ. ເປັນທີ່ຍອມ ຮັບໄດ້ວ່າ ມູນຄ່າເພີ່ມຕໍ່ກັບຄອບຄົວ ຂອງນັກຮຽນສຳລັບການໄດ້ຮັບການສິດສອນ ເບື້ອງຕົ້ນທີ່ເປັນພາສາຊົນເຜົ່າສ່ວນນ້ອຍ ໂດຍທົ່ວໄປແລ້ວແມ່ນບໍ່ມີເລີຍ. ມັນແມ່ນຄວາມຈິງແທ້ໆທີ່ວ່າການສິດສອນ ພາສາໃດໜຶ່ງທີ່ພວກເຂົາ ເຂົ້າໃຈບໍ່ແມ່ນການເພີ່ມຄຸນຄ່າຂອງພວກເຂົາ. ອາດມີບາງຂໍ້ຍົກເວັ້ນ. ທຳອິດ, ໃນບາງກໍລະນີ (ຕົວຢ່າງໃນຮູບທີ 1, ແບບທີ 3) ນັກຮຽນອາດຈະຕ້ອງໄດ້ເດີນທາງໄກແດ່ເລັກນ້ອຍ ເພື່ອໄປຮຽນທີ່ໂຮງຮຽນສອນພາສາທີ່ພວກເຂົາເລືອກ. ການທ່າງໄກແດ່ເລັກນ້ອຍແມ່ນຖືກເອົາໃຈໃສ່ ຕະຫລອດ ຍ້ອນວ່າຈຸດປະສົງແມ່ນນຳເອົາພາສາຊົນເຜົ່າເຂົ້າໄປສອນ ໃນໂຮງຮຽນທ້ອງຖິ່ນທີ່ຮຽນ ເປັນປົກກະຕິ. ການນຳໃຊ້ໂຮງຮຽນກິນນອນຊົນເຜົ່າແມ່ນ ບໍ່ຮັບປະກັນ ເພາະມັນບໍ່ເໝາະສົມສຳລັບ ເດັກນ້ອຍ. ການປຶກສາຫາລືກ່ຽວກັບມູນຄ່າເພີ່ມຂອງວັດຖຸອຸປະກອນ ຮັບໃຊ້ໃນການສອນພາສາຊົນເຜົ່າແມ່ນບໍ່ໄດ້ຜົນ. ຍ້ອນມີຄວາມຕ້ອງການທີ່ແຕກຕ່າງກັນທີ່ຈະປະຕິບັດ ລະຫວ່າງມູນຄ່າ ແລະ ຜູ້ທີ່ຈະແບກຫາບມູນຄ່າ. ເພື່ອເຮັດໃຫ້ການສິດສອນ ພາສາຊົນເຜົ່າເກີດຜົນເປັນຈິງ ມັນຈະຕ້ອງໄດ້ຍອມ ຮັບວ່າ ເດັກນ້ອຍຊົນເຜົ່າຈະບໍ່ຕ້ອງໄດ້ຈ່າຍຄ່າອຸປະກອນ ການສິດສອນຂອງພວກເຂົາຫລາຍກ່ວາຊົນເຜົ່າລາວລຸ່ມໄດ້ຈ່າຍ. ການເພີ່ມມູນຄ່າຈະຕ້ອງລວມທັງ ການໃຫ້ການສະໜັບສະໜູນຕໍ່ຜູ້ຈັດພິມ ຫລື ສະໜັບສະໜູນສິ່ງທີ່ຈຳເປັນໃຫ້ແກ່ນັກຮຽນ ຫລື ໂຮງຮຽນ, ດີທີ່ສຸດແມ່ນສະໜັບສະໜູນສິ່ງທີ່ຈຳເປັນ.

### ມູນຄ່າຂອງສິ່ງທີ່ອຳນວຍຄວາມສະດວກ

ຈຸດປະສົງໜຶ່ງຂອງເອກະສານນີ້ແມ່ນໄດ້ສະແດງໃຫ້ເຫັນ ເຖິງການສິດສອນ ພາສາຊົນເຜົ່າແນວໃດຈຶ່ງສາມາດຕອບສະໜອງໃຫ້ການປັບປຸງນຄູສອນ ແລະ ປຸ່ງນແປງໄດ້ຕາມສະພາບຂອງໂຮງຮຽນທີ່ມີຢູ່ດັ່ງທີ່ໄດ້ປຶກສາຫາລືຢູ່ຂ້າງລຸ່ມ. ຍ້ອນແນວນັ້ນຈຶ່ງເວົ້າ ໄດ້ວ່າ ການນຳໃຊ້ພາສາຊົນເຜົ່າ ໃນການສິດສອນຕັ້ງແຕ່ຂັ້ນປະຖົມຈຶ່ງບໍ່ເກີດມີມູນຄ່າຂອງສິ່ງທີ່ອຳນວຍຄວາມສະດວກເພີ່ມ.

### ເງິນເດືອນຄູສອນ

ຈຸດປະສົງອີກອັນໜຶ່ງຂອງເອກະສານນີ້ ແມ່ນສະແດງໃຫ້ເຫັນເຖິງການສິດສອນພາສາຊົນເຜົ່າແນວໃດຈຶ່ງສາມາດຕອບສະໜອງໃຫ້ເໝາະສົມກັບມູນຄ່າ ໂດຍບໍ່ມີການເພີ່ມຈຳນວນຄູສອນ. ເຖິງແມ່ນວ່າ

ການປັບປຸງນຄູຈະແມ່ນສິ່ງຈຳເປັນ ເຊັ່ນມັນຈະເປັນທ່າອ່ຽງໃຫ້ການຝຶກອົບຮົມຄູຊົນເຜົ່າເປັນປະຈຳຕໍ່ເນື່ອງ. ເງິນເດືອນຄູ(ລວມທັງເງິນເດືອນພື້ນຖານ ແລະ ເງິນເພີ່ມທັງໝົດ) ຕາມທຳມະດາແລ້ວລວມເປັນເງິນ 80% ຂອງຄ່າໃຊ້ຈ່າຍ, ເຖິງວ່າລະດັບ ແລະ ແບບການໃຊ້ຈ່າຍສາມາດ ປ່ຽນແປງຕາມລະດັບຂອງການຮ່ຳຮຽນ, ສະຖານທີ່ (ໂຮງຮຽນແຂວງ, ເມືອງ) ແລະ ນອກໂມງ. ຂໍ້ມູນຫລັກຖານໃນປະຈຸບັນຂອງ ສປປ ລາວ ໄດ້ສະແດງໃຫ້ເຫັນວ່າ ລະດັບປະຖົມ, 92% ຂອງງົບປະມານແມ່ນແບ່ງໃຫ້ເງິນເດືອນຄູ (Gannicott; Noonan 2003a). ມີສາມປະເພດໃຫຍ່ໆ ສຳລັບຄູທີ່ໄດ້ກຳນົດດ້ວຍເງື່ອນໄຂໃນການຈ້າງ.

- ພະນັກງານລັດ ຫລື "ຄູສອນທີ່ຖືກຊັບຊ້ອນ"
- ຄູສັນຍາຈ້າງ, ຕາມປົກກະຕິແລ້ວແຂວງເປັນຜູ້ຈ້າງ ແຕ່ບາງເທື່ອກໍ່ແມ່ນຂັ້ນສູນກາງ.
- ຄູຊຸມຊົນ ຫລື ຄູອາສາສະມັກ, ທຳມະດາແລ້ວແມ່ນຊຸມຊົນທ້ອງຖິ່ນເປັນຜູ້ຈ້າງ.

ເງິນເດືອນຄູທີ່ຖືກຊັບຊ້ອນແມ່ນກຳນົດຕາມຂັ້ນເງິນເດືອນຂອງພະນັກງານລັດ. ເງິນເດືອນຄູສັນຍາຈ້າງແມ່ນກຳນົດຕາມຄຳແນະນຳຂອງຂັ້ນເງິນເດືອນພະນັກງານລັດ, ແຕ່ຄູສັນຍາຈ້າງບໍ່ໄດ້ຮັບເງິນປິ່ນປົວສຸຂະພາບ ຫລື ເງິນບຳນານຄືກັບພະນັກງານລັດ. ເງິນເດືອນຂອງ ຄູຊຸມຊົນແມ່ນສ້າງຂື້ນໂດຍ ການເຈລະຈາຕົກລົງກັນລະຫວ່າງຊຸມຊົນ ແລະ ຄູສອນ. ຫລັກຖານບໍ່ມີມູນຄວາມຈິງໄດ້ເວົ້າວ່າ ໃນພາກປະຕິບັດ, ລະດັບເງິນເດືອນຂອງຄູສັນຍາຈ້າງແມ່ນປ່ຽນແປງໄປຕາມການຕອບສະໜອງ ແລະ ຄວາມຮຽກຮ້ອງ ແລະ ອາດຈະສູງກ່ວາ ຫລື ຕ່ຳກ່ວາເງິນເດືອນຄູຖືກຊັບຊ້ອນ. ເງິນເດືອນຂອງຄູຊຸມຊົນແມ່ນບໍ່ໄດ້ກຳນົດ ແລະ ປ່ຽນແປງໄປຕາມເງື່ອນໄຂໃນການຕອບສະໜອງ ແລະ ຄວາມຮຽກຮ້ອງ. ຫລັກຖານ ບໍ່ມີມູນຄວາມຈິງໄດ້ກ່າວວ່າ ເງິນເດືອນຂອງຄູຊຸມຊົນຕາມ ປົກກະຕິແລ້ວແມ່ນ ຕ່ຳກ່ວາເງິນເດືອນຄູຖືກ ຊັບຊ້ອນ.

## ການປັບປຸງນຄູ

ເງິນເດືອນຄູລວມມີເງິນເດືອນພື້ນຖານ ສ່ວນໃຫຍ່ແມ່ນກຳນົດຕາມວຸດທິການສຶກສາ, ອາຍຸປະສົບການ ແລະ ລະດັບເງິນເພີ່ມ. ບໍ່ມີການ ເພີ່ມເງິນເດືອນໃຫ້ແກ່ການສິດສອນໃນຊຸມຊົນຊົນເຜົ່າສ່ວນນ້ອຍ ຫລື ພາສາ. ຫລັກຖານບໍ່ມີມູນ ຄວາມຈິງເວົ້າວ່າ ຄວາມຈິງແລ້ວໃນພາກປະຕິບັດ ຄູສອນຊົນເຜົ່າສ່ວນນ້ອຍຢາກສອນພາສາຊົນເຜົ່າ ຢູ່ແຕ່ຂັ້ນຕົ້ນໂດຍບໍ່ມີມູນຄ່າເພີ່ມ. ເງິນເພີ່ມພິເສດແມ່ນກຳນົດດ້ວຍຕົວຄູສອນເອງ ແລະ ອັນອື່ນອີກ ແມ່ນກຳນົດດ້ວຍເງື່ອນໄຂ ໃນການສິດສອນ. ສອງບັນຫາກ່ຽວກັບການເພີ່ມເງິນເດືອນໃຫ້ຕົງກັບຄວາມຕ້ອງການຂອງຊຸມຊົນຊົນເຜົ່າສ່ວນນ້ອຍ ເຊັ່ນການເພີ່ມເງິນ ໃຫ້ການສິດສອນ ຢູ່ເຂດຫ່າງໄກສອກຫລີກ, ເຂດພູເຂົາ ແລະ ເຂດຫຍຸ້ງຍາກ, ແລະ ເພີ່ມໃຫ້ການ ສິດສອນໃນຫ້ອງລະດັບ 2 ຫລື ລະດັບ 3 ຫລື ຫລາຍລະດັບໃນໂຮງຮຽນທີ່ຫ້ອງຮຽນ ແລະ ຄູສອນ ໜ້ອຍຄົນ.

| | |
|---|---|
| *ການເພີ່ມໃຫ້ບັນດາເຂດທີ່ຫ່າງໄກ* | |
| ເຂດຫ່າງໄກ ແລະ ສອກຫລີກ | 15% ຂອງທັງໝົດ |
| ເຂດຫ່າງໄກ ແລະ ພູເຂົາ | 20% ຂອງທັງໝົດ |
| ເຂດຫ່າງໄກພິເສດ | 25% ຂອງທັງໝົດ |
| *ການເພີ່ມໃຫ້ການສິດສອນ ຫລາຍພາສາ* | |
| ຫ້ອງລະດັບສອງ | 25% ເງິນເດືອນພື້ນຖານ |
| ຫ້ອງລະດັບສາມ | 50% ເງິນເດືອນພື້ນຖານ |

ຄວນຈະໃຊ້ຈ່າຍໃຫ້ຄູເພີ່ມຂຶ້ນບໍ ຖ້າວ່າພາສາຊົນເຜົ່າ ໄດ້ຖືກນຳໃຊ້ເປັນພາສາ ໃນການສິດສອນ? ມີຫລາຍປັດໄຈທີ່ ເອົາມາພິຈາລະນາ ເພື່ອໃຫ້ການນຳໃຊ້ພາສາໃຫ້ເກີດເປັນຈິງ. ໂດຍທົ່ວໄປແລ້ວ ແມ່ນຕ້ອງການນຳໃຊ້ຄູສອນ ທີ່ມາຈາກແຕ່ລະຊຸມຊົນ ຊົນເຜົ່າຕ່າງໆ. ເວັ້ນເສຍແຕ່ ເອົາຄູທີ່ມາຈາກຊຸມຊົນພາສາອື່ນ ທີ່ຮຽນພາສາ ທ້ອງຖິ່ນມາສອນພາສາທ້ອງຖິ່ນ ອາດຈະເປັນໄປໄດ້ (ບໍ່ແມ່ນຂັ້ນ ທົ່ວໄປ, ໂດຍສະເພາະແມ່ນຄວນພິຈາລະນາ ເຂດຫ່າງໄກສອກຫລີກ, ວັດທະນາທຳທີ່ ແຕກຕ່າງກັນ, ແລະ ບໍ່ມີເງິນເດືອນຊຸກຍູ້). ໃນຊຸມປີທີ່ຜ່ານມານີ້ ຈຳນວນຄູຊົນເຜົ່າໄດ້ເພີ່ມຂຶ້ນ ໃນອັດຕາທີ່ສູງກ່ວາຈຳນວນນັກສຶກສາ ຊົນເຜົ່າທີ່ມີຢູ່ (Noonan 2003b). ຕາມປົກກະຕິແລ້ວ "ຫ້ອງຮຽນຫ້ອງໜຶ່ງຕໍ່ຄູຜູ້ໜຶ່ງ" ບັນຫາດັ່ງກ່າວຂອງຊຸມຊົນ ຊົນເຜົ່າສ່ວນນ້ອຍ ແມ່ນບໍ່ມີມູນຄ່າເພີ່ມໃຫ້ ແກ່ເງິນເດືອນຄູສອນ ຖ້າວ່າຄູສອນ ຈາກຊຸມຊົນຖືກຈ້າງເຮັດວຽກ. ໃນຊຸມຊົນ ທີ່ມີຫລາຍຊົນເຜົ່າ, ຖ້າວ່າມີຈຳນວນນັກຮຽນ ຢູ່ໃນແຕ່ລະລະດັບພຽງພໍ(ເຊັ່ນ ຢ່າງໜ້ອຍມີ 2 ຫ້ອງທີ່ໃຫຍ່ພຽງພໍສຳລັບ ແຕ່ລະລະດັບ) ແລະ ມີການແບ່ງຄູຊົນເຜົ່າ ແລະ ນັກຮຽນຊົນເຜົ່າ ໃຫ້ມັນຄ່ອນຂ້າງເທົ່າກັນ, ຈາກນັ້ນ ໃຊ້ພາສາ ຊົນເຜົ່າເຂົ້າໃນການສິດສອນອາດຈະໄດ້ຜົນດ້ວຍການຈ້າງຄູຊົນເຜົ່າ ສອນນັກ ຮຽນຊົນເຜົ່າ. ໃນກໍລະນີນີ້ແມ່ນບໍ່ມີມູນຄ່າ ເງິນເດືອນຄູເພີ່ມໃຫ້ແກ່ການສິດສອນ ພາສາຊົນເຜົ່າ. ຫລາຍໆຊຸມ ຊົນທ້ອງຖິ່ນ ແລະ ພູເຂົາ, ໂດຍສະເພາະຊຸມຊົນຊົນເຜົ່ານ້ອຍທີ່ໂຮງຮຽນປະຖົມ ແມ່ນ ບໍ່ທັນສົມບູນ (ມີໜ້ອຍກ່ວາລະດັບຫ້າ) ມາດຕະການອັນໜຶ່ງເພື່ອຊຸກຍູ້ໃຫ້ມີເຖິງຫ້າລະດັບ ແມ່ນເພີ່ມ ການສິດສອນໃຫ້ມີຫລາຍລະດັບ.

<u>ຮູບ 2: ແບບຕົວຢ່າງຂອງປະສິດທິພາບ ແລະ ຄວາມສະເໝີພາບໃນການພັດທະນາຄູສອນຊົນເຜົ່າ.</u>

| | | | | | |
|---|---|---|---|---|---|
| Multi-lingual classes, low equity<br>5 teachers, 0 ethnic minority | L + M<br>Grade 1 | L + M<br>Grade 2 | L + M<br>Grade 3 | L + M<br>Grade 4 | L + M<br>Grade 5 |
| Mono-lingual classes, high equity<br>5 teachers, 1 ethnic minority | M<br>Grades 1 - 3 | L<br>Grades 1 + 2 | L<br>Grades 2 + 3 | L + M<br>Grade 4 | L + M<br>Grade 5 |
| Multigrade supplement: | 50% | 25% | 25% | | |
| Mono-lingual classes, high equity<br>5 teachers, 2 ethnic minority | M<br>Grades 1 + 2 | L<br>Grades 1 + 2 | M<br>Grades 3 + 4 | L<br>Grades 3 + 4 | L + M<br>Grade 5 |
| Multigrade supplement: | 25% | 25% | 25% | 25% | |

L = Lao students M = Minority students

ໃນບັນດາຊຸມຊົນສາມາດຊຸກຍູ້ ໃຫ້ມີຢ່າງໜ້ອຍໜຶ່ງຫ້ອງຕໍ່ໜຶ່ງລະດັບ, ແບບຕົວຢ່າງທີ່ແຕກຕ່າງ ອັນໜຶ່ງ ຂອງການປັບປຸງຄູສອນແມ່ນສາມາດເຮັດໃຫ້ມີປະສິດທິພາບ ແລະ ຄວາມສະເໝີພາບ ໃນລະດັບທີ່ ແຕກຕ່າງກັນຄືຮູບຕົວຢ່າງທີ່ 2. ຖ້າຢ່າງໜ້ອຍມີຄູສອນໜຶ່ງຄົນ ມາຈາກຊຸມຊົນພາສາ ທ້ອງຖິ່ນ, ການປັບປຸງຫລາຍລະດັບອາດສາມາດນຳໃຊ້ພາສາທ້ອງຖິ່ນ ເຂົ້າໃນການສິດສອນ ໃນລະດັບຕົ້ນ. ການປັບປຸງ ຄືແນວນັ້ນ ຖ້າບໍ່ເຈາະຈິງສະເພາະເຂົ້າໃນການສິດສອນພາສາຊົນເຜົ່າ ແມ່ນບໍ່ມີຄ່າພິເສດ. ຖ້າມີຄູຊົນເຜົ່າພຽງຄົນດຽວ (ນອກຈາກຫ້າ), ການສອນໃນຫລາຍໆລະດັບ ແມ່ນສາມາດໃຫ້ໃຊ້ພາສາຊົນເຜົ່າໃນ ລະດັບ 1-3. ເພື່ອຮັກສາຄວາມດຸ່ນດ່ຽງໃນຂະໜາດຫ້ອງຮຽນ, ນັກຮຽນທີ່ຮຽນດີຄວນມີການກຳນົດ ໃຫ້ຮຽນໃນຫລາຍຫ້ອງດ້ວຍຫລາຍລະດັບ. (1 ແລະ 2) ແລະ (2 ແລະ 3) ເຊັ່ນ ຕົວຢ່າງໃນຮູບທີ 2. (ແຖວກາງ). ອັນນີ້ຄວນມີການເພີ່ມມູນຄ່າ ຂອງການເພີ່ມ ການສອນໃນ 3 ລະດັບ (50% ຂອງເງິນ ເດືອນພື້ນຖານ) ບວກໃສ່ການສອນເພີ່ມສອງລະດັບ

(25% ຂອງເງິນເດືອນພື້ນຖານ). ມູນຄ່າເພີ່ມທັງ ໝົດຄວນເປັນ 50% + 2x25% = 100% ຂອງເງິນເດືອນພື້ນຖານຄູ ຫລື ປະມານ 65-70% ຂອງເງິນ ເດືອນທັງໝົດຂອງຄູສອນຂັ້ນປະຖົມ (Noonan 2003a). ຖ້າມີຄູສອນຊົນເຜົ່າສອງຄົນ ສາມາດອອກແບບຫ້ອງສອນສີ່ຫ້ອງ 2 ລະດັບຕ່າງກັນໂດຍການສອນພາສາຊົນເຜົ່າໃນລະດັບ 1 ຫາ 4. ນີ້ກາຍເປັນມູນຄ່າເພີ່ມ 25% ຂອງແຕ່ລະຫ້ອງໃນ 4 ຫ້ອງ 2 ລະດັບ, ລວມມູນຄ່າທັງໝົດ 4x25% = 100% ຂອງເງິນເດືອນພື້ນຖານຂອງຄູ ຫລື ປະມານ 65-70% ຂອງເງິນເດືອນຄູສອນໂຮງຮຽນປະຖົມຄົນໜຶ່ງ.

## ການຝຶກອົບຮົມຄູ

ເຖິງແມ່ນວ່າພາສາຊົນເຜົ່າສ່ວນນ້ອຍ ໄດ້ໃຊ້ແຜ່ຂະຫຍາຍໄປບ່ອນທີ່ ນັກຮຽນພົບ ຄວາມຫຍຸ້ງຍາກໃນການຮຽນພາສາຊາດ, ຄູສອນຊົນເຜົ່າບໍ່ໄດ້ຮັບການຝຶກອົບຮົມພື້ນຖານແນວຄິດ ແລະ ພື້ນຖານການອ່ານເປັນພາສາຂອງຕົນເອງ. ຈາກນັ້ນ ຊ່ວຍໃຫ້ເດັກນ້ອຍນັກຮຽນຜ່ານຈາກຮຽນພາສາຊົນເຜົ່າໄປຮຽນພາສາຊາດ ໃນລະດັບຕໍ່ໄປ. ນີ້ບໍ່ແມ່ນເຫດຜົນທີ່ຮຽກຮ້ອງໃຫ້ຄູຊົນເຜົ່າໄດ້ຮັບການຝຶກອົບຮົມຫລາຍກ່ວາຈຳນວນມາດຕະຖານ ຂອງການຝຶກອົບຮົມແບບງ່າຍໆ ເພື່ອສອນເປັນພາສາຂອງເຂົາເຈົ້າເອງ. ເພື່ອຕອບສະໜອງໃຫ້ແຜນງານການຝຶກອົບຮົມ ທີ່ມາດຕະຖານກ່ອນການອອກຮັບໃຊ້ ຫລື ໃນການຮັບໃຊ້ໃນການຝຶກອົບຮົມຄູ ແລະ ການລົງທຶນຄືແນວນັ້ນແມ່ນຮຽກຮ້ອງໃຫ້ມີການພັດທະນາ ຫລັກສູດໃຫ້ເໝາະສົມ ເພື່ອການຜະລິດ ແລະ ການຈຳໜ່າຍອຸປະກອນການສິດສອນຕ່າງໆຮັບໃຊ້ໃນການຝຶກອົບຮົມຄູໃນວິທະຍາໄລຝຶກອົບຮົມຄູ ແລະ ໂຮງຮຽນຝຶກອົບຮົມຄູ.

## ວັດຖຸ ແລະ ອຸປະກອນ

ຂໍ້ມູນໃນການໃຊ້ຈ່າຍຊື້ວັດຖຸ ແລະ ອຸປະກອນໃຫ້ໂຮງຮຽນປະຖົມແມ່ນ ມີໜ້ອຍ. ໂຮງຮຽນປະຖົມຊົນນະບົດ ຕາມປົກກະຕິແລ້ວແມ່ນບໍ່ມີອຸປະກອນ ການສິດສອນເລີຍ ຍົກເວັ້ນກະດານດຳ. ໃນພາກປະຕິບັດ, ການໃຊ້ຈ່າຍສ່ວນໃຫຍ່ໃນການຊື້ວັດຖຸ ແລະ ອຸປະກອນການສິດສອນຂັ້ນລະດັບ ປະຖົມ ແມ່ນປຶ້ມຂຽນ. ມູນຄ່າຂອງອຸປະກອນສິດສອນ. ມູນຄ່າຂອງອຸປະກອນການສິດສອນແມ່ນສັບສົນ ແລະ ຕ້ອງການຢາກເຫັນ ໃນບົດອະທິບາຍການຈັດພິມ ອຸປະກອນການສຶກສາ (Bgoya and Noonan et al). ການຈັດພິມຕ້ອງກວມເອົາທັງຂອບເຂດ ກິດຈະກຳຈາກຄວາມຄິດໄປເຖິງ ການຈຳໜ່າຍ. ມູນຄ່າຂອງການຈັດພິມສາມາດ ແບ່ງເປັນມູນຄ່າ ຕາຍຕົວ ແລະ ຄຸນຄ່າປ່ຽນແປງໄດ້. ມູນຄ່າທີ່ເໝາະສົມແມ່ນຄ່າໃຊ້ຈ່າຍທັງໝົດກ່ອນການພິມ (ການຂຽນ, ພາບປະກອບ, ຮູບຖ່າຍ, ການປະກອບ, ການເຮັດ ແມ່ພິມ). ມູນຄ່າປ່ຽນແປງໄດ້ ແມ່ນຂຶ້ນກັບຈຳນວນພິມ. ຫົວໜ່ວຍມູນຄ່າ ແມ່ນຄິດໄລ່ ດ້ວຍການຫານມູນຄ່າທັງໝົດໃຫ້ຈຳນວນເຈັ້ຍທີ່ພິມ.

| *ລາຄາຍ່ອຍ* | *%* |
|---|---|
| ການຜະລິດ(ວັດຖຸດິບ, ການພິມ) | *32* |
| ລຸດລາຄາໃຫ້ຜູ້ ຂາຍປຶ້ມ | *23* |
| ຄ່າການພິມປະຈຳ (ບຸກຄົນ, ການຈັດການ, ການເງິນ, ກຳໄລ) | *16* |
| ຈ່າຍຄ່ານັກປະພັນ (ຄ່າທຳນຽມ) | *11* |
| ການຕະຫລາດ Market ing (ການໂຄສະນາ, ການຂາຍ) | *9* |
| ການຈຳໜ່າຍ | *9* |

(ທີ່ມາ: Bgoya and Noonan et al.)

**ມູນຄ່າການຜະລິດ ແລະ ລະດັບການປະຢັດ**
ລະດັບ ຂອງການ ປະຢັດໂດຍທົ່ວໄປແລ້ວແມ່ນ ເວົ້າເຖິງ ມູນຄ່າການຜະລິດ ແລະ ການຈຳໜ່າຍ. ຈຳນວນພິມ ຫລາຍແຕ່ຫົວໜ່ວຍມູນຄ່າຕ່ຳ. ມູນຄ່າການຜະລິດແມ່ນມູນຄ່າທີ່ໃຫຍ່ທີ່ສຸດ ຂອງມູນຄ່າທັງໝົດ, ຊຶ່ງຕາມທຳມະດາແລ້ວແມ່ນເທົ່າກັບໜຶ່ງສ່ວນສາມຂອງລາຄາຍ່ອຍ. ຖ້າວ່າອຸປະກອນການສອນ ຖືກພິມ ເປັນຫລາຍພາສາ, ແຕ່ລະພາສາສະແດງເຖິງການດຳເນີນ ການຜະລິດອັນໜຶ່ງຂອງຫົວຂໍ້ ເລື່ອງທີ່ໃຫ້ມາ. ການເພີ່ມມູນຄ່າໃນການໃຊ້ຫລາຍພາສາ ລວມທັງການແປ ແລະ ການຜະລິດ. ມູນຄ່າໃນການແປພາສາທີ່ໃຫ້ມານັ້ນແມ່ນມູນຄ່າຕາຍຕົວ ແລະ ມູນຄ່າການຜະລິດແມ່ນສາມາດ ປ່ຽນແປງໄດ້. ຖ້າວ່າອຸປະກອນຖືກຜະລິດຢູ່ຈຸດດຽວ, ມູນຄ່າຈຳໜ່າຍໃຫ້ແກ່ຊຸມຊົນຊົນເຜົ່າສ່ວນ ນ້ອຍສາມາດ ເພີ່ມຂຶ້ນໄດ້ ຕື່ມໜ້ອຍໜຶ່ງອີງຕາມບ່ອນ ທີ່ເຮັດວຽກ, ຖ້າວ່າອຸປະກອນຖືກຜະລິດ ພາຍໃນທ້ອງຖິ່ນນັ້ນ ມູນຄ່າການ ຈຳໜ່າຍກໍ່ຕ່ຳ. ການຜະລິດລະດັບນ້ອຍ ໃນທ້ອງຖິ່ນໂດຍໃຊ້ເຄື່ອງ ພິມນ້ອຍ ອາດສາມາດຈັດພິມຢູ່ບັນດາຮ້ານຢ່າງໜ້ອຍ 12 ຮ້ານອ້ອມແອ້ມຕົວເມືອງ.

<u>**ຮູບທີ 3: ເສັ້ນສະແດງມູນຄ່າລະດັບຂອງການປະຢັດແລະຄ່າສະເລ່ຍ**</u>




**ມູນຄ່າການຜະລິດ: ເທັກໂນໂລຢີທີ່ເໝາະສົມ ແລະ ການຜະລິດຈຳໜ່າຍ**
ມັນມີຂີດຈຳກັດຂອງລະດັບ ການປະຢັດໃນການຜະລິດລວມສູນ. ເສັ້ນສະແດງຫົວໜ່ວຍມູນຄ່າສະເລ່ຍ ສູງຂຶ້ນຮອດຂີດຈຳກັດ ຂອງ ຄວາມສາມາດ(ທັງການຜະລິດ ແລະ ການຈຳໜ່າຍ) ຊຶ່ງສະແດງຢູ່ໃນຮູບທີ 4. ຖ້າວ່າອຸປະກອນ ຖືກຈັດ ພິມຢູ່ບ່ອນດຽວເຖິງແສນສະບັບ, ການຜະລິດລະດັບໃຫຍ່ແມ່ນຕ້ອງການ ຈຳກັດຈຳນວນ ບໍລິສັດພິມ ເພື່ອແກ່ງແຍ່ງ ແລະ ດ້ວຍເຫດນັ້ນຈຶ່ງເປັນການລົດຜູ້ແຂ່ງຂັນ ແລະ ການແຂ່ງຂັນທາງ ດ້ານລາຄາລົງ. ຍິ່ງໄປກ່ວານັ້ນ, ຄວາມຮຽກຮ້ອງຕ້ອງການຂອງການຜະລິດ ໃນລະດັບໃຫຍ່ຢູ່ບ່ອນດຽວ ແມ່ນຕ້ອງ ຕິດພັນກັບສາງມ້ຽນເຄື່ອງທີ່ສະດວກສະບາຍ ແລະ ອຸປະກອນຈຳໜ່າຍ ເຄື່ອງຈຳນວນຫລາຍ, ກັບການ ສົ່ງຕໍ່ການຖືກລັກຂະໂມຍ. ທັງໝົດນີ້ແມ່ນເພີ່ມເຕີມມູນຄ່າໃນການຜະລິດ ແລະ ຈຳຫນ່າຍ. ຖ້າວຽກການພິມໄດ້ຖືກຈຳໜ່າຍ ແລະ ອຸປະກອນໄດ້ຖືກພິມຈຳໜ່າຍໃນຂົງເຂດທີ່ຈຳກັດ, ເທັກໂນໂລຢີນ້ອຍ ແລະ ງ່າຍແມ່ນສາມາດນຳໃຊ້ ແລະ ຈຳນວນຜູ້ແຂ່ງຂັນໃນການຜະລິດ ກໍ່ຈະຫລາຍກ່ວາ. ຖ້າວ່າເທັກໂນໂລຢີ ທີ່ເໝາະສົມໄດ້ຖືກນຳໃຊ້ ຮູບເສັ້ນສະແດງມູນຄ່າ ລວມກໍ່ຈະ ແຕກຕ່າງກັນ ແລະ ຫົວໜ່ວຍມູນຄ່າກໍ່ຈະຕ່ຳກ່ວາທີ່ຢູ່ໃນລຳດັບດຽວກັນ. ຕົວຢ່າງ, ຖ້າວ່າອຸປະກອນຖ່າຍເອກະສານ ລະດັບຕ່ຳ (ເຊັ່ນ: ການພິມ ມີຮອຍເປິະເປື້ອນ), ການຕັ້ງມູນ ຄ່າກໍ່ຈະຄ້ອນຂ້າງຕ່ຳເມື່ອທຽບກັບ ການພິມໃນໂຮງພິມລະດັບໃຫຍ່. ເມື່ອດົນໄປມູນຄ່າອາດຈະສູງຂຶ້ນກວ່າເກົ່າ ແຕ່ວ່າ ຖ້າປະລິມານ ຂອງຄວາມຕ້ອງການໃນການຜະລິດ ອຸປະກອນການສິດສອນ ໄດ້ກຳນົດໃຫ້ໜ້ອຍ ຫົວໜ່ວຍມູນຄ່າ ກໍ່ຈະຕ່ຳລົງ.

## ມູນຄ່າຂອງການພັດທະນາ

ຖ້າວ່າພາສາຊົນເຜົ່າໄດ້ຖືກນຳໃຊ້ເຂົ້າໃນການສິດສອນ ອຸປະກອນທີ່ຕ້ອງການກໍ່ຈະຖືກພັດທະນາຂຶ້ນ. ໃນຫລາຍໆກໍລະນີ, ຄວາມຈຳເປັນໃນການປັບປຸງແປງ ເລັກໜ້ອຍກໍ່ຈະມີ ເພື່ອໃຫ້ໄດ້ອຸປະກອນ ທີ່ເໝາະສົມ, ບາງອຸປະກອນ ຕົວຢ່າງ ປື້ມຫັດອ່ານຂັ້ນພື້ນຖານ ອາດຈຳເປັນຕ້ອງ ໄດ້ມີການປັບປຸງເພີ່ມເຕີມຕື່ມ ໃໝ່ ເພື່ອດັດແປງບົດໃຫ້ເໝາະສົມກັບແຕ່ລະວັດທະນະທຳ.

**ຮູບທີ 4: ມູນຄ່າ....**




## ການດຳເນີນໄປສູ່ການມີປະສິດທິພາບ ແລະ ຄວາມສະເໝີພາບ

ການນຳໃຊ້ຊົນເຜົ່າເຂົ້າໃນການສິດສອນຄວນຈະໄປຄຽງຄູ່ກັບມູນຄ່າການພັດທະນາ, ມູນຄ່າການຜະລິດ ແລະ ການຈຳໜ່າຍ. ມູນຄ່າເຫລົ່ານີ້ ໃຊ້ໃນປື້ມຕຳລາຮຽນ, ປື້ມແນະນຳຄູ, ເຄື່ອງຊ່ວຍການສິດສອນ ແລະ ອຸປະກອນຊ່ວຍອື່ນໆ. ການຜະລິດອຸປະກອນການສິດສອນທີ່ຈຳເປັນບໍ່ແມ່ນວິທີການເຮັດໃຫ້ລາຄາແພງ. ຄວາມຈິງແລ້ວ ການທີ່ ສາມາດປັບປຸ່ງໄດ້ແມ່ນຜົນສຳເລັດ ຂອງການນຳໃຊ້ ເທັກໂນໂລຢີທີ່ຕ່ຳ ໃນການຜະລິດປື້ມ ຕຳລາຮຽນ ໃນລະດັບແຂວງ ແລະ ເມືອງ, ບ່ອນທີ່ອຸປະກອນສາມາດດັດແປງ ຫລື ແກ້ໄຂໄດ້ງ່າຍ. ອັນນີ້ອາດຈະແມ່ນຍຸດທະວິທີທີ່ດີ ໂດຍສະເພາະຢ່າງຍິ່ງ ແມ່ນບ່ອນທີ່ ພົວພັນກັບກຸ່ມນ້ອຍຕ່າງໆ. ກຸ່ມທີ່ຫົວໜ່ວຍ ມູນຄ່າສູງທີ່ສຸດແມ່ນກຸ່ມທີ່ທຳການຜະລິດທີ່ນ້ອຍທີ່ສຸດ, ການໃຊ້ພາສາຊົນເຜົ່າອາດຈະເຮັດໃຫ້ຫົວໜ່ວຍມູນຄ່າສູງຂື້ນຍ້ອນຂະໜາດຂອງການຈັດພິມ. ຍຸດທະວິທີນີ້ ແມ່ນຮຽກຮ້ອງໃຫ້ ຕິດພັນແໜ້ນກັບການປັບປຸງປະສິດທິພາບ ແລະ ຄວາມສະເໝີພາບໃນການກະກຽມ ຮັບໃຊ້ໃຫ້ແກ່ການສຶກສາທີ່ມີຄຸນນະພາບ ແລະ ອື່ນໆ, ໂດຍເລີ່ມຕົ້ນຈາກມູນຄ່າຕ່ຳສຸດ (ບັນດາກຸ່ມ ຊົນເຜົ່າທີ່ໃຫຍ່, ພື້ນຖານພາສາລາວແມ່ນແໜ້ນ ແລະ ນຳໃຊ້ໄດ້ແລ້ວ) ແລະ ຈາກນັ້ນສືບຕໍ່ໄປຫາກຸ່ມ ພາສາ ທີ່ນ້ອຍກ່ວາ ຊຶ່ງແຫລ່ງຕ່າງໆ ໄດ້ກາຍມາເປັນສິ່ງທີ່ພໍຫາໄດ້.

ຈຳນວນທີ່ຢູ່ຂອງກຸ່ມຊົນເຜົ່າ, ຜົນໄດ້ຮັບຕົວຈິງທີ່ເປັນເອກະພາບ ແລະ ມີປະສິດທິພາບ ນັ້ນສາມາດເຮັດໄດ້ໂດຍການເລີ່ມສິດສອນພາສາຂອງກຸ່ມມອນຂະແມ, ໂດຍສະເພາະພາສາຂະມຸ ດັ່ງທີ່ໄດ້ສະແດງໃນຮູບທີ 5. ແນ່ນອນບໍ່ແມ່ນພາສາທັງໝົດຢູ່ໃນກຸ່ມມອນຂະແມເອົາມາສິດສອນ. ການປະເມີນຜົນທີ່ແນ່ນອນວ່າຄວາມແຕກຕ່າງ ອັນໃດສາມາດຮັບໃຊ້ທີ່ຈຳເປັນໃນຊຸມຊົນຂະໜາດໃຫຍ່ ເພື່ອຊຸກຍູ້ສົ່ງເສີມ ການຄົ້ນຄວ້າພາສາສັງຄົມສາດ ແລະ ຖືກຕັດສິນດ້ວຍຕົວຊຸມຊົນເອງ ໂດຍຜ່ານ "ພາສາເຈລະຈາ". ຖ້າວ່າພາສາຂະມຸໄດ້ຖືກນຳໃຊ້ເຂົ້າໃນການສິດສອນ, ເດັກນ້ອຍຢູ່ໃນປະເທດລາວທັງໝົດປະມານ 70-80% ແມ່ນໄດ້ຮັບການສິດສອນດ້ວຍພາສາທີ່ພວກເຂົາເຂົ້າໃຈ. ຖ້າວ່າພາສາມົ້ງໄດ້ຖືກນຳໃຊ້ເຂົ້າ ໃນການສິດສອນ, ເດັກນ້ອຍປະມານ 6-7% ກໍ່ແມ່ນຈະຮັບການສິດສອນດ້ວຍພາສາທີ່ພວກເຂົາ ເຂົ້າໃຈເຊັ່ນກັນ. ນັ້ນແມ່ນການນຳໃຊ້ ສື່ການສອນພຽງແຕ່ສາມຢ່າງທີ່ ແຕກຕ່າງກັນເທົ່ານັ້ນ, ດັ່ງນັ້ນ ເດັກນ້ອຍ ຈະໄດ້ຮັບການສິດສອນດ້ວຍພາສາທີ່ພວກເຂົາເຈົ້າເຂົ້າໃຈປະມານ 90%. ມູນຄ່າອາດຈະ ໜ້ອຍເມື່ອປຽບທຽບກັບການປັບປຸງອັດຕາການເຂົ້າຮ່ວມ ແລະ ການຮ່ຳຮຽນຂອງນັກຮຽນ. ມູນຄ່າ ເຫລົ່ານີ້" ມູນຄ່າເພີ່ມຂຶ້ນ" ແມ່ນໄດ້ສະແດງໃນຮູບທີ 5. ຈຳນວນມູນຄ່າທັງໝົດຂອງການຕອບສະໜອງອຸປະກອນການສິດສອນ ໃຫ້ເດັກນ້ອຍຊົນເຜົ່າລາວ ແມ່ນຖືກສະແດງດ້ວຍ

L1. ມູນຄ່າເພີ່ມໃນ ການຮັບເອົາພາສາມອນຂະແມບໍ່ແມ່ນມູນຄ່າລວມຍອດ ທີ່ສູງຂອງເສັ້ນສະແດງທີ່ L2 ແຕ່ວ່າມີຄວາມ ແຕກຕ່າງ ລະຫວ່າງ M ແລະ L2. ມູນຄ່າຂອງການ ເພີ່ມ ພາສາມົ້ງ ແມ່ນແຕກຕ່າງ ລະຫວ່າງ H ແລະ L3. ຈຳນວນ ເຫລົ່ານີ້ສະແດງ ເຖິງຄວາມແຕກຕ່າງ ລະຫວ່າງ ມູນຄ່າລວມຍອດ ຂອງອຸປະກອນຮັບໃຊ້ພາສາຊົນເຜົ່າ ແລະ ມູນຄ່າຄວນຈະຖືກໃຊ້ຈ່າຍ ຖ້າວ່ານັກຮຽນຊົນເຜົ່າ ໄດ້ຮັບການຕອບສະໜອງ ດ້ວຍອຸປະກອນຂອງລາວ. ອີກຄວາມໝາຍໜຶ່ງ ພວກມັນແມ່ນ ມູນຄ່າຈຳນວນໜ້ອຍໃນການຮັບເອົາພາສາອື່ນ ເຂົ້າໃນການສິດສອນຄວາມແຕກຕ່າງກັນແມ່ນໄປຕາມ ແກນເສັ້ນຕັ້ງ ລະຫວ່າງ L1, L2 ແລະ L3 ທີ່ໄດ້ສະແດງ ການເພີ່ມມູນຄ່າຂອງການ ເພີ່ມອັດຕາການເຂົ້າຮ່ວມເພາະ ການນຳໃຊ້ພື້ນຖານການສຶກສາທົ່ວໄປ ນັ້ນແມ່ນໄດ້ຫຍັບໃກ້ເຂົ້າມາ.

**ຮູບທີ 5: ລວມ**




## ຜົນປະໂຫຍດ

### ການພັດທະນາມະນຸດ ແລະ ຊັບພະຍາກອນມະນຸດ

ລັດຖະບານໄດ້ປະຕິບັດສຳເລັດການໃຫ້ສຶກສາ ຂັ້ນພື້ນຖານທີ່ມີຄຸນນະພາບເພື່ອໝົດທຸກຊົນເຜົ່າ. ໃນຍຸກຂອງການເປີດກວ້າງຕະຫລາດເສດຖະກິດນີ້, ການພັດທະນາມະນຸດ ແມ່ນຮຽກຮ້ອງໃຫ້ປະຊາຊົນທຸກຄົນຢ່າງໜ້ອຍໄດ້ຮຽນຮູ້ຄວາມຄິດທົ່ວໄປ ແລະ ມີຄວາມສາມາດ ອ່ານ, ຂຽນ ແລະ ຄຳນວນໄດ້ ເພື່ອເປັນການເຂົ້າຮ່ວມການສຶກສາໃນລະດັບຊາດ, ໃນຂົງເຂດ ແລະ ໃນສັງຄົມທົ່ວໂລກ. ປະຊາຊົນທຸກຄົນຕ້ອງມີຄວາມສາມາດສະແດງອອກ ເພື່ອເປັນການຕັດສິນ ແລະ ການບັງຄັບຕົນເອງ. ການກົກໜັງສື ແລະ ບໍ່ມີພື້ນຖານການສຶກສາແມ່ນ ອຸປະສັກກີດຂວາງ ໃນການເຂົ້າຮ່ວມການສ້າງເສດຖະກິດນອກຈາກພາຍໃນຄອບຄົວ ແລະ ຊຸມຊົນທ້ອງຖິ່ນ. ການເຮັດໃຫ້ເປັນໜ່ວຍເສດຖະກິດແມ່ນຮຽກຮ້ອງໃຫ້ມີແນວຄວາມຄິດອັນດຽວກັນ, ສາມາດອ່ານອອກຂຽນໄດ້ ແລະ ຄຳນວນຄິດໄລ່ໄດ້. ໃນປະຈຸບັນນີ້ ບໍ່ມີຊາດໃດທີ່ສາມາດຈຳກັດການຂະຫຍາຍໂຕ ຂອງເສດຖະກິດ ໂດຍບໍ່ໄດ້ປະເຊີນໜ້າກັບຄວາມຮຽກຮ້ອງ ທາງດ້ານພື້ນຖານການສຶກສາຂອງພາສາຊົນເຜົ່າສ່ວນນ້ອຍ. ບັນດາຊຸມຊົນທີ່ລວມຢູ່ໃນນັ້ນກໍ່ສາມາດປະກອບສ່ວນ ອຸດໜູນໃຫ້ຕົວພວກເຂົາເອງ ຫລື ບໍ່ກໍ່ເປັນການປະກອບສ່ວນໃຫ້ການພັດທະນາ ແລະ ການເຕີບໂຕຂອງເສດຖະກິດ ແຫ່ງຊາດ.

*ການໃຊ້ພາສາຊົນເຜົ່າເຂົ້າໃນການສິດສອນຕັ້ງແຕ່ລະດັບຕົ້ນ, ອັນນັ້ນ ແມ່ນເພີ່ມການເຂົ້າຮ່ວມ ແລະ ປະກອບສ່ວນໃຫ້ຊົນເຜົ່າມາລວມກັນ ເປັນຊຸມຊົນທີ່ໃຫຍ່ທີ່ມີຫຼາຍຊົນຊາດຊົນເຜົ່າໃນຊາດລາວ.*

**ຍຸດທະວິທີຫລຸດຜ່ອນຄວາມທຸກຈົນ**

ຍຸດທະສາດແຫ່ງການເຕີບໂຕ ແລະ ລຶບລ້າງ ຄວາມທຸກຍາກແຫ່ງຊາດ ມີ 47 ເມືອງທີ່ທຸກຈົນທີ່ສຸດ ແລະ 31 ເມືອງມີຊົນເຜົ່າສ່ວນນ້ອຍຫລາຍກ່ວາ, ອີງຕາມການສຳຫລວດປະຊາກອນໃນປີ1995. ການສິດສອນ ພາສາແມ່ນເປັນບັນຫາ ຕໍ່ເນື່ອງໃນໝູ່ບ້ານຊົນເຜົ່າ. ຫລາຍໝູ່ບ້ານຊົນເຜົ່າສ່ວນນ້ອຍທີ່ບໍ່ໄດ້ເຂົ້າຮ່ວມ ລະບົບການສຶກສາ ຍ້ອນວ່າ ເດັກນ້ອຍຂອງພວກເຂົາບໍ່ເຂົ້າໃຈພາສາລາວ (NSC). ການໃຊ້ພາສາຊົນເຜົ່າ ເຂົ້າໃນການສິດສອນຕັ້ງແຕ່ລະດັບຕົ້ນ ດ້ວຍການສອນ ພື້ນຖານແນວຄິດ, ອ່ານອອກຂຽນໄດ້ ແລະ ຄິດໄລ່ໄດ້ ກ່ອນຍ້າຍໄປຮຽນພາສາລາວ, ອັນນັ້ນແມ່ນເພີ່ມການເຂົ້າຮ່ວມ ແລະ ປະກອບສ່ວນຕໍ່ເສດ ຖະກິດ ສັງຄົມ, ວັດທະນະທຳ ແລະ ມາລວມກັນເປັນຊຸມຊົນທີ່ໃຫຍ່ທີ່ມີຫລາຍຊົນຊາດຊົນເຜົ່າໃນຊາດລາວ.

**ຈາກແຜ່ນດິນທີ່ປິດລ້ອມກ້າວໄປສູ່ແຜ່ນດິນທີ່ເຊື່ອມຕໍ່**

ສ່ວນທີ່ສຳຄັນຂອງຍຸດທະສາດໃນການພັດທະນາຊາດ ແມ່ນຊີ່ງເອົາຄວາມໄດ້ປຽບທາງດ້ານຕຳແໜ່ງພູມີປະເທດຂອງລາວ, "ປະເທດທີ່ຢູ່ລະຫວ່າງກາງ", ດ້ວຍການປ່ຽນຮູບຈາກປະເທດທີ່ລ້ອມຮອບດ້ວຍແຜ່ນດິນເປັນປະເທດທີ່ມີ"ແຜ່ນດິນເຊື່ອມຕໍ່" ໂດຍຜ່ານການລົງທຶນອັນມະຫາສານໃນການສ້າງເສັ້ນທາງ. ການລວມເສດຖະກິດ, ໂດຍຜ່ານການເປີດກວ້າງລາວ ເຂົ້າໄປສູ່ຕະຫລາດ ໃນຂົງເຂດພາກພື້ນ ແລະ ທົ່ວໂລກນັ້ນສາມາດຕອບສະໜອງພື້ນທີ່ໃນການພັດທະນາ ແລະ ການຂະຫຍາຍເສດຖະກິດທີ່ເຂັ້ມແຂງ. ຖ້າວ່າພື້ນຖານຊັບພະຍາກອນມະນຸດຍັງຢູ່ໃນສະພາບ ທີ່ອ່ອນແອ, ປະເທດລາວອາດຈະພົບກັບເຫດການ ທີ່ໃຊ້ຊັບພະຍາກອນຂອງຊາດໝົດໄປ, ສູນເສຍເງື່ອນໄຂທຳການຄ້າກັບເພື່ອນບ້ານ ຂອງຕົນ ແລະ ໃນທີ່ສຸດກໍ່ເຮັດໃຫ້ຊາດທຸກຈົນລົງ, ເຊັ່ນ ລາວສືບຕໍ່ສົ່ງອອກແຮງງານທີ່ບໍ່ມີຄວາມຊຳນິ ຊຳນານ ແລະ ນຳເຂົ້າແຮງງານທີ່ມີຄວາມຊຳນິຊຳນານ, ສົ່ງອອກວັດຖຸດິບ ແລະ ສິນຄ້າທີ່ມີມູນຄ່າຕ່ຳ ແລະ ນຳເຂົ້າສິນຄ້າທີ່ສຳເລັດຮູບ ແລະ ມີມູນຄ່າສູງ. ລາວຄວນຈະຕ້ອງປ່ຽນແປງບູລິມະສິດຂອງຕົນເອງ ແລະ ລົງທຶນເຂົ້າໃນການສຶກສາ ແລະ ການຝຶກອົບຮົມ, ລວມທັງຢູ່ໃນທ້ອງຖິ່ນ ແລະ ເຂດທີ່ຫ່າງໄກ ແລະ ບ່ອນທີ່ຈຳເປັນໃຫ້ຫລາຍ ເພື່ອໃຫ້ການສິດສອນພາສາຊົນເຜົ່າແກ່ໂຮງຮຽນປະຖົມຕັ້ງແຕ່ຕອນຕົ້ນ.

## ດ້ານການເງິນ

ມູນຄ່າຂອງການໃຫ້ການສິດສອນພາສາຊົນເຜົ່າແກ່ໂຮງຮຽນປະຖົມຕັ້ງແຕ່ຕອນຕົ້ນ ຈຳເປັນຈະຕ້ອງມີການປະກອບສ່ວນ. ຖ້າວ່າມີແຜນການ ແລະ ນະໂຍບາຍທີ່ແຈ່ມແຈ້ງ ສະເໜີ ແລະ ປຶກສາຫາລືກັບຊຸມຊົນທີ່ໃຫ້ການບໍລິຈາກ, ການພັດທະນາມູນຄ່າ ແລະ ແມ່ນກະທັ້ງອຸປະກອນການສິດສອນກໍ່ຈະມີມູນຄ່າເພີ່ມຂື້ນເລື້ອຍໆ ທຳອິດອາດຈະໄດ້ຮັບເງິນຈາກທາງນອກ. ໃນທີ່ສຸດ ມູນຄ່າເພີ່ມນັ້ນຈະຕ້ອງໄດ້ຈາກລັດຖະບານ ຍ້ອນວ່າ ມັນບໍ່ມີຄວາມສະເໝີພາບທີ່ຮຽກຮ້ອງໃຫ້ຊຸມຊົນຊົນເຜົ່າສ່ວນນ້ອຍຕ້ອງ

ຈ່າຍໃຫ້ການສຶກສາຂັ້ນພື້ນຖານຫລາຍກວ່າພົນລະເມືອງສ່ວນໃຫຍ່ຈ່າຍ. ບາງມູນຄ່າທີ່ຈຳເປັນຂອງການເຈລະຈາພາສາສັງຄົມສາດ ຄວນຈະລວມທັງຊຸມຊົນຊົນເຜົ່າສ່ວນນ້ອຍເອງ.

**ສະຫລຸບ**

ມູນຄ່າຂອງຄວາມສຳເລັດທາງດ້ານປະສິດຕິພາບ ແລະ ຄວາມສະເໝີພາບ ໃນການເສີມຂະຫຍາຍໂຮງຮຽນປະຖົມ ທີ່ມີຄຸນນະພາບຮັບໃຊ້ໃນກຸ່ມພາສາຊົນເຜົ່າ ແມ່ນຈຸດປະສົງເພື່ອການວິເຄາະທາງດ້ານເສດຖະກິດ. ມູນຄ່າຂອງການລົງທຶນລວມທັງການແປ ແລະ ການດັດແກ້ອຸປະກອນການສອນທີ່ມີຢູ່ສຳລັບ ນຳໃຊ້ໃນຫ້ອງຮຽນ ແລະ ການພັດທະນາຫລັກສູດ ແລະ ອຸປະກອນການສອນເພື່ອນຳໃຊ້ເຂົ້າໃນແຜນ ການບຳລຸງຄູ. ມູນຄ່າໃຫຍ່ທີ່ສຸດແມ່ນເງິນເດືອນຄູສອນ. ໃນບາງສະພາບການ, ການໃຊ້ພາສາຊົນເຜົ່າ ອາດຈະພາໃຫ້ມູນຄ່າເງິນເດືອນຄູສູງ, ແຕ່ວ່າ ຕ້ອງກຳນົດເຫດຜົນ ຈະແຈ້ງຂອງຄູຊົນເຜົ່າຈຶ່ງສາມາດ ເຮັດໃຫ້ມູນຄ່າເຫລົ່ານີ້ນ້ອຍລົງ. ໃນບາງກໍລະນີແມ່ນບໍ່ຕ້ອງເລີຍ. ມູນຄ່າໃຫຍ່ສຸດອັນທີສອງແມ່ນມູນ ຄ່າເພີ່ມໃຫ້ແກ່ການຜະລິດ ແລະ ການຈຳໜ່າຍອຸປະກອນການສອນ ໃນການດຳເນີນວຽກງານນ້ອຍໆ. ມູນຄ່າການຜະລິດແມ່ນ ໜຶ່ງສ່ວນສາມຂອງລາຄາຂາຍ. ແລະ ໂດຍສະເພາະແມ່ນຂະໜາດຂອງການ ຜະລິດທີ່ກຳນົດຫົວໜ່ວຍ ມູນຄ່າສະເລ່ຍ ແລະ ລະດັບຂອງ ເສດຖະກິດ. ການຜະລິດລວມສູນ ແລະ ການຈຳໜ່າຍອຸປະກອນ ການສອນເປັນຫລາຍພາສາ ແມ່ນຕິດພັນກັນຢ່າງສະໜິດແໜ້ນ ແຕ່ການຜະລິດຈຳໜ່າຍທີ່ໃຊ້ລະດັບເທັກໂນໂລຢີ ທີ່ເໝາະສົມ ແມ່ນສາມາດຫລຸດຜ່ອນມູນຄ່າເພີ່ມຂອງການຜະລິດ ແລະ ການຈຳໜ່າຍລົງ. ດ້ວຍການວິເຄາະທີ່ມີເຫດມີຜົນ, ການໃຫ້ຂໍ້ມູນແກ່ຜູ້ທີ່ມີໂອກາດ ຫຸ້ນສ່ວນເລືອກ, ມີແຜນການຜະລິດ ແລະ ການຈຳໜ່າຍທີ່ມີເຫດມີຜົນຈະແຈ້ງ, ລະດັບຂອງປະສິດທິພາບ ແລະ ຄວາມສະເໝີພາບ ສູງແມ່ນສາມາດເຮັດໃຫ້ສຳເລັດຜົນ ໂດຍປາສະຈາກການເພີ່ມມູນຄ່າທີ່ໃຫຍ່ໂຕ.

ຜົນປະໂຫຍດຂອງການນຳໃຊ້ພາສາ ຊົນເຜົ່າເຂົ້າໃນການສິດສອນ ໃນບ່ອນທີ່ຈຳເປັນແມ່ນການປັບປຸງ ການພັດທະນາຄົນ ແລະ ການພັດທະນາຊັບພະຍາກອນມະນຸດ. ການເຕົ້າລວມ ເສດຖະກິດຈະເປັນການອຸດໜູນສິ່ງເສີມ ໃຫ້ເສດຖະກິດຂະຫຍາຍໂຕ ແລະ ພັດທະນາພຽງແຕ່ ພື້ນຖານຊັບພະຍາກອນມະນຸດ ໃຫ້ໄດ້ຮັບການ ປັບປຸງທົ່ວທຸກຄົນ. ສປປ ລາວຄວນ ເອົາໃຈໃສ່ຕໍ່ພື້ນຖານການສຶກສາ ທີ່ຈຳເປັນຂອງຊາວຊົນເຜົ່າ.

**<u>ກ່ຽວກັບຜູ້ຂຽນ</u>**

ລິຊາດ ນູນານ ນັກເສດຖະສາດການສຶກສາ ທີ່ປຶກສາອາວຸໂສ ໃນພາກການລົງທຶນຢູ່ກະຊວງສຶກສາ. ໂຄງຮ່າງໃນເມື່ອກ່ອນຂອງເອກະສານສະບັບນີ້ ແມ່ນໄດ້ສະເໜີຕໍ່ອົງການ UNICEF "ທີ່ປຶກສາ ຂໍ້ມູນກ່ຽວກັບບັນຫາພາສາຊົນເຜົ່າ ແລະ ສິ່ງທ້າທາຍ", ວຽງຈັນ, ວັນທີ 31 ເດືອນຕຸລາ ປີ 2003. ນັກປະພັນຂໍສະແດງຄວາມຮູ້ບຸນຄຸນຕໍ່ທ່ານ James R. Chamberlain and Pamela Sue Wright ທີ່ໃຫ້ ຄວາມຮູ້ ແລະ ຄວາມເຂົ້າໃຈຄວາມໝາຍ ກ່ຽວກັບບັນຫາໃນການຮຽນ ແລະ ການສອນພາສາທີ່ເດັກນ້ອຍຊົນເຜົ່າໄດ້ປະເຊີນ ແລະ ທ່ານ Laetitia van Haren ທີ່ໄດ້ໃຫ້ຄຳແນະນຳ ໃຫ້ຄຳປຶກສາ"ທີ່ມີຄຸນຄ່າກ່ຽວກັບໂຄງຮ່າງ.

## ເອກະສານອ້າງອີງ


Bgoya and Noonan et al. *ເສດຖະກິດກ່ຽວກັບການພິມໂຄສະນາອຸປະກອນການສຶກສາໃນອາຟຣິກາ.* ເບິ່ງໃນພາກທີ່ 7, "ຮູບແບບການຊື້ ແລະ ເງິນກອງທຶນ", ສາມະຄົມເພື່ອການພັດທະນາການສຶກສາໃນອາຟຣິກາ, ລອນດອນ, 1996.

Chamberlain, J.R. and Phomsombath, P. ການຫຼຸດຜ່ອນຄວາມທຸກຈົນເພື່ອໝົດທຸກຄົນ: ຄວາມອາດສາມາດ ແລະ ທາງເລືອກຂອງປະຊາຊົນເຂດພູສູງ. Pp 54-65. ສະຖານທູດສະວີເດັນ, ທີ່ວຽງຈັນ, 2002.

Chamberlain, J.R. ການປະເມີນຜົນກ່ຽວກັບຄວາມອາດສາມາດທາງດ້ານເສດຖະກິດ ແລະ ການປຽບທຽບກັບຜົນທີ່ໄດ້ຮັບຂອງກຸ່ມຊົນເຜົ່າສ່ວນນ້ອຍໃນ ສປປ ລາວ. pp. 14-28 ADB. ທີ່ວຽງຈັນ, ວັນທີ 15, ເດືອນພະຈິກ, ປີ 2002.

Gannicott, K. *ເງິນທຶນໃນການສຶກສາໃນ ສປປ ລາວ: ຜົນໄດ້ຮັບທີ່ຄຸ້ມຄ່າ, ຄວາມເທງກົວຕໍ່ສິ່ງທ້າທາຍ*, ຕາຕະລາງ B.2. ໂຄງຮ່າງບົດລາຍງານ,. MOE/DTT, ວຽງຈັນ 2003.

Noonan, R. *ເງິນທຶນໃນການສຶກສາໃນ ສປປ ລາວ: ພາກ I. ຮູບແບບການໃຊ້ຈ່າຍໃນທົດສະວັດ ທີ່ຮີບຮ້ອນໃນການຫັນປ່ຽນ (1990 – 2000. ອົງການຊີດາ/ທະນາຄານໂລກ, ສະຕອກໂຮມ, 2001.*

Noonan, R. *ເງິນເດືອນຄູສອນໃນປີ 2001/2002: ການວິເຄາະກ່ຽວກັບລະດັບຂອງເງິນເດືອນຄູສອນ, ການເພີ່ມເງິນເດືອນ ແລະ ລະດັບພາສາລາຍໄດ້ ທີ່ກ່ຽວຂ້ອງໂດຍກົງຕໍ່ຄູສອນຂັ້ນປະຖົມ* MOE/DPC. *ວຽງຈັນ, 2003.*

Noonan, R. *ທ່າອີງອັນໃໝ່ໃນການຕອບສະໜອງໃຫ້ແກ່ຄູສອນຂັ້ນປະຖົມ ແລະ ມັດທະຍົມໃນ ສປປ ລາວ: ຄວາມກ້າວໜ້າ ແລະ ບັນຫາໃນຊຸມປີ 1999/2000 – 2001/2002.* MOE/DPC. *ວຽງຈັນ 2003* b.

NSC. *ການເຂົ້າຮ່ວມການຄົ້ນຄ້ວາກ່ຽວກັບການປະເມີນຄຸນຄ່າຄວາມທຸກຈົນ.* ສູນສະຖິຕິແຫ່ງຊາດ. ວຽງຈັນ 2002.

SIL International. *Ethnologue* website at: http://www.ethnologue.com/, and especially http://www.ethnologue.com/show_map.asp?name=Laos. 2004.

Stroud, Christopher. '*ເພື່ອນະໂຍບາຍການສຶກສາສອງພາສາໃນປະເທດທີ່ກຳລັງພັດທະນາ". ພະແນກເອກະສານການສຶກສາໃໝ່ No. 10. ຊີດາ/ສະຕອກໂຮມ, 2002."*

UNESCO. *ການສຶກສາໃນໂລກຫລາຍພາສາ. ເອກະສານກ່ຽວຕຳແໜ່ງການສຶກສາ. ປາລີ,* 2003.

# ຢູ່ຮ່ວມກັນໂດຍສັນຕິ: ຂໍ້ຂັດແຍ້ງລະຫວ່າງຄົນ ແລະ ຊ້າງ ແລະ ຄວາມອາດສາມາດໃນການແກ້ໄຂບັນຫາ

ໂດຍ Arlyne Johnson, Khamkhoune Khounboline, Thaibault Ledecq, and Roland Eve

*ຂໍ້ຂັດແຍ້ງທີ່ເກີດຂຶ້ນລະຫວ່າງຄົນ ແລະ ຊ້າງ, ລວມມີການທຳລາຍເຄື່ອງປູກ, ການທຳຮ້າຍຜູ້ຄົນ ແລະ ບາງທີກໍ່ມີຊ້າງຕາຍ ຫຼືຄົນຕາຍໄປຝ່າຍໃດຝ່າຍໜຶ່ງ, ຊຶ່ງນັບມື້ນັບເພີ່ມຂຶ້ນໃນສປປລາວ. ບັນຫາດັ່ງກ່າວນີ້ມັນໄດ້ພົວພັນເຖິງການຫຼຸດຜ່ອນຄວາມທຸກຈົນ ແລະ ການຄຸ້ມຄອງສັດປ່າ. ການສຶກສາຂັ້ນພື້ນຖານນີ້ໄດ້ຄາດຄະເນເບິ່ງຂອບເຂດ ແລະ ຄວາມຮຸນແຮງຂອງຂໍ້ຂັດແຍ້ງທີ່ເກີດຂຶ້ນຢູ່ເມືອງນາກາຍ, ແຂວງຄຳມ່ວນ ແລະ ສົມທຽບຜົນໄດ້ຮັບຈາກເມືອງນາກາຍກັບບົດລາຍງານຈາກທົ່ວປະເທດ. ຄຳແນະນຳໃນເອກະສານສະບັບນີ້ໄດ້ຖືກຮ່າງຂຶ້ນມາເພື່ອສະເໜີຕໍ່ໂຄງການແຫ່ງຊາດເພື່ອການຄຸ້ມຄອງຊ້າງ ແລະ ການດຳລົງຊີວິດຮ່ວມກັນແບບຍືນຍົງ, ຊຶ່ງຫວັງເປັນຢ່າງຍິ່ງວ່າຈະຖືກຮັບຮອງເອົາເປັນນະໂຍບາຍຂອງລັດຖະບານ.*

## ພາກສະເໜີ

ໃນອະດີດທີ່ຜ່ານມາ ໄດ້ມີການພັນລະນາວ່າປະເທດລາວເຮົາເປັນປະເທດລ້ານຊ້າງ ຊຶ່ງໝາຍຄວາມວ່າເປັນດິນແດນທີ່ມີຊ້າງອາໄສຢູ່ນັບລ້ານໂຕ, ສປປ ລາວ ມີວັດທະນະທຳ ແລະ ຮີດຄອງປະເພນີ ທີ່ສວຍສົດງົດງາມນີ້ໄດ້ສ່ວນໜຶ່ງ ແມ່ນຍ້ອນຊ້າງອາຊີມີບົດບາດສຳຄັນໃນດ້ານນີ້. ປະເທດລາວຖືວ່າແມ່ນປະເທດໜຶ່ງ ທີ່ມີອຸດສະຫະກຳການທ່ອງທ່ຽວຂະຫຍາຍຕົວໄວທີ່ສຸດໃນໂລກ, ທີ່ມີການທ່ຽວຊົມ ສັດປ່າເປັນລາຍການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມສູງສຸດໃນບັນຊີຂອງນັກທ່ອງທ່ຽວສາກົນ (WTO 2002). ເຖິງແນວໃດກໍ່ຕາມ, ຈຳນວນຊ້າງແມ່ນຫຼຸດລົງຫຼາຍຈາກຈຳນວນທີ່ເຄີຍມີໃນອະດີດ ແລະ ເປັນທີ່ຍອມຮັບໂດຍທົ່ວໄປວ່າຊ້າງຫຼາຍຊະນິດ(ພັນ) ໃນທົ່ວໂລກ "ໃກ້ຈະສູນພັນ", ໝາຍຄວາມວ່າພວກມັນກຳລັງປະເຊີນກັບຄວາມສ່ຽງສູງໃນການສູນພັນໃນອະນາຄົດອັນໃກ້ນີ້ (IUCN 2004)

ຊ້າງປ່າຍັງຄົງຖືກລົບກວນຢ່າງຫຼວງຫຼາຍໃນທົ່ວປະເທດລາວ ແລະ ບາງພື້ນທີ່ກໍ່ຍັງຄົງມີຊ້າງຢູ່ຂ້ອນຂ້າງຫຼາຍ (Duckworth et al. 1999). ເຖິງແນວໃດກໍ່ຕາມ, ຂໍ້ຂັດແຍ້ງທີ່ເກີດຂຶ້ນລະຫວ່າງຄົນ ແລະ ຊ້າງ, ລວມມີການທຳລາຍເຄືອງປູກ, ການທຳຮ້າຍຜູ້ຄົນ ແລະ ບາງທີກໍ່ມີຊ້າງຕາຍ ຫຼືຄົນຕາຍໄປຝ່າຍໃດຝ່າຍໜຶ່ງ ຊຶ່ງນັບມື້ນັບເພີ່ມຂຶ້ນ (FAO 2002). ຂໍ້ຂັດແຍ້ງທີ່ເພີ່ມຂຶ້ນນີ້ ມັນໄດ້ພົວພັນເຖິງການຫຼຸດຜ່ອນຄວາມທຸກຈົນໃນເຂດຊົນນະບົດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງພັນສັດປ່າທີ່ໃກ້ຈະສູນພັນ. ຄຸນຄ່າທາງດ້ານນິເວດວິທະຍາ, ເສດຖະກິດ ແລະ ວັດທະນະທຳທີ່ມີຢ່າງມະຫາສານຂອງຊ້າງໃນສປປລາວ ສົມຄວນໄດ້ຮັບການສຶກສາຄົ້ນຄວ້າເພື່ອຫາທາງແກ້ໄຂຂໍ້ຂັດແຍ້ງທີ່ເກີດຂຶ້ນ.

ໂດຍສະຫຼຸບແລ້ວ, ມີຂໍ້ມູນໜ້ອຍຫຼາຍກ່ຽວກັບຈຳນວນຊ້າງ, ການຈຳແນກຕົ້ນປາຍສາຍເຫດຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ, ຜົນກະທົບທີ່ແທ້ຈິງຈາກຂໍ້ຂັດແຍ້ງເຫຼົ່ານີ້ ຫຼື ຜົນກະທົບທາງດ້ານເສດຖະກິດ ທັງໃນລະດັບທ້ອງຖິ່ນ, ເມືອງ, ແຂວງ ແລະ ລະດັບຊາດ (FAO 2002). ຍ້ອນຂາດຂໍ້ມູນຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກສັບສົນ ໃນການຮ່າງນະໂຍບາຍຂອງລັດ ຫຼືຄຳແນະນຳຕ່າງໆ ທີ່ເປັນລະບົບເພື່ອຮັບມືກັບສະພາບຂໍ້ຂັດແຍ້ງຕ່າງໆ ແລະ ຜົນກະທົບທາງດ້ານເສດຖະກິດສັງຄົມ. ຄວາມສຳຄັນໃນການພັດທະນາຄຳແນະນຳຕ່າງໆ ແມ່ນສອດຄ້ອງກັບເງື່ອນໄຂທຳມະຊາດ ຂອງການພັດທະນາທີ່ແນະນຳໂດຍ ຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES), ຊຶ່ງມີສາມຫຼັກໝັ້ນຄື - ການຂະຫຍາຍຕົວທາງດ້ານເສດຖະກິດ, ການພັດທະນາວັດທະນະທຳ/ສັງຄົມ ແລະ ການຄຸ້ມຄອງຊັບພະຍາກອນໃນດ້ານຂອງລະບົບນິເວດ - ສະໜັບສະໜູນເຊິ່ງກັນ ແລະ ກັນດ້ວຍວິທີການທີ່ສົມດຸນເພື່ອຫຼຸດຜ່ອນຄວາມທຸກຈົນ (GoL 2004).

ເພື່ອກຳນົດຄວາມຕ້ອງການຈຳນວນຂໍ້ມູນ ກ່ຽວກັບຂໍ້ຂັດແຍ້ງຂອງຄົນ ກັບຊ້າງເພື່ອເປັນທິດທາງໃຫ້ແກ່ນະໂຍບາຍຂອງລັດ, ການສຶກສາຄົ້ນຄວ້າຂັ້ນພື້ນຖານນີ້ ໄດ້ສະເໜີຜົນທີ່ໄດ້ຮັບ ຈາກການຄາດຄະເນ ເບິ່ງຂອບເຂດ ແລະ ຄວາມຮຸນແຮງຂອງຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ ແລະ ຜົນກະທົບຕໍ່ຄົນ ແລະ ຊ້າງທີ່ຕາມມາ ຢູ່ໃນເມືອງນາກາຍ, ແຂວງຄຳມ່ວນ. ເອກະສານນີ້ໄດ້ສົມທຽບຜົນທີ່ໄດ້ຮັບຈາກກໍລະນີເມືອງນາກາຍ ແລະ ບົດລາຍງານທີ່ມາຈາກທົ່ວປະເທດ ແລະ ຍັງໄດ້ສະເໜີຄຳແນະນຳ ບາງຢ່າງ, ທີ່ຮ່າງຂຶ້ນມາເພື່ອສະເໜີຕໍ່ໂຄງການແຫ່ງຊາດເພື່ອການຄຸ້ມຄອງຊ້າງ ແລະ ການດຳລົງຊີວິດຮ່ວມກັນແບບຍືນຍົງ ໃນສປປລາວ (FAO 2003)., ທີ່ວາງເປົ້າໝາຍເພື່ອ 1)ປັບປຸງເງື່ອນໄຂຊີວິດ ການເປັນຢູ່ ແລະ ພັດທະນາເສດຖະກິດສັງຄົມຂອງປະຊາຊົນ ພາຍໃນທ້ອງຖິ່ນທີ່ຢູ່ຮ່ວມກັບຊ້າງ; 2)ຊຸກຍູ້ສົ່ງເສີມໃຫ້ອະນຸລັກ ແລະ ຄຸ້ມຄອງປ່າໄມ້ ຕະຫຼອດຮອດຊັບພະຍາກອນທີ່ເປັນສິ່ງທີ່ມີຊີວິດຕ່າງໆແບບຍືນຍົງ ໃນດ້ານຂອງພູມມີປະເທດທີ່ຊ້າງອາໄສ; ແລະ 3) ຮັບປະກັນໃນການຄຸ້ມຄອງ ປະຊາກອນຊ້າງອາຊີທີ່ມີຢູ່ພາຍໃນປະເທດໃຫ້ໄດ້ຮັບຜົນ.

**ຮູບທີ່ 1 ຄວາມຮູ້ກ່ຽວກັບການແຍກປະເພດຊ້າງອາຊີ(ສາມຫຼ່ຽມສີດຳ) ແລະ ພື້ນທີ່ທີ່ມີການລາຍງານຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ(ຈຸດສີແດງທີ່ຢູ່ໃກ້ກັບເຂດປ່າສະຫງວນແຫ່ງຊາດ (ພື້ນທີ່ສີຂຽວ)ຂອງ ສປປ ລາວ (ແຫຼ່ງຂໍ້ມູນ: FAO 2002). ບ້ານທ່າລາງແມ່ນພື້ນທີ່ສຶກສາຄົ້ນຄວ້າ ທີ່ນອນຢູ່ໃນເຂດແຄມນ້ຳເທີນລະຫວ່າງນ້ຳເທີນເມືອງນາກາຍ ແລະ ພູຫີນປູນ NPAs (ໝາຍຂວ່າຍສີດຳ).**



*ຊ້າງອາຊີມີລັກສະນະສະເພາະຂອງມັນ, ເປັນສັດປ່າພຽງຊະນິດດຽວທີ່ສາມາດນຳມາຝຶກແອບໄດ້, ຫຼັງຈາກຝຶກແອບໄດ້ສອງສາມເດືອນແລ້ວ, ມັນກໍ່ຈະເຊື່ອຟັງເຈົ້າ ຂອງມັນດ້ວຍຄວາມອົດທົນ ແລະ ເຂົ້າໃຈ. ມັນໄດ້ປະກອບສ່ວນເຂົ້າໃນດ້ານສາດສະໜາ, ວັດທະນະທຳ ແລະ ການເຄື່ອນໄຫວຂອງສັງຄົມ, ສູງສົ່ງ ແລະ ສະຫງ່າງາມໃນທຸກວາລະໂອກາດຄ້າຍຄືກັນກັບວ່າມັນໄດ້ຮຽນຮູ້ທຸກສິ່ງທຸກຢ່າງໃນປ່າມາກ່ອນແລ້ວ. ຄວາມເຊື່ອຖື ແລະ ວັດທະນະທຳຂອງບັນດາປະເທດອາຊີເອງກໍ່ອຸດົມສົມບູນໄປດ້ວຍບົດເລື່ອງ ແລະ ປະຫວັດຄວາມເປັນມາ ທີ່ສັນລະເສີນໃຫ້ຊ້າງເປັນສັດທີ່ສະຫຼາດລ້ຳເລີດ ຊຶ່ງເຮັດໃຫ້ມັນສາມາດຢູ່ຮ່ວມກັບຄົນໄດ້ ແຕ່ກໍ່ບໍ່ເຊື່ອຟັງຕາມຄຳສອນຂອງຄົນທຸກຢ່າງ.*

*ຄວາມສຳພັນອັນແໜ້ນແຟ້ນລະຫວ່າງຄົນ ແລະ ຊ້າງໃນເຂດອາຊີ ຕັ້ງແຕ່ບູຮານ ໄດ້ກາຍເປັນແຮງຊຸກຍູ້ ໃຫ້ລັດຖະບານ, ຜູ້ວາງນະໂຍບາຍ ແລະ ມວນຊົນໂດຍທົ່ວໄປ ໃນການອະນຸລັກ. ພວກເຂົາມີສະຕິພໍທີ່ຈະບໍ່ທຳລາຍອະນາຄົດຂອງສັດທີ່ແສນໜ້າຮັກນີ້, ສະນັ້ນມັນຈຶ່ງຂຶ້ນຢູ່ກັບນັກອະນຸລັກທີ່ຈະເປັນຜູ້ຖ່າຍທອດຄວາມຮູ້ສຶກນີ້ເພື່ອມອບໝາຍໃຫ້ທາງຂັ້ນເທິງ ແລະ ນັກວາງແຜນການໄດ້ປົກປັກຮັກສາອະນາຄົດນັ້ນ. ໂດຍທົ່ວໄປແຜນການທີ່ດີທີ່ສຸດທີ່ວາງໄວ້ເພື່ອການອະນຸລັກນັ້ນກໍ່ອາດຈະບໍ່ມີຄວາມໝາຍຫຍັງ ຖ້າຫາກບໍ່ມີແຈ້ງການຈາກຂັ້ນເທິງລົງມາຈັດຕັ້ງປະຕິບັດ. ການມອບໝາຍວຽກງານນີ້ກໍ່ອາດຈະໄດ້ຮັບຜົນດີຖ້າພວກເຮົາສະໜອງແນວທາງທີ່ໜ້າສົນໃຈໃຫ້ທາງຂັ້ນເທິງ, ສົມທົບກັບຈຳນວນຂໍ້ມູນ, ທີ່ແທດເໝາະ ແລະ ແຂງແຮງ ໂດຍຜ່ານການທົດລອງ ວິທີການແກ້ໄຂໃນພາກປະຕິບັດ ຊຶ່ງພວກເຂົາສາມາດນຳໃຊ້ໄດ້ໂດຍທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ແຜນພັດທະນາເສດຖະກິດແຫ່ງຊາດ.*

ຈາກບົດສະເໜີຂອງແຜນປະຕິບັດຕໍ່ຊ້າງອາຊີ (Santiapillai and Jackson, 1990)

## ພື້ນທີ່ສຶກສາຄົ້ນຄວ້າ ແລະ ວິທີການ

### ບ້ານທ່າລາງ, ເມືອງນາກາຍ

ການສຶກສາຄົ້ນຄວ້າປະຕິບັດຢູ່ທົ່ວເຂດບ້ານທ່າລາງ ແຕ່ເດືອນກຸມພາປີ 2001 ໄປຫາເດືອນເມສາປີ 2002(ຊຸນບູລົມ 2002). ບ້ານທ່າລາງຕັ້ງຢູ່ພາຍໃນພື້ນທີ່ເຂດສະຫງວນລຽບຕາມນ້ຳເທີນ (738 km²), ເຊື່ອມຕໍ່ນາກາຍ-ນ້ຳເທີນກັບປ່າສະຫງວນແຫ່ງຊາດພູຫີນປູນ (NPAs). ພື້ນທີ່ດັ່ງກ່າວນີ້ແມ່ນໜຶ່ງໃນສອງບ່ອນທີ່ມີປະຊາກອນຊ້າງຫຼາຍທີ່ສຸດໃນປະເທດ (Duckworth et al. 1999). ບ້ານທ່າລາງປະກອບດ້ວຍ 68 ຫຼັງຄາເຮືອນ, ມີພົນລະເມືອງ 310 ຄົນອາໄສຢູ່ກະແຈກກະຈາຍ, ສ່ວນຫຼາຍແມ່ນຄົນຊົນເຜົ່າເໝີ້ຍ, ເຮັດໄຮ່ເລື່ອນລອຍ (ປະມານໜຶ່ງເຮັກຕາຕໍ່ໜຶ່ງຄອບຄົວ) ຊຶ່ງຂະຫຍາຍ ວົງກວ້າງອອກໃນເຂດປ່າໄຜ່ ແລະ ປ່າຟຸ່ມອ້ອມແອ້ມເຂດໝູ່ບ້ານ ແລະ ຈະນຳໃຊ້ດິນເປັນເວລາໜຶ່ງ ຫຼື ສອງປີກ່ອນຈະໄປສັບຊ່າວພື້ນທີ່ບ່ອນໃໝ່ເພື່ອທຳການຜະລິດ. ຊາວກະສິກອນຈູດ ແລະ ມ້ຽນໄຮ່ໃນເດືອນມີນາ, ປູກໃນເດືອນເມສາ, ແລະ ເກັບກ່ຽວໃນເດືອນຕຸລາ ຫຼື ເດືອນພະຈິກ. ຍ້ອນມີພົນລະເມືອງເພີ່ມຂຶ້ນໃນເຂດພູພຽງຈຶ່ງພາໃຫ້ຂາດແຄນອາຫານໃນແຕ່ລະປີ ແລະ ການຊົມໃຊ້ປ່າໄມ້ກໍ່ຫຼາຍເກີນຂອບເຂດ (NTEC 2002). ເມືອງນາກາຍຖືວ່າແມ່ນໜຶ່ງ ໃນເມືອງທີ່ທຸກຈົນກວ່າ ໝູ່ໃນປະເທດ (NGPES 2004).

## ວິທີການ

ເພື່ອກໍານົດຂອບເຂດ ແລະ ປະເພດຂອງການປູກຝັງຢູ່ໃນພື້ນທີ່ສຶກສາຄົ້ນຄວ້າ, ຈຶ່ງໄດ້ມີການລົງຢ້ຽມຢາມແຕ່ລະພື້ນທີ່ເພື່ອບັນທຶກຂໍ້ມູນກ່ຽວກັບສະຖານທີ່, ຊະນິດພືດທີ່ປູກ ແລະ ຊື່ຂອງຊາວກະສິກອນຜູ້ທີ່ນໍາໃຊ້ດິນ. ຊາວກະສິກອນຖືກຊັກຖາມໃຫ້ລາຍງານກ່ຽວກັບເຄື່ອງປູກທີ່ ຊ້າງພະຍາຍາມທໍາລາຍ ຫຼື ທໍາລາຍຈົນໝົດ, ສະນັ້ນຈຶ່ງສາມາດປະເມີນຜົນເສຍຫາຍໄດ້. ເມື່ອໄຮ່ນາຂອງເຂົາເຈົ້າຖືກທໍາລາຍ, ຈຶ່ງໄດ້ມີຂໍ້ກໍານົດ ເພື່ອປະເມີນຜົນຄວາມເສຍຫາຍທີ່ໄດ້ມາດຕະຖານ (ດັດແກ້ມາຈາກ O'Brien et al. 2000) ຊຶ່ງໃຊ້ເປັນແຜນທີ່ຊີ້ບອກຜົນເສຍຫາຍ ແລະ ການຄາດຄະເນເບິ່ງຂອບເຂດ ແລະ ມູນຄ່າຄິດເປັນເງິນທີ່ຊາວກະສິກອນສູນເສຍໄປ. ມູນຄ່າການສູນເສຍເຂົ້າແມ່ນຖືກຄິດໄລ່ຕາມສະຖິຕິຜົນຜະລິດຂອງເຂົ້າໄຮ່ພາຍໃນແຂວງຄໍາມ່ວນເທົ່ານັ້ນ (LaoIRRI 2002).

ທາງບ້ານໄດ້ລາຍງານເຖິງນິດໄສທີ່ໂຫດຮ້າຍຂອງຊ້າງທີ່ມີຕໍ່ຄົນ ຫຼື ກໍລະນີຂອງຄົນທີ່ຂ້າຊ້າງຢູ່ໃນຫຼືໃກ້ກັບເຂດແດນຂອງພື້ນທີ່ສຶກສາຄົ້ນຄວ້າ ກໍ່ໄດ້ຖືກບັນທຶກໄວ້ເຊັ່ນກັນ, ພ້ອມກັບລົງໄປຢ້ຽມຢາມບ່ອນທີ່ຖືກທໍາຮ້າຍເພື່ອພິສູດຄວາມຈິງ ແລະ ເກັບກໍາຂໍ້ມູນ. ການຄິດໄລ່ເບິ່ງຄວາມເສຍຫາຍຂອງເຄື່ອງປູກທີ່ຖືກຊ້າງທໍາລາຍ, ການທໍາຮ້າຍຜູ້ຄົນຂອງຊ້າງ ແລະ ການຂ້າຊ້າງໃນບ້ານທ່າລາງແມ່ນນໍາມາລົມທຽບກັບບົດລາຍງານຂອງຊາວກະສິກອນໃນຫຼາຍປີທີ່ຜ່ານມາ, ຈາກບ້ານໃກ້ຄຽງ ແລະ ພື້ນທີ່ອື່ນໆໃນປະເທດລາວທີ່ມີຂໍ້ຂັດແຍ້ງກັນລະຫວ່າງຄົນກັບຊ້າງ.

## ຜົນທີ່ໄດ້ຮັບ

**<u>ຮູບ 2. ພື້ນທີ່ປູກຝັງ ແລະ ເຄື່ອງປູກທີ່ຖືກຊ້າງທໍາລາຍໃນບ້ານທ່າລາງໃນປີ 2001 (ແຫຼ່ງຂໍ້ມູນ: ຊຸນບູລົມ 2002).</u>**

ແຜນທີ່ໄດ້ສະແດງໃຫ້ເຫັນພື້ນທີ່ປູກຝັງທີ່ຢູ່ໃກ້ກັບບ້ານ (ໝາຍຂວ່າຍສີດໍາ) ແລະ ແມ່ນໍ້າສາຍສໍາຄັນ. ຂະໜາດຂອງພື້ນທີ່ບໍ່ໄດ້ກໍານົດໃນແຜນທີ່. ພື້ນທີ່ ທີ່ໝາຍສີຂາວນັ້ນແມ່ນບໍ່ຖືກທໍາລາຍ. ສ່ວນທີ່ເປັນສີດໍານັ້ນແມ່ນຖືກທໍາລາຍ ແຕ່ຊາວກະສິກອນສາມາດປ້ອງກັນໄດ້. ພື້ນທີ່ສີເທົາແມ່ນຖືກທໍາລາຍ ແລະ ເຄື່ອງປູກກໍ່ເສຍຫາຍ.



## ການທຳລາຍເຄື່ອງປູກ

ທັງໝົດ 43 ຫຼັງຄາເຮືອນມີພື້ນທີ່ການຜະລິດ 21 ແຫ່ງ ໃນເຂດອ້ອມແອ້ມບ້ານທ່າລາງໃນໄລຍະທີ່ທຳການສຶກສາຄົ້ນຄວ້າ. 49% ຂອງຄອບຄົວທັງໝົດລາຍງານວ່າຊ້າງໄດ້ພະຍາຍາມທຳລາຍເຄື່ອງປູກ, ຊຶ່ງລວມທັງທຸກພື້ນທີ່ ທີ່ມີສວນກ້ວຍ (n=2) ແລະ 47% ຂອງພື້ນທີ່ນາເຂົ້າ (n=19) ຂອງຄອບຄົວທີ່ປະສົບກັບການພະຍາຍາມທຳລາຍເຄື່ອງປູກຂອງຊ້າງ (n=21), ທີ່ສຳຄັນກວ່າໝູ່ໝົດ (71%) ປ້ອງກັນເຄື່ອງປູກໄດ້ສຳເລັດດ້ວຍການນອນເຝົ້າໃນຕອນກາງຄືນ ແລະ ໄລ່ມັນ(ຊ້າງ) ໃຫ້ໜີໄປດ້ວຍການດັງໄຟ ແລະ ເຮັດສຽງດັງ, ໂດຍມີສີ່ທົ່ງ(ນາເຂົ້າສາມທົ່ງ ແລະ ສວນກ້ວຍໜຶ່ງສວນ), ລາຍງານຄວາມເສຍຫາຍອັນເນື່ອງມາຈາກການທຳລາຍຂອງຊ້າງ.

ການຄິດໄລ່ເບິ່ງຄວາມເສຍຫາຍຂອງນາເຂົ້າສາມທົ່ງນັ້ນ ພົບວ່າພື້ນທີ່ ທີ່ຖືກຊ້າງທຳລາຍເສຍຫາຍນັ້ນແມ່ນແຕກຕ່າງກັນໄປ ແຕ່ 4% ຫາ 22% ຂອງເນື້ອທີ່ນາທັງໝົດ, ຊຶ່ງຄາດຄະເນວ່າມີເຂົ້າເປືອກເສຍຫາຍແຕ່ 40-215 ກິໂລ ຕໍ່ໜຶ່ງຫຼັງຄາເຮືອນ(ຕາຕະລາງ1). ເພາະການຜະລິດເຂົ້າຢູ່ໃນເມືອງນາກາຍສ່ວນຫຼາຍບໍ່ພຽງພໍ ກັບຄວາມຕ້ອງການຂອງພົນລະເມືອງ (NTEC 2002), ເບິ່ງຄືກັບວ່າເຂົ້າທີ່ສູນເສຍໄປຍ້ອນຖືກທຳລາຍນັ້ນມີສ່ວນເຮັດໃຫ້ເຂົ້າບໍ່ພຽງພໍ. ມູນຄ່າທີ່ຄິດເປັນເງິນຂອງເຂົ້າທີ່ສູນເສຍໄປມີແຕ່ 31,000 ກີບ ຮອດ167,000 ກີບ (3-17 ໂດລາ) ຕໍ່ໜຶ່ງຫຼັງຄາເຮືອນ. ສະເລ່ຍລາຍໄດ້ທີ່ເປັນເງິນສົດຂອງແຕ່ລະຫຼັງຄາເຮືອນບ້ານທ່າລາງແມ່ນມີພຽງແຕ່ 149 ໂດລາ (ແຕ່ 0-464 ໂດລາ) ໃນ (NTEC 2002), ຄວາມເສຍຫາຍໃນລະດັບນີ້ຖືວ່າຫຼາຍສົມຄວນສຳລັບບາງຄອບຄົວ. ປະລິມານເຂົ້າທີ່ເສຍໄປໃຫ້ຊ້າງທັງໝົດພາຍໃນບ້ານໃນປີ 2001 (419 ກິໂລ) ແມ່ນຫຼາຍກວ່າຊາວກະສິກອນຄາດຄະເນຄວາມເສຍຫາຍໄວ້ໃນປີ 2000 (244 ກິໂລ) (ຊຸນບູລົມ 2002). ຊາວກະສິກອນພຽງແຕ່ລາຍງານວ່າມີບັນຫາເລື່ອງຊ້າງທຳລາຍເຄື່ອງປູກມາຕັ້ງແຕ່ປີ 1998 ແຕ່ຮູ້ສຶກວ່າຊ້າງຢ້ານຄົນໜ້ອຍລົງໃນແຕ່ລະປີ.

**ຕາຕະລາງ1.** ຂອບເຂດ ແລະ ມູນຄ່າຂອງເຄື່ອງປູກທີ່ເສຍຫາຍໃນບ້ານນາກາຍປີ 2001

| ທົ່ງນາ/ເຄື່ອງປູກ | ກ້ວຍ | ເຂົ້າ | ເຂົ້າ | ເຂົ້າ |
|---|---|---|---|---|
| ຈຳນວນຄອບຄົວທີ່ໃຊ້ດິນນາ | 3 | 1 | 1 | 1 |
| ເດືອນທີ່ທຳລາຍ | ເມສາ | ມິຖຸນາ | ສິງຫາ | ສິງຫາ |
| ພື້ນທີ່ນາທັງໝົດ(ເຮັກຕາ) | 0.59 | 0.62 | 0.60 | 0.62 |
| ອັດຕາສ່ວນຂອງນາທີ່ເສຍຫາຍ | 100% | 16% | 22% | 4% |
| ຄາດຄະເນປະລິມານເຂົ້າທີ່ສູນເສຍ[1] (kg) | - | 165 | 215 | 40 |
| ຄາດຄະເນມູນຄ່າ(ໂດລາ)ຂອງເຂົ້າທີ່ເສຍຫາຍຕໍ່ຄອບຄົວ[2] | - | 13 | 17 | 3 |

[1] ຜົນຜະລິດເຂົ້າເປືອກໃນໄຮ່ 1.65ໂຕນຕໍ່ເຮັກຕາໃນແຂວງຄຳມ່ວນປີ2000 (Lao IRRI 2002)

[2] ການສີເຂົ້າເປືອກໃຫ້ກາຍເປັນເຂົ້າສານໄດ້ 65% (Lao IRRI). 1 kg ຂອງເຂົ້າສານ @ 1,200 Kip / kg; 9,650 Kip = 1 USD, ສະເລ່ຍອັດຕາແລກປ່ຽນ FY 2001-2002 (Pholsena 2002).

ສວນກ້ວຍທີ່ມີສາມຫຼັງຄາເຮືອນ ເປັນເຈົ້າຂອງຢືນຢັນວ່າເສຍຫາຍ 100% ໃນລະຫວ່າງບຸນປີໃໝ່ລາວທີ່ປະສວນໄວ້ໂດຍບໍ່ມີຄົນເຝົ້າ. ຈຳນວນຫຼັງຄາເຮືອນທີ່ລາຍງານວ່າ ສວນກ້ວຍຂອງຕົນຖືກທຳລາຍໃນປີ 2001(n=5) ແມ່ນໜ້ອຍກວ່າທີ່ລາຍງານໄວ້ໃນປີ 2000(n=15) ແຕ່ກໍ່ຖືວ່າຫຼາຍເພາະວ່າມີຄົນປູກກ້ວຍໜ້ອຍໃນປີ 2001 ແລະ ບໍ່ມີຄົນເລືອກປູກອ້ອຍ, ມັນຕົ້ນ ຫຼື ໝາກຫຸ່ງເລີຍ. ເຖິງແມ່ນວ່າເຄື່ອງປູກເຫຼົ່ານີ້ຈະສາມາດຂາຍເປັນເງິນສົດໄດ້ກໍ່ຕາມ, ຊາວກະສິກອນເວົ້າວ່າພວກເຂົາເຊົາປູກເຄື່ອງປູກເຫຼົ່ານີ້ຍ້ອນວ່າຊຸມປີຜ່ານມານີ້ນາຂອງເຂົາເຈົ້າຖືກຊ້າງທຳລາຍເສຍຫາຍຢູ່ເລື້ອຍໆ.

ຢ່າງໜ້ອຍອີກຫ້າໝູ່ບ້ານໃກ້ຄຽງ (ບ້ານນາກາຍເໜືອ, ນາກາຍໃຕ້, ໂຊເພັນ, ແກ້ງຍາວ ແລະ ໜອງບົວຄຳ) ກໍ່ໄດ້ລາຍງານບັນຫາເລື່ອງຊ້າງທຳລາຍເຄື່ອງປູກ ຕໍ່ຫ້ອງການເຈົ້າເມືອງ (FAO 2002). ເຊັ່ນດຽວກັບຢູ່ບ້ານທ່າລາງ, ປະມານເຄິ່ງໜຶ່ງຂອງ 48 ຄອບຄົວ ໃນບ້ານໜອງບົວຄຳລາຍງານເຄື່ອງປູກທີ່ຖືກທຳລາຍເສຍຫາຍ ແຕ່ 20% ໄປຮອດ 100% ຂອງນາແຕ່ລະເຈົ້າໃນໄລຍະປີ 1998 ຫາ 2001, ໂດຍສະເພາະແລ້ວໃນກໍລະນີທີ່ນາຂອງເຂົາເຈົ້າຢູ່ໄກບ້ານ ຫຼື ບໍ່ໄດ້ເວນຍາມຢ່າງດີ.

## ຊ້າງທຳຮ້າຍ ແລະ ຂ້າຄົນ

ໃນລະຫວ່າງໄລຍະສຶກສາຄົ້ນຄວ້າ, ໃນພື້ນທີ່ບ້ານທ່າລາງທັງຄົນ ແລະ ຊ້າງຕ່າງກໍ່ເສຍຊີວິດ. ຊ້າງທຳຮ້າຍຄົນສາມຄົນ ແລະ ຊ້າງສາມໂຕກໍ່ຖືກຂ້າຕາຍໂດຍນັກລ່າຊ້າງ. ມີຊາວບ້ານຜູ້ໜຶ່ງ ຖືກຊ້າງສີຂາວໂຕແມ່ຂ້າຕາຍໃນລະຫວ່າງທີ່ຍ່າງແຕ່ນາໄປຫາໝູ່ບ້ານໃນວັນທີ14 ເດືອນເມສາປີ 2001. ໜຶ່ງປີຕໍ່ມາ, ສອງຜົວເມຍຄູ່ໜຶ່ງໃນໝູ່ບ້ານດັ່ງກ່າວຖືກຊ້າງໂຕແມ່ໂຕໜຶ່ງ ທຳຮ້າຍໃນລະຫວ່າງທີ່ໄປຫາຟືນ. ຜູ້ຍິງຄົນນັ້ນເສຍຊີວິດສ່ວນຜົວຂອງລາວເຈັບໜັກ. ຜົນທີ່ຕາມມາຈາກເຫດການດັ່ງກ່າວນີ້, ຊາວບ້ານລາຍງານວ່າເຂົາເຈົ້າຢ້ານກົວຫຼາຍທີ່ຈະເຂົ້າປ່າ ຫຼື ໄປນາ ແລະ ຂໍອະນຸຍາດຈາກລັດເພື່ອຍ້າຍ ຫຼືຂ້າຊ້າງ. ຊ້າງສາມໂຕຖືກນັກລ່າຊ້າງຂ້າຕາຍເພື່ອເອົາງາຂອງມັນ, ສອງໂຕໃນເດືອນມີນາປີ 2001 ແລະ ອີກໂຕໜຶ່ງໃນເດືອນກັນຍາປີ 2001. ກ່ອນໄລຍະສຶກສາຄົ້ນຄວ້າ, ມີຊາຍອີກຜູ້ໜຶ່ງຖືກຊ້າງຂ້າຕາຍໃນລະຫວ່າງ ທີ່ລາວກຳລັງຢາມແຮ້ວຂອງລາວໃນປີ 2000. ຄອບຄົວຂອງຜູ້ທີ່ຖືກຊ້າງຂ້າຕາຍໃນໄລຍະສາມປີ ທີ່ຜ່ານມາໄດ້ຮັບເງິນຊົດໃຊ້ຕົກເປັນເງິນ 150,000-200,000 ກີບ (15-20ໂດລາ), ແຕ່ບໍ່ມີການຈ່າຍຊົດໃຊ້ເຄື່ອງປູກທີ່ເສຍຫາຍ.

ກ່ອນປີ 1995 ບໍ່ຄ່ອຍຈະມີການລາຍງານເລື່ອງຊ້າງທຳລາຍເຄື່ອງປູກໃນເຂດເມືອງນາກາຍ, ເຖິງແມ່ນວ່າຈະມີຫຼັກຖານ ທີ່ບັນທຶກໄວ້ໃນການສຳຫຼວດຊ້າງທົ່ວພື້ນທີ່ ແລະ ຄາດຄະເນວ່າມີປະຊາກອນສັດປະມານ 100-150 ໂຕ ໃນພື້ນທີ່ນັ້ນໆ (WCS 1995; Timmins and Evans 1996). ໄດ້ມີການກຳນົດຫຼາຍປັດໄຈເປັນໄປໄດ້ທີ່ເຮັດໃຫ້ມີຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ ທີ່ເພີ່ມຂຶ້ນໃນເຂດພື້ນທີ່ບ້ານ ທ່າລາງ (FAO 2002).

### *ປະຊາກອນຄົນເພີ່ມຂຶ້ນ ແລະ ທີ່ຢູ່ອາໄສຊ້ຳພັດໜ້ອຍລົງ*

ຈຳນວນຄົນໄດ້ເພີ່ມຂຶ້ນເປັນທົບໜຶ່ງໃນໄລຍະສິບປີທີ່ຜ່ານມາ, ສະນັ້ນ ຄົນຈຶ່ງໄປລົບກວນທີ່ຢູ່ອາໄສຂອງຊ້າງ ແລະ ຜົນທີ່ຕາມມາກໍ່ຄືການ ປ່ຽນແປງປ່າໃຫ້ເປັນບ່ອນປູກຝັງ ແລະ ປ່າໂຄກ. ການສຶກສາໃນອີກບ່ອນໜຶ່ງໄດ້ຊີ້ໃຫ້ເຫັນວ່າຊ້າງມີນິດໄສມັກທຳລາຍເຄື່ອງປູກ ເມື່ອພວກມັນສູນເສຍທີ່ຢູ່ອາໄສນັ້ນ ກໍ່ກາຍເປັນສາຍເຫດ ເຮັດໃຫ້ມັນປ່ຽນແປງການເຄື່ອນໄຫວ (Duckworth and Hedges 1998).

*ພື້ນທີ່ປູກຝັງ*
ໃນຂະນະທີ່ຜືນນາຂະຫຍາຍວົງກວ້າງ ອອກຈາກໝູ່ບ້ານຫຼາຍເທົ່າໃດ, ມັນກໍ່ຍິ່ງເປັນການຍາກເທົ່ານັ້ນທີ່ຊາວກະສິກອນຈະປົກປັກຮັກສາ ບໍ່ໃຫ້ຊ້າງມາທຳລາຍເຄື່ອງປູກຂອງເຂົາເຈົ້າ. ມັນໄດ້ກາຍເປັນກົດເກນຂອງຜືນນາພາຍໃນປ່າ ແລະ ຂະຫຍາຍປ່າໂຄກໃຫ້ກວ້າງອອກ ຊຶ່ງມັນແມ່ນທີ່ຢູ່ອາໄສທີ່ສຳຄັນຂອງຊ້າງ. ການສຶກສາໃນອີກບ່ອນໜຶ່ງໄດ້ສະແດງ ໃຫ້ເຫັນວ່ານາທີ່ຢູ່ໃກ້ກັບບ່ອນຢູ່ອາໄສຂອງຊ້າງມີຄວາມສ່ຽງທີ່ຈະຖືກຊ້າງທຳລາຍຫຼາຍກວ່າ (Naughton-Treves 1998).

*ການລ່າ*
ການລ່າຊ້າງເພື່ອເອົາງາຂອງມັນໄດ້ກາຍເປັນບັນຫາໃນເຂດພື້ນທີ່ບ້ານທ່າລາງມາຕັ້ງແຕ່ປີ 1990 (FAO 2002). ເປັນທີ່ຮູ້ກັນດີວ່ານີ້ແມ່ນເປັນການໄປລົບກວນເຮັດໃຫ້ຊ້າງແຕກຕື່ນ ແລະ ຝູງທີ່ຕາມມາກໍ່ຄືສັດຖືກລົບກວນ ແລະ ບາດເຈັບ, ມັນເລີຍມີນິດໄສຮ້າຍຕໍ່ຄົນ (Sukumar 1989).

## ການສົນທະນາ

ຕາມທີ່ໄດ້ສະແດງໃຫ້ເຫັນໃນຕົວຢ່າງຈິງ(ກໍລະນີສຶກສາ)ວ່າ, ສາຍເຫດທີ່ພາໃຫ້ເກີດຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງນັ້ນ ແມ່ນມີຫຼາຍສາຍເຫດ ແລະ ສັບສົນ. ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງທີ່ເກີດຂຶ້ນໃນ ສປປ ລາວຕົ້ນຕໍແມ່ນເກີດຈາກຄົນຂະຫຍາຍ ພື້ນທີ່ນຳໃຊ້ດິນກວ້າງອອກໄປລົບກວນບ່ອນຢູ່ອາໄສຂອງຊ້າງ. ສາຍເຫດນີ້ໄດ້ເຮັດໃຫ້ຊ້າງມາລັກກິນເຄື່ອງປູກ ແລະ ປະລະບ່ອນຢູ່ອາໄສ ຂອງມັນທີ່ຢູ່ໃນປ່າມາຫາກິນຢູ່ເຂດອ້ອມແອ້ມພື້ນທີ່ປູກຝັງ. ຜົນກະທົບນີ້ສົ່ງຜົນເສຍຫາຍໂດຍກົງຕໍ່ການມີຊີວິດຢູ່ລອດ ແລະ ເຄື່ອງປູກ(ທີ່ຂາຍເປັນເງິນສົດໄດ້), ຂໍ້ຈຳກັດໃນການຂະຫຍາຍ ພື້ນທີ່ປູກຝັງຍ້ອນຢ້ານຊ້າງມາລັກກິນ, ການຕາຍຂອງຄົນ ແລະຊ້າງ. ເຖິງແມ່ນວ່າຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງໃນລາວຈະແຜ່ຂະຫຍາຍວົງກວ້າງອອກ ແລະ ອາດຈະເພີ່ມຂຶ້ນກໍ່ຕາມ, ສຳຄັນແມ່ນຕ້ອງໄດ້ເປີດໃຈຍອມຮັບວ່າ ຄວາມຖີ່ ແລະ ຂອບເຂດຂອງມັນຍັງຕໍ່າເມື່ອສົມທຽບໃສ່ປະເທດອື່ນໆ. ນອກຈາກນີ້ແລ້ວ, ຂໍ້ຂັດແຍ້ງສ່ວນຫຼາຍທີ່ເກີດຂຶ້ນແມ່ນສາມາດຫຼີກລ່ຽງໄດ້ດ້ວຍການວາງແຜນນຳໃຊ້ທີ່ດິນໃຫ້ດີກວ່າເກົ່າ (FAO 2002). ເມື່ອເຂົ້າໃຈຄືແນວນີ້ແລ້ວ, ການຄຸ້ມຄອງຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ ແລະ ການຄຸ້ມຄອງປະຊາກອນຊ້າງກໍ່ຈະສາມາດເລີ່ມປະຕິບັດໄດ້ໃນສາມລະດັບທີ່ແຕກຕ່າງກັນຄື:

## ລະດັບບ້ານ, ເມືອງ ແລະ ແຂວງ

ສ່ວນທຳອິດ ແມ່ນຄວນຈະເນັ້ນໃສ່ການປັບປຸງເງື່ອນໄຂ ຂອງຄົນພາຍໃນທ້ອງຖິ່ນຜູ້ທີ່ອາໄສຢູ່ຮ່ວມກັບຊ້າງ, ຮັບປະກັນໃຫ້ຊາວກະສິກອນສາມາດ ປົກປັກຮັກສາເຄື່ອງປູກຂອງເຂົາເຈົ້າໄດ້ ແລະ ຫຼຸດຜ່ອນຄວາມອາດສາມາດທີ່ຈະຖືກຊ້າງທຳຮ້າຍ. ປະຈຸບັນນີ້ຊາວກະສິກອນຖືກປະປ່ອຍໃຫ້ແກ້ບັນຫາດ້ວຍຕົວເອງໃນເວລາທີ່ພວກເຂົາປະເຊີນກັບສະພາບຄວາມຂັດແຍ້ງ. ເຊັ່ນດຽວກັບພະນັກງານລັດທີ່ຂາດປະສົບການໃນການຮັບມືກັບສະພາບຄວາມຂັດແຍ້ງ. ວິຊາການ, ຂໍ້ແນະນຳແຜນປະຕິບັດ, ການຝຶກອົບຮົມໃຫ້ທີມງານທີ່ຮັບມືກັບບັນຫາ, ການລາຍງານເປັນລະບົບ, ການເກັບກຳບົດບັນທຶກ ແລະ ການໃຫ້ທຶນຍັງຂາດແຄນຢູ່. ເມື່ອບໍ່ດົນມານີ້ໄດ້ມີການທົບທວນເບິ່ງບາງມາດຕະການບັນເທົາຄວາມຮຸນແຮງທີ່ມີຢູ່ ເພື່ອຫຼຸດຜ່ອນການທຳລາຍເຄື່ອງປູກຂອງຊ້າງໃນອາຊີ ແລະ ອາຟຣິກາໄດ້ຊີ້ໃຫ້ເຫັນວ່າມີຫຼາຍມາດຕະການທີ່ສາມາດນຳໃຊ້ໃນ ສປປ ລາວໄດ້ ແລະ ກໍ່ບໍ່ໄດ້ສິ້ນເປືອງຫຍັງຫຼາຍ.

*ລະບົບເຕືອນໄພສາມາດເຕືອນຊາວກະສິກອນໃຫ້ລະວັງຊ້າງທີ່ມາທຳລາຍເຄື່ອງປູກໄດ້, ການເຮັດສຽງດັງ, ການດັງໄຟ ແລະ ການຂັບໄລ່ດ້ວຍວິທີເຮັດໃຫ້ມັນແສບຕີນແສບໂຕດ້ວຍໝາກເຜັດກໍ່ສາມາດກຳຈັດບັນຫາເລື່ອງຊ້າງໄປໄດ້*

ມາດຕະການທຳອິດທີ່ຂໍສະເໜີ ແມ່ນຮັກສາບ່ອນຢູ່ອາໄສຂອງຊ້າງໄວ້ ແລະ ກຳນົດການວາງແຜນນຳໃຊ້ທີ່ດິນຄັກແນ່ ເພື່ອຫຼີກລ່ຽງບໍ່ໃຫ້ເກີດມີສະພາບຄວາມຂັດແຍ້ງ. ມາດຕະການອັນທີ່ສອງແມ່ນເຮັດວຽກຮ່ວມກັບຊາວກະສິກອນ ເພື່ອພັດທະນາວິທີການຄຸ້ມຄອງການແກ້ໄຂ ບັນຫາດ້ວຍການຊອກຫາ ແລະ ປ້ອງກັນຊ້າງບໍ່ໃຫ້ມາທຳລາຍເຄື່ອງປູກໃນບ່ອນທີ່ເຄີຍເກີດມີຂໍ້ຂັດແຍ້ງມາແລ້ວ. ລະບົບເຕືອນໄພສາມາດເຕືອນຊາວກະສິກອນ ໃຫ້ລະວັງຊ້າງທີ່ຈະມາທຳລາຍເຄື່ອງປູກໄດ້, ການເຮັດສຽງດັງ, ການດັງໄຟ ແລະ ການຂັບໄລ່ດ້ວຍວິທີເຮັດໃຫ້ມັນແສບຕີນແສບໂຕ ດ້ວຍໝາກເຜັດກໍ່ສາມາດ ກຳຈັດບັນຫາເລື່ອງຊ້າງໄປໄດ້. ເຖິງແມ່ນວ່າຄ່າຊົດໃຊ້, ຄ່າປະກັນໄພ ແລະ ແຜນໃຫ້ສິນເຊື່ອຈະໄດ້ມີການກວດສອບເບິ່ງກ່ອນກໍ່ຕາມ, ການສຶກສາຄົ້ນຄວ້າໃນເຂດອື່ນ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງ ວ່າມັນເປັນເລື່ອງທີ່ໜ້າຕຳໜິຕິຕຽນສຳລັບຊາວກະສິກອນທີ່ຈະຮັບຜິດຊອບໃນການປົກປັກຮັກສາເຄື່ອງປູກ ແລະ ການແກ້ໄຂບັນຫາກໍ່ບໍ່ໄດ້ສິ້ນເປືອງຫຍັງຫຼາຍຈົນເກີນໄປ ຫຼືອາໄສການຊ່ວຍເຫຼືອຈາກຕ່າງປະເທດ (Osbome and Parker 2003). ມາດຕະການບັນເທົາຄວາມຮຸນແຮງເພື່ອຄຸ້ມຄອງຊາວກະສິກອນນັ້ນ ຄວນຈະປະກອບມີການຈັດຕັ້ງປະຕິບັດ ໂຄງການ ການກະເສດໃນພື້ນທີ່ ທີ່ມີຊ້າງອາໄສຢູ່. ຈຳເປັນຈະຕ້ອງໄດ້ມີຂັ້ນຕອນການປະຕິບັດ ທີ່ໄດ້ມາດຕະຖານ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດໃຫ້ໄດ້ໄວ, ເພື່ອປ້ອງກັນບໍ່ໃຫ້ຊາວບ້ານແກ້ໄຂສະພາບຄວາມຂັດແຍ້ງແບບເກົ່າດ້ວຍການທຳຮ້າຍ ຫຼືຂ້າຊ້າງ.

ຊ້າງປ່າທີ່ອາໄສຢູ່ໃກ້ກັບພື້ນທີ່ໝູ່ບ້ານອາດຈະກາຍເປັນແຫຼ່ງລາຍໄດ້ດ້ວຍການເຮັດໃຫ້ເປັນກິດຈະກຳການທ່ອງທ່ຽວແບບອີງໃສ່ທຳມະຊາດ. ຊຶ່ງກຳລັງຢູ່ໃນຂັ້ນທົດລອງຂອງອົງການທ່ອງທ່ຽວແຫ່ງຊາດ ແລະ ອົງການພັດທະນາປະເທດເຢຍລະມັນຢູ່ເຂດປ່າສະຫງວນແຫ່ງຊາດ ພູເຂົາຄວາຍ, ທີ່ຢູ່ໃກ້ໆກັບແຂວງວຽງຈັນ, ຊຶ່ງມີໂຄງການທີ່ເຮັດວຽກຮ່ວມກັບໝູ່ບ້ານແຫ່ງໜຶ່ງເພື່ອຝຶກອົບຮົມຜູ້ນຳທ່ຽວ ແລະ ສ້າງຈຸດຊົມວິວຊ້າງ.

## ໃນລະດັບຊາດ

ການຄຸ້ມຄອງພູມມິປະເທດແຫ່ງຊາດ ທີ່ໃຊ້ຊ້າງເປັນຈຸດສົນໃຈນັ້ນສາມາດຮັບປະກັນ ໃຫ້ຊ້າງມີການຂະຫຍາຍແນ່ແຜ່ພັນໄດ້ຫຼາຍຂຶ້ນ ໃນຂະນະດຽວກັນກໍ່ສາມາດຫຼຸດຜ່ອນ ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງໄດ້ນຳອີກ. ຜົນການສຳຫຼວດໄດ້ໃຫ້ເອກະສານຢັ້ງຢືນວ່າປະຊາກອນຊ້າງຢ່າງໜ້ອຍ 18 ໃນ 20 ຂອງປ່າສະຫງວນແຫ່ງຊາດ, ລວມທັງຈຳນວນທີ່ຢູ່ໃນພື້ນທີ່ ທີ່ມີການອະນຸລັກ, ເຊັ່ນດຽວກັບເຂດພື້ນທີ່ ທີ່ຢູ່ນອກລະບົບການປົກປັກຮັກສາ (Duckworth and Hedges 1998). ສະພາບດັ່ງກ່າວນີ້ມັນຮຽກຮ້ອງໃຫ້ມີວິທີການທີ່ກວ້າງຂວາງ ເພື່ອຄຸ້ມຄອງບ່ອນຢູ່ອາໄສ ແລະ ປະຊາກອນຊ້າງ ລວມທັງການ ຈັດຕັ້ງພື້ນທີ່ປົກປັກຮັກສາຢ່າງເປັນທາງການ, ການຮັກສາປ່າທີ່ຢູ່ຕິດກັນຢ່າງເໝາະສົມໄດ້ກວມເອົາພື້ນທີ່ ທີ່ມີສັດອົບພະຍົບ, ແລະ ການຈັດຕັ້ງເຂດຄຸ້ມຄອງຂ້າມແດນ ແລະ ຖັນແຖວ

ຂອງຊ້າງ ທີ່ຢູ່ໃນການຄຸ້ມຄອງ (FAO 2002). ອັນຕໍ່ມາແມ່ນວິທີການໃນລະດັບພູມມິປະເທດ ໄດ້ໃຫ້ບຸລິມະສິດທີ່ຢູ່ອາໄສທີ່ຊ້າງຕ້ອງການ, ແຕ່ຕ້ອງຢູ່ຮ່ວມກັນກັບຄົນໄດ້. ແຜນການແຫ່ງຊາດ ເພື່ອຄຸ້ມຄອງຊ້າງ ແລະ ປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດຮ່ວມກັນ ທີ່ໄດ້ສະເໜີໄປນັ້ນ ແມ່ນຮ່າງຂຶ້ນມາຮ່ວມກັນກັບກະຊວງກະສິກຳ ແລະ ປ່າໄມ້, UNDP, FAO, WCS, WWF ແລະ IUCN (FAO 2003), ໃນການສະໜັບສະໜູນວິທີການແບບພູມມິປະເທດນີ້ເພື່ອການວາງແຜນ ນຳໃຊ້ທີ່ດິນ ແລະ ເຫັນພ້ອມກັບນະໂຍບາຍແລະ ຍຸດທະສາດຂອງລັດຫຼາຍຢ່າງ ເພື່ອການຄຸ້ມຄອງ ແຫຼ່ງວັດທະນະທຳ ແລະ ທຳມະຊາດແບບຍືນຍົງ.

*ການຄຸ້ມຄອງແຫ່ງຊາດສາມາດຮັບປະກັນໃຫ້ຊ້າງມີການຂະຫຍາຍແມ່ ແຜ່ພັນໄດ້ຫຼາຍຂຶ້ນໃນຂະນະດຽວກັນກໍ່ສາມາດຫຼຸດຜ່ອນຂໍ້ຂັດແຍ້ງລະ ຫວ່າງຄົນກັບຊ້າງໄດ້ນຳອີກ*

ການລິເລີ່ມຂອງລັດຖະບານແມ່ນພົວພັນ ເຖິງການຄຸ້ມຄອງການເຮັດໄຮ່ເລື່ອນລອຍ, ການພັດທະ ນາລະບົບການວິໄຈດິນ, ການປະເມີນຜົນຄວາມເໝາະສົມຂອງດິນ ແລະ ການມອບດິນນຳໃຊ້ ໃຫ້ແກ່ປະຊາຊົນ ຕ້ອງໄດ້ສອດຄ້ອງກັບການຄຸ້ມຄອງບ່ອນຢູ່ອາໄສຂອງຊ້າງ. ທັງຍຸດທະສາດ ເພື່ອການເຕີບໂຕ ແລະ ລົບລ້າງຄວາມທຸກຍາກແຫ່ງຊາດ (NGPES) ແລະ ວິໄສທັດຍຸດທະສາດ ຂອງລັດຖະບານທີ່ມີຕໍ່ຂະແໜງກະສິກຳ ແລະ ຍຸດທະສາດດ້ານສິ່ງແວດລ້ອມແຫ່ງຊາດ 2003-2020 (GoL 2003) ໄດ້ເນັ້ນໜັກເຖິງຄວາມຈຳເປັນ ໃນການນຳໃຊ້ຊັບພະຍາກອນທຳມະຊາດ ແບບຍືນຍົງເພື່ອຮັບປະກັນການພັດທະນາແບບຍືນຍົງຂອງປະເທດຊາດ, ທີ່ເນັ້ນໃສ່ຄວາມປອດໄພ ຂອງອາຫານ ແລະ ການຫຼຸດຜ່ອນຄວາມທຸກຈົນ. ຍຸດທະສາດການທ່ອງທ່ຽວແຫ່ງຊາດ ແລະ ແຜນປະຕິບັດປີ 2004-2010 (NTA 2004) ທີ່ສົ່ງເສີມການທ່ອງທ່ຽວແບບອີງໃສ່ທຳມະຊາດ ໃນ ເຂດຊົນນະບົດເພື່ອສະໜັບສະໜູນການນຳໃຊ້ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ.

ນອກຈາກຂໍ້ລິເລີ່ມເຫຼົ່ານີ້ແລ້ວ, ແມ່ນບໍ່ມີນະໂຍບາຍ ຫຼືຂໍ້ແນະນຳຂອງລັດຖະບານທີ່ເປັນທາງການ ໃນດ້ານຂອງວິທີການເພື່ອຮັບມືກັບສະພາບຂັດແຍ້ງລະຫວ່າງຄົນກັບຊ້າງຢ່າງເປັນລະບົບ ແລະ ມັນຍັງພົວພັນເຖິງຜົນກະທົບທາງດ້ານເສດຖະກິດສັງຄົມ. ໃນທີ່ນີ້, ແມ່ນມີຄວາມຈຳເປັນທີ່ຈະຕ້ອງ ໄດ້ທົບທວນໃຫ້ເຂົ້າໃຈກ່ຽວກັບກະແສ ແລະ ນະໂຍບາຍຂອງລັດທັງໝົດທີ່ວາງອອກມາ ຊຶ່ງມັນໄດ້ ແຕະຕ້ອງເຖິງການນຳໃຊ້ທີ່ດິນ ແລະ ການພັດທະນາສັງຄົມ, ແລະ ລວມມີຂໍ້ບັນຍັດທີ່ປ້ອງກັນ ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງໂດຍການວາງແຜນນຳໃຊ້ທີ່ດິນຮ່ວມກັນ ໃນຂະນະດຽວກັນກໍ່ຄຸ້ມຄອງ ແລະ ຮັກສາປະຊາກອນ ແລະ ທີ່ຢູ່ອາໄສຂອງຊ້າງ.

ເຖິງແມ່ນວ່າຊ້າງຈະເປັນທີ່ຍອມຮັບຂອງສັງຄົມໂດຍທົ່ວໄປກໍ່ຕາມ, ແຕ່ເລິກລົງໄປກວ່ານັ້ນ, ການ ຕີລາຄາບັນຫາການຄຸ້ມຄອງຊ້າງ ຈຳເປັນຈະຕ້ອງໄດ້ໃຫ້ການສະໜັບສະໜູນ ແກ່ຜູ້ທີ່ຕັດສິນໃຈ ໃນຝ່າຍລັດຖະບານຜູ້ທີ່ຮັບຜິດຊອບ ການຄຸ້ມຄອງປະຊາກອນຊ້າງ. ກິດຈະກຳທີ່ສ້າງຄວາມຕື່ນຕົວ ໃຫ້ແກ່ສາທາລະນະຊົນ ໃນການຈັດຕັ້ງປະຕິບັດແບບມີສ່ວນຮ່ວມ ແລະ ກວ້າງຂວາງນີ້ ຈະຊ່ວຍ ໃຫ້ຄວາມຮູ້ແກ່ສັງຄົມ ແລະ ເພີ່ມຄວາມເຂົ້າໃຈໃນພຶດຕິກຳຂອງຊ້າງດີຍິ່ງຂຶ້ນ, ຄວາມຈຳເປັນໃນການ ນຳໃຊ້ທີ່ຢູ່ອາໄສ ແລະ ພື້ນທີ່ວ່າງເປົ່າໃນບ່ອນທີ່ຄົນ ແລະ ຊ້າງຢູ່ຮ່ວມກັນ, ແລະ ສະແດງໃຫ້

ປະຊາຊົນໄດ້ເຫັນຜົນປະໂຫຍດ ທາງດ້ານເສດຖະກິດສັງຄົມຈາກການອະນຸລັກຊ້າງ. ສ່ວນກົນໄກກໍ່ເປັນສິ່ງທີ່ຈຳເປັນຕໍ່ການແບ່ງປັນ ຂໍ້ມູນໃນແຕ່ລະວັນໃນບັນດາອົງການ ທີ່ມີເຕັກນິກເຮັດວຽກກ່ຽວກັບການອະນຸລັກຊ້າງ ແລະ ກ່ຽວຂ້ອງກັບບັນຫາຄຸ້ມຄອງການນຳໃຊ້ທີ່ດິນ.

## ໃນລະດັບສາກົນ

ສ່ວນສຸດທ້າຍແມ່ນການຮ່ວມມື ແລະ ແລກປ່ຽນຂໍ້ມູນໃນລະດັບສາກົນ ເພື່ອແກ້ໄຂບັນຫາທົ່ວໄປຄືນໃໝ່. ກຸ່ມນັກຊ່ຽວຊານດ້ານຊ້າງອາຊີຂອງ IUCN ລວມມີຕົວແທນຈາກປະເທດທີ່ມີຊ້າງອາຊີອາໄສຢູ່ ແລະ ຖືກສ້າງຕັ້ງຂຶ້ນມາເພື່ອຊຸກຍູ້ສົ່ງເສີມ ໃຫ້ມີການປະສານງານກັນພາຍໃນພາກພື້ນ ແລະ ແລກປ່ຽນຂໍ້ມູນ, ຄວາມຮູ້ ແລະ ວິຊາການ. ໃນອາຟຣິກາ, ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ ແມ່ນມີສາຍເຫດມາຈາກປະຊາກອນຄົນເພີ່ມຂຶ້ນ, ການສູນເສຍທີ່ຢູ່ອາໄສ ແລະ ການລ່າຊ້າງ. ໄດ້ມີການສຶກສາຄົ້ນຄວ້າກ່ຽວກັບວິທີການຄຸ້ມຄອງ ແລະ ຫຼຸດຜ່ອນຂໍ້ຂັດແຍ້ງ ແລະ ຫຼາຍໂຄງການກໍ່ຖືກທົດລອງນຳໃຊ້ເພື່ອເພີ່ມຄວາມສາມາດ ແລະ ຄວາມຮັບຜິດຊອບໃນການປົກປັກຮັກສາເຄື່ອງປູກຂອງຊາວກະສິກອນ (Osbome and Parker 2004). ມີຈົດໝາຍສະບັບໜຶ່ງທີ່ສົ່ງ ເຖິງເລຂາທິການໃຫຍ່ອົງການສະຫະປະຊາຊາດ ທ່ານໂຄຟີ ອານັນ ຕາມມາດ້ວຍກອງປະຊຸມສາກົນວ່າດ້ວຍສາຍພົວພັນ ແລະ ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ, ຜູ້ແທນທີ່ມາຈາກລັດທີ່ມີຊ້າງອາໄສຢູ່ຮຽກຮ້ອງໃຫ້ໜ່ວຍງານຂອງອົງການສະຫະປະຊາຊາດເຂົ້າແຊກແຊງເພື່ອໃຫ້ການຊ່ວຍເຫຼືອໃນດ້ານການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍຂອງລັດກ່ຽວກັບຊ້າງ ແລະ ທີ່ຢູ່ອາໄສຂອງມັນຮ່ວມກັນ (IEF and BECT 2003). ຊຶ່ງຖືວ່າມີຄວາມສຳຄັນເພື່ອເປັນແສງສະຫວ່າງທີ່ຊີ້ໃຫ້ເຫັນຄວາມສຳຄັນສຳລັບລັດຖະບານເພື່ອເພີ່ມຄວາມສາມາດ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດຕິພາບ ແລະ ຖືເອົາເປັນຄວາມຮຽກຮ້ອງຕ້ອງການທາງດ້ານນິເວດວິທະຍາຂອງຊ້າງໃນນະໂຍບາຍການນຳໃຊ້ທີ່ດິນແຫ່ງຊາດ ເພື່ອຫຼຸດຜ່ອນຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງ ທີ່ສົ່ງຜົນກະທົບເຮັດໃຫ້ສູນເສຍຊີວິດ ແລະ ຊັບພະຍາກອນ.

## ສະຫຼຸບ

ຄືດັ່ງຕົວຢ່າງທີ່ເກີດຂຶ້ນໃນບ້ານທ່າລາງ, ຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງແມ່ນຖືວ່າເປັນບາດກ້າວທຳອິດຂອງການພັດທະນາໃນ ສປປ ລາວ ເມື່ອສົມທຽບກັບປະເທດເພື່ອນບ້ານໃກ້ຄຽງ. ຍັງຄົງມີຄວາມສາມາດ ທີ່ດີເລີດໃນການຫຼຸດຜ່ອນຂໍ້ຂັດແຍ້ງ ດ້ວຍການວາງແຜນນຳໃຊ້ທີ່ດິນຮ່ວມກັນ ແລະ ສຳລັບການບັນເທົາຂໍ້ຂັດແຍ້ງທີ່ມີປະສິດທິພາບນັ້ນ ກໍ່ແມ່ນການນຳໃຊ້ວິທີທີ່ຮູ້ດີແລ້ວ ແລະ ທີ່ດັດແກ້ມາຈາກບ່ອນທີ່ມີຂໍ້ຂັດແຍ້ງມາກ່ອນ. ບົດຮຽນອັນຈະແຈ້ງທີ່ຮຽນຮູ້ຈາກປະເທດອື່ນບ່ອນທີ່ມີບັນຫາຂໍ້ຂັດແຍ້ງລະຫວ່າງຄົນກັບຊ້າງເກີດຂຶ້ນນັ້ນຄວນຈະໄດ້ກຳນົດ ແລະ ແກ້ໄຂຄືນກ່ອນມັນຈະເຖິງຂັ້ນທີ່ຄຸ້ມຄອງບໍ່ໄດ້. ຊຶ່ງມັນຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດກິດຈະກຳຄຸ້ມຄອງຊ້າງໃຫ້ທັນເວລາໂດຍປະສານງານກັບກິດຈະກຳພັດທະນາເສດຖະກິດສັງຄົມ, ອັນລວມມີນະໂຍບາຍ, ໂຄງການ ແລະ ບຸກຄະລາກອນ ຂອງລັດໃນທຸກລະດັບ, ພ້ອມທັງການສະໜັບສະໜູນທາງດ້ານຄຳແນະນຳ ແລະ ວັດຖຸອຸປະກອນຈາກຕ່າງປະເທດ. ມີຄວາມຈຳເປັນຈະຕ້ອງປະຕິບັດ ໂດຍໄວເພື່ອບັນເທົາຂໍ້ຂັດແຍ້ງທີ່ກຳລັງເກີດຂຶ້ນໃນເວລານີ້, ແລະ ການວາງແຜນໄລຍະຍາວ ແລະ ນະໂຍບາຍການພັດທະນາເພື່ອຫຼຸດຜ່ອນ ສະພາບຄວາມຂັດແຍ້ງທີ່ຈະເກີດຂຶ້ນໃນອະນາຄົດ. ການແຊກແຊງທີ່ເໝາະສົມທີ່ເປັນການຄຸ້ມຄອງຊ້າງ ໃນລາວບໍ່ຄວນຈະແມ່ນໜ່ວຍງານຄຸ້ມຄອງ ສັດປ່າເທົ່ານັ້ນທີ່ປະຕິບັດ, ແຕ່ມັນຄວນຈະລວມຢູ່ໃນກິດຈະກຳການພັດທະນາເພື່ອຫຼີກລ່ຽງຂໍ້ຂັດແຍ້ງທີ່ຫຼາຍຂຶ້ນ ແລະ ສະໜອງ

ວິທີການທີ່ຮັບປະກັນຄວາມປອດໄພດ້ານສະບຽງອາຫານແກ່ຊຸມຊົນທ້ອງຖິ່ນ ແລະ ການຫຼຸດຜ່ອນຄວາມທຸກຈົນ.

## ກ່ຽວກັບນັກຂຽນ

Dr. Arlyne Johnson (arlyne@upc2.loxinfo.co.th) ແມ່ນຜູ້ອຳນວຍການຮ່ວມ, ອົງການອະນຸລັກສັດປ່າ (WCS) ໂຄງການໃນປະເທດລາວ. ທ່ານຄຳຄູນ ຊຸນບູລົມ ທຳການສຶກສາຄົ້ນຄວ້າ M.Sc ໃນເມືອງນາກາຍ ໄລຍະ ແຕ່ປີ 2001-2002. Mr. Thaibault Ledecq (thaibaault.ledecq@faolao.org) ແມ່ນທີ່ປຶກສາດ້ານຊັບພະຍາກອນທຳມະຊາດແຫ່ງອົງການອາຫານ ແລະ ການກະເສດໂລກ (FAO) ຕາງໜ້າໃນປະເທດລາວ, ໃນຂະນະທີ່ Mr.Roland Eves ແມ່ນເປັນຕົວແທນຈາກອົງການ WWF

ອົງການອະນຸລັກສັດປ່າ ໂຄງການໃນປະເທດລາວ, ຕູ້ໄປສະນີ: 6712, ວຽງຈັນ, ສປປລາວ
IUCN, ຕູ້ໄປສະນີ: 4340, 15 ຖະໜົນຟ້າງຸ່ມ ວຽງຈັນ, ສປປລາວ
FAO (ອົງການອາຫານ ແລະ ການກະເສດໂລກ), ຕູ້ໄປສະນີ: 1640, ວຽງຈັນ, ສປປລາວ
ອົງການກອງທຶນສັດປ່າໂລກ - ໂຄງການໃນປະເທດລາວ, ຕູ້ໄປສະນີ: 7871, ວຽງຈັນ, ສປປລາວ

# ການເຮັດໄຮ່ເລື່ອນລອຍຈຳກັດປະລິມານນ້ຳໃນດິນ, ການສູນເສຍຝຸ່ນນອນຕົມ ແລະ ທາດກາກບອນໃນດິນເນີນ

Vincent Chaplot

*ໂດຍອີງໃສ່ແຮງດັນຂອງດິນທີ່ຢູ່ພາກເໜືອຂອງລາວ, ໄລຍະເວລາຄາດໄຖແບບດັ້ງເດີມໃນການເຮັດໄຮ່ເລື່ອນລອຍນັ້ນແມ່ນຖືກຈຳກັດໃຫ້ສັ້ນລົງຢ່າງຫຼວງຫຼາຍ.*
*ການຫຼຸດຜ່ອນວົງຈອນການການປູກຝັງນີ້ແມ່ນທຳລາຍສິ່ງແວດລ້ອມໃນບັນຫາເລື່ອງຂອງດິນເຈື້ອນ ແລະ ການແຕກຕົວຂອງດິນ.*
*ຈຸດປະສົງຕົ້ນຕໍຂອງການສຶກສາແມ່ນເພື່ອຄິດໄລ່ເບິ່ງຜົນກະທົບທີ່ແຕກຕ່າງກັນໃນໄລຍະເວລາຂອງການຄາດໄຖທີ່ມີການສູນເສຍນ້ຳໃນຝຸ່ນນອນຕົມ ແລະ ທາດກາກບອນພາຍໃນອ່າງນ້ຳດິນເນີນຂະໜາດນ້ອຍ. ຈຸດປະສົງອັນທີ່ສອງແມ່ນເພື່ອປະເມີນຜົນກົນໄກທີ່ກ່ຽວຂ້ອງກັບການເຈື້ອນຂອງດິນໜຽວ.ເນື່ອງຈາກຄວາມຕ້ານທານ ທີ່ມີຕໍ່ກົນໄກການແຕກແຫງທີ່ເກີດມາຈາກເມັດຝົນ. ຜົນດັ່ງກ່າວນີ້ໄດ້ສະແດງໃຫ້ເຫັນຄວາມສຳຄັນຂອງໄລຍະການຄາດໄຖໃນການຈຳກັດການເຈື້ອນຂອງນ້ຳ ແລະ ດິນ:*
*ຖ້າຫາກການເຮັດໄຮ່ເລື່ອນລອຍໃນພື້ນທີ່ຮາບສູງຖືກປ່ຽນແທນດ້ວຍການກະເສດແບບຕໍ່ເນື່ອງ, ຄວາມເສຍຫາຍຕໍ່ສິ່ງແວດລ້ອມກໍ່ຈະຍິ່ງເພີ່ມຂຶ້ນ.*

## ພາກສະເໜີ

ຜົນກະທົບຂອງການປ່ຽນແປງຢ່າງໄວວາ ໃນການນຳໃຊ້ດິນດ້ານຂອງຊັບພະຍາກອນດິນ ແລະ ນ້ຳໃນເຂດຮ້ອນທີ່ມີສາຍເຫດມາຈາກແນວໂນ້ມຂອງພົນລະເມືອງ, ເສດຖະກິດ, ການເມືອງ ຫຼື ວັດທະນະທຳ ແມ່ນໄດ້ຖືກລວບລວມໄວ້ເປັນເອກະສານ. ໃນພື້ນທີ່ດິນເນີນຂອງເຂດຮ້ອນ, ການຜະລິດກະສິກຳແບບດັ້ງເດີມ ຕົ້ນຕໍປະກອບມີການເຮັດໄຮ່ເລື່ອນລອຍ, ດ້ວຍໄລຍະຕໍ່ເນື່ອງຂອງການຄາດໄຖ ແລະ ປູກຝັງ. ການປະຕິບັດທີ່ບໍ່ຮຸນແຮງຄືແນວນີ້ແມ່ນຖືວ່າຊ່ວຍຮັກສາຝຸ່ນທີ່ມີໃນດິນໃນໄລຍະຍາວ(Sanchez and Hailu 1996), ຕົວຢ່າງເຊັ່ນການປັບປຸງວົງຈອນທາດບຳລຸງລ້ຽງໃນດິນດັ່ງທີ່ໄດ້ສາທິດຢູ່ພາກເໜືອຂອງຫວຽດນາມໂດຍ Fagerstorm et al (2002). ປະຈຸບັນນີ້, ພື້ນທີ່ດິນເນີນໃນເຂດຮ້ອນຫຼາຍແຫ່ງ, ວົງຈອນການເຮັດໄຮ່ເລື່ອນລອຍ(ຕົວຢ່າງເຊັ່ນ ໄລຍະເວລາໃນການສັບຊ່າວ/ປູກຝັງໃນພື້ນທີ່ບ່ອນດຽວກັນ)ໄດ້ຖືກຫຼຸດຜ່ອນລົງເຫຼືອສາມປີ, ຫ້າປີ, ກົງກັນຂ້າມ ຄວາມຍືນຍົງທາງດ້ານນິເວດວິທະຍາອາດຈະຕ້ອງການໄລຍະເວລາຄາດໄຖຢ່າງໜ້ອຍຮອດສິບປີ (Sanchez and Hailu 1996). ການຫຼຸດຜ່ອນ ແລະ ຢຸດເຊົາການຄາດໄຖຄືແນວນັ້ນອາດຈະສົ່ງຜົນສະທ້ອນໂດຍກົງຕໍ່ການເຊາະເຈື້ອນຈາກນ້ຳ ແລະ ລະດັບຂອງອ່າງນ້ຳ.

ຜົນກະທົບໂດຍກົງອັນເນື່ອງມາຈາກການຄາດໄຖເພື່ອຫຼຸດຜ່ອນການເຊາະເຈື້ອນຂອງນ້ຳໃນດິນບໍລິເວນອ່າງນ້ຳແມ່ນຖືກຮຽບຮຽງເປັນເອກະສານໄວ້ຢ່າງດີ. ໃນການສຶກສາຄົ້ນຄວ້າທີ່ມີຢູ່, Gafur et al. (2003) ໄດ້ຊີ້ໃຫ້ເຫັນວ່າໃນກໍລະນີຢູ່ປະເທດບັງກະແດສ ການສູນເສຍຝຸ່ນນອນຕົມຈາກອ່າງ

ນ້ຳຍ້ອນການຄາດໄຖນັ້ນໜ້ອຍກວ່າ ສາຍເຫດຈາກການປູກຝັງປະມານທົກເທົ່າ. ເຫດຜົນຂອງການ ຫຼຸດຜ່ອນການເຊາະເຈື່ອນອັນເນື່ອງມາຈາກການຄາດໄຖໃຫ້ໜ້ອຍລົງ ກວ່າການປູກຝັງນັ້ນ ແມ່ນອາດ ຈະອີງໃສ່ການຫຼຸດຜ່ອນອັດຕາການແຕກແຫງຂອງດິນ (ທີ່ລົງຮອດ 64% Mamo and Bubenzer 2001) ແລະ ການເພີ່ມລະດັບການຊຶມນ້ຳຂອງດິນ (Husain et al. 2002).

ເຖິງແນວໃດກໍ່ຕາມ, ກໍ່ຍັງຈຳເປັນຈະຕ້ອງມີຈຳນວນຂໍ້ມູນທີ່ຫຼວງຫຼາຍ ກ່ຽວກັບຜົນກະທົບຂອງການ ຫຼຸດຜ່ອນໄລຍະຄາດໄຖທີ່ສູນເສຍດິນ ແລະ ທາດກາກບອນໄປໃນໄລຍະເວລາ ປູກຝັງຂອງວົງຈອນ ການເຮັດໄຮ່ເລື່ອນລອຍ. ຈຸດປະສົງຕົ້ນຕໍຂອງການສຶກສາຄົ້ນຄວ້າ ແມ່ນເພື່ອຕີລາຄາຜົນກະທົບ ຂອງໄລຍະການຄາດໄຖທີ່ແຕກຕ່າງກັນກ່ຽວກັບການສູນເສຍນ້ຳໃນດິນ, ຝຸ່ນນອນຕົມ ແລະ ທາດກາກບອນພາຍໃນເນີນອ່າງນ້ຳຂະໜາດນ້ອຍ. ຈຸດປະສົງອັນທີ່ສອງ ແມ່ນເພື່ອປະເມີນຜົນກົນ ໄກທີ່ກ່ຽວຂ້ອງກັບການປ່ຽນແປງເຊາະເຈື່ອນ ຂອງດິນໜຽວດ້ວຍການທົດລອງເບິ່ງຄວາມທົນທານ ຂອງໂຄງສ້າງການຈັບຕົວຂອງດິນ. (e.g. Le Bissonnais and Arrouays 1996; Barthès and Roose 2002).

ການສຶກສາຄົ້ນຄວ້າແມ່ນປະຕິບັດ ຢູ່ພື້ນທີ່ເຂດພູເຂົາທາງພາກເໜືອຂອງລາວ, ທີ່ຊຶ່ງມີການເຮັດ ໄຮ່ເລື່ອນລອຍກວມເອົາໜຶ່ງສ່ວນສາມຂອງດິນທີ່ທຳການຜະລິດກະສິກຳ (Dufumier and Weigel 1996) ມັນພົວພັນເຖິງການຕີລາຄາລວມເບິ່ງການເຊາະເຈື່ອນຂອງນ້ຳ, ຝຸ່ນນອນຕົມ ແລະທາດ ກາກບອນໃນພື້ນທີ່ການທົດລອງຂະໜາດນ້ອຍ 1 ຕາແມັດ ພາຍໃນໄລຍະໄກ້ທີ່ແຕກຕ່າງກັນ ຂອງປັດໄຈທາງດ້ານສິ່ງແວດລ້ອມ, ແລະ ຮ່ອງລະບາຍນ້ຳຂອງອ່າງນ້ຳຂະໜາດ 0,6 ເຮັກຕາ. ການວັດແທກເບິ່ງການເຊາະເຈື່ອນ ຂອງດິນນາແມ່ນປະຕິບັດຢູ່ໃນພື້ນທີ່ ການທົດລອງຂະໜາດ ນ້ອຍທີ່ມີການຄາດໄຖເພື່ອປູກຝັງໃນຮອບວຽນສີ່ປີ (F4) ແລະ ການປູກຝັງແບບລຽນຕິດ(F0).ນອກ ຈາກນີ້ ຍັງຈະມີການຕີລາຄາເບິ່ງຄວາມທົນທານໃນການຈັບຕົວຂອງດິນໃນຫ້ອງທົດລອງນຳ.

ຜົນໄດ້ຮັບທີ່ວາງເອົາໄວ້ແມ່ນເພື່ອເພີ່ມຄວາມຮູ້ ກ່ຽວກັບຂະບວນການຄວບຄຸມ ແລະ ປັດໄຈການ ເຊາະເຈື່ອນຂອງນ້ຳ, ແລະ ທັງຊ່ວຍໃນການຕັດສິນໃຈໃນດ້ານການຄຸ້ມຄອງດິນ ແລະ ວາງແຜນ ນຳໃຊ້ດິນ. ນອກຈາກນີ້ແລ້ວ, ຜົນທີ່ໄດ້ຮັບເຫຼົ່ານີ້ຍັງຈະຊ່ວຍໃຫ້ການວັດແທກເບິ່ງປັດໄຈການຂະ ຫຍາຍຕົວຂອງພືດເພື່ອເປັນແບບຢ່າງການຄາດຄະເນການເຊາະເຈື່ອນຂອງນ້ຳ ເຊັ່ນ: USLE or USLEM (Wishmeier and Smith 1978; Kinnell 2001).

## ອຸປະກອນ ແລະ ວິທີການ

### ລັກສະນະຂອງສະຖານທີ່

ສະຖານທີ່ທີ່ໃຊ້ໃນການສຶກສາຄົ້ນຄວ້າແມ່ນອ່າງນ້ຳຂະໜາດ 0,6 ເຮັກຕາ, ທີ່ຕັ້ງຢູ່ໃນແຂວງຫຼວງ ພະບາງ. ປະລິມານຝົນຕົກປະຈຳປີສະເລ່ຍແມ່ນສູງກວ່າເມື່ອສາມສິບປີທີ່ຜ່ານມາເຖິງ 1,403ມມ. ອຸນຫະພູມປະຈຳປີສະເລ່ຍ 25°C. ສອງລະດູການທີ່ແຕກຕ່າງກັນໄດ້ກາຍເປັນລັກສະນະສະເພາະ ຂອງສະຖານທີ່ ທີ່ໃຊ້ໃນການສຶກສາຄົ້ນຄວ້າ: ລະດູຝົນເລີ່ມແຕ່ເດືອນເມສາ ຫາເດືອນຕຸລາ ແລະ ລະດູແລ້ງແມ່ນເລີ່ມແຕ່ເດືອນພະຈິກຫາເດືອນມີນາ. ຄວາມສູງທຽບໃສ່ລະດັບນ້ຳທະເລໃນບໍລິເວນ ອ່າງນ້ຳກະປະມານ 5ມ ຕາມແບບຄິດໄລ່ດ້ວຍດີຈີຕອລ (DEM) ຊຶ່ງເກີດຈາກການໃຊ້ເຄື່ອງ ມືວັດແທກ

ທີໂອໂດໄລທ໌(theodolite), ແຕ່ລະດັບ 514 ຫາ 588 ມ. ຫ້ວຍເລິກໃຫຍ່ທີ່ຢູ່ຈຸດໃຈກາງ ຖາວອນ ແຜ່ລາມອອກມາຈາກປາກຂອງອ່າງນ້ຳເນັ່ງໄປໃສ່ເນີນພູທີ່ໜຶ່ງຂອງສາມເນີນ.

ອ່າງນ້ຳດັ່ງກ່າວແມ່ນເປັນຕົວແທນຂອງການຖາງ ແລະ ຈູດໂດຍບໍ່ມີລະບົບຂໍ້ມູນຂອງອາຊີຕາເວັນອອກສ່ຽງໃຕ້. ໂດຍສະເພາະແລ້ວມັນໄດ້ສະແດງໃຫ້ເຫັນຜົນກະທົບ ຂອງການຫຼຸດຜ່ອນໄລຍະການຄາດໄຖລົງເທື່ອລະໜ້ອຍຈາກ 10-15 ປີ ໃນຊຸມປີ 1970 ມາເປັນ 5-2 ປີ ໃນປະຈຸບັນນີ້. ເຊັ່ນດຽວກັນກັບການບຸກເບີກທຳການປູກຝັງຢ່າງຕໍ່ເນື່ອງໃນເຂດອ່າງນ້ຳທັງໝົດ. ການນຳໃຊ້ ດິນສ່ວນຫຼາຍແມ່ນດິນໝູນວຽນ (80%) ທີ່ເປັນຕົ້ນເຫດພາໃຫ້ມີການເຮັດໄຮ່ເລື່ອນລອຍ. ປ່າໄມ້ແມ່ນມີໜ້ອຍກວ່າ20% ໃນພື້ນທີ່ອ່າງນ້ຳທັງໝົດ. ການເຮັດໄຮ່ປູກເຂົ້າ ແລະ ໝາກເດືອຍແມ່ນ ຜົນລະປູກຕົ້ນຕໍ. ໃນພື້ນທີ່ເນີນພູ, ໂດຍທົ່ວໄປຜົນລະປູກແມ່ນປູກຢູ່ໃນບໍລິເວນຕີນເນີນ ຫຼື ກາງເນີນກົງກັນຂ້າມ ພື້ນທີ່ຈອມເນີນແມ່ນຢູ່ທາງພື້ນປ່າ ແລະ ບໍລິເວນນ້ຳຖ້ວມຂັງຢູ່ກ້ອງບ່ອນຕົ້ນໄມ້ຂຶ້ນ.

---

*ການຫຼຸດຜ່ອນ ແລະ ຢຸດເຊົາການຄາດໄຖຄືແນວນັ້ນອາດຈະສົ່ງ ຜົນສະທ້ອນໂດຍກົງຕໍ່ການເຊາະເຈື່ອນຈາກນ້ຳ ແລະ ລະດັບ ຂອງອ່າງນ້ຳ.*

---

## ການຄິດໄລ່ເບິ່ງການສູນເສຍນ້ຳໃນດິນ, ຝຸ່ນນອນຕົມ ແລະ ທາດກາກບອນ

ການສູນເສຍນ້ຳໃນດິນ, ດິນນອນຕົມ ແລະ ທາດກາກບອນໄດ້ຮັບການວັດແທກເບິ່ງໃນລະຫວ່າງລະດູຝົນໃນປີ 2002 ຢູ່ບໍລິເວນປາກອ່າງນ້ຳ ແລະ ພື້ນທີ່ຂະໜາດ 1 ແມັດກ້ອນ ທີ່ມີການນຳໃຊ້ແບບດຽວຕິດຕໍ່ກັນສາມປີ ແລະ ການປູກຝັງທີ່ມີການການຄາດໄຖໃນຮອບວຽນ 4 ປີ (ການປູກຝັງແບບລຽນຕິດ (F0). ແລະ ການຄາດໄຖເພື່ອປູກຝັງໃນຮອບວຽນສີ່ປີ (F4) ຕາມລຳດັບ)

ການວັດແທກທີ່ງນາແມ່ນເລີ່ມປະຕິບັດ ແຕ່ວັນທີ 15 ເດືອນພຶດສະພາ ປີ 2002 ໄປຫາວັນທີ່ 3 ເດືອນພະຈິກ ປີ 2002. ຫຼັງຈາກວັນທີ່ 5 ເດືອນມິຖຸນາໄປ, ການວັດແທກຖືວ່າເກີດຂຶ້ນໃນເງື່ອນໄຂຂອງການສູນເສຍສະພາບດິນຢ່າງຕໍ່ເນື່ອງ ເພາະວ່າບໍ່ມີການສຳຫຼວດເບິ່ງການແຕກແຫງຂອງດິນ ແລະ ຫ້ວຍຮ່ອງທີ່ສຳຄັນຫຍັງໃນພື້ນທີ່ທົດລອງເຫຼົ່ານັ້ນ. ຢູ່ປາກອ່າງນ້ຳ, ເຂື່ອນຂະໜາດນ້ອຍໄດ້ຖືກສ້າງຂຶ້ນມາເພື່ອຄາດຄະເນເບິ່ງປະລິມານການສູນເສຍຝຸ່ນນອນຕົມ ແລະ ທາດກາກບອນ. ເປັນໄປໄດ້ທີ່ຈະຫຼຸດຜ່ອນຄວາມຫຼາກຫຼາຍຂອງປັດໄຈສິ່ງແວດລ້ອມ(ຕົວຢ່າງປະເພດດິນ, ທໍລະນີວິທະຍາ, ການກຳນົດແຜນຜັງພູມມິປະເທດ) ດ້ວຍການເລືອກເອົາອ່າງນ້ຳໃດໜຶ່ງ ທີ່ມີໄລຍະການ ຄາດໄຖທີ່ແຕກຕ່າງກັນຕາມແຕ່ລະບ່ອນ. ສະນັ້ນການສູນເສຍນ້ຳໃນດິນ, ດິນ ແລະ ທາດກາກບອນຈຶ່ງໄດ້ຮັບການຕິດຕາມເບິ່ງ ໂດຍໃຊ້ພື້ນທີ່ທົດລອງຂະໜາດນ້ອຍສາມບ່ອນຂະໜາດ 1 ແມັດກ້ອນຕໍ່ປະຫວັດການນຳໃຊ້ດິນ. ພື້ນທີ່ທົດລອງຂະໜາດນ້ອຍຕັ້ງຢູ່ເນີນລົງຂອງອ່າງນ້ຳທີ່ນອນຢູ່ໃນ Alfisols. ຄ່າສະເລ່ຍຄວາມເນີນແມ່ນ 45%. ສອງແມັດແຍກກັນໃນແຕ່ລະພື້ນທີ່. ການຄາດໄຖເພື່ອປູກຝັງໃນຮອບວຽນສີ່ປີ (F4) ແມ່ນໄດ້ຮັບການປະຕິບັດຢ່າງຊັດເຈນໃນວັນທີ 10 ເດືອນມີນາ, ປັກຫຼັກໝາຍເຂດໃສ່ດິນເລິກ 0.5 ມ, ພາຍຫຼັງທີ່ຈູດແລ້ວໃນວັນທີ 22 ເດືອນມີນາ, ກໍ່ຈະໄດ້ທຳການຫວ່ານກ້າໃນວັນທີ 15 ເດືອນພຶດສະພາ, ຈະມີການຫຼົກຫຍ້າໃນແຕ່ລະພື້ນທີ່ທົດລອງ ພ້ອມກັນໃນວັນທີ 19

ເດືອນມິຖຸນາ, ວັນທີ 1 ແລະ 27 ເດືອນສິງຫາ. ສຳລັບການຫຼົກຫຍ້າ, ຊາວກະສິກອນຈະເປັນຜູ້ໄຖພື້ນທີ່ໃນລະດັບຕື້ນ. ລັກສະນະຂອງໜ້າດິນ ແລະ ຄວາມຫຍາບກະດ້າງຈະຖືກຄິດໄລ່ບອກຄ່າອອກມາຢ່າງຊັດເຈນ ແລະ ນຳໃຊ້ເລເຊີ່ໃນແຕ່ພື້ນທີ່ຕະນ່າງຂະໜາດ 5 ຊມ ສະເໝີກັນ.

ສຳລັບຝົນທີ່ຕົກລົງມາ, ມີຫຼາຍລັກສະນະເຊັ່ນ: ປະລິມານນ້ຳຝົນ, ປະລິມານນ້ຳຝົນຫຼາຍສຸດ ຫຼືໂດຍສະເລ່ຍຈະຖືກຄາດຄະເນ ດ້ວຍເຄື່ອງວັດແທກນ້ຳຝົນອັດຕະໂນມັດຢ່າງໜ້ອຍ 6 ບາດກ້າວ. ຫຼັງຈາກຝົນຕົກໃນແຕ່ລະຄັ້ງ, ປະລິມານນ້ຳໃນດິນທັງໝົດທີ່ມາຈາກແຕ່ລະພື້ນທີ່ທົດລອງຈະຖືກວັດແທກ ແລະ ສ່ວນປະກອບຕ່າງໆກໍ່ຈະຖືກທ້ອນໂຮມເຂົ້າກັນ ແລະ ອົບໃຫ້ແຫ້ງດ້ວຍເຕົາ ເພື່ອກະຕວງປະລິມານຝຸ່ນນອນຕົມທີ່ຈັບຕົວ ແລະ ຝຸ່ນນອນຕົມທີ່ສູນເສຍໄປ. ມີທັງໝົດ 210 ຕົວຢ່າງຈາກການຮັບໂຮມ ເອົາມາຈາກພາຍຸຝົນ 35 ຄັ້ງ.

ເພື່ອກະຕວງເບິ່ງການເຊາະເຈື່ອນຂອງດິນຢູ່ປາກອ່າງນ້ຳ ແລະ ພື້ນທີ່ດິນຕ່າງໆ. ໄດ້ມີການກຳນົດສ່ວນປະກອບຂອງທາດບຳລຸງລ້ຽງທີ່ເປັນກາກບອນໃນຝຸ່ນນອນຕົມ, ຊຶ່ງປະຕິບັດໃນເວລາ ທີ່ມີຝົນຕົກຄັ້ງສຳຄັນຂອງປີ 2002 ແລະ ຍັງມີກໍລະນີເພີ່ມເຕີມສີ່ກໍລະນີຈາກຝົນທີ່ຕົກ 35 ຄັ້ງ. ການວັດແທກໄດ້ປະຕິບັດໄປຕາມເຕັກນິກການປຸງນທາດຂອງ Heanes (1984).

## ການຄິດໄລ່ເບິ່ງຄວາມທົນທານທາງດ້ານໂຄງສ້າງຂອງດິນ

ການຄິດໄລ່ເບິ່ງຄວາມທົນທານ ທາງດ້ານໂຄງສ້າງຂອງດິນໃນການປູກຝັງແບບລຽນຕິດ (F0). ແລະການຄາດໄຖເພື່ອປູກຝັງໃນຮອບວຽນສີ່ປີ(F4) ແມ່ນນຳໃຊ້ດິນທີ່ສະສົມລວມກັນກ່ອນໄລຍະລະດູຝົນໃນບໍລິເວນອ້ອມແອ້ມພື້ນທີ່ທຳການທົດລອງ. ການທົດລອງແມ່ນລົງມືປະຕິບັດ ຢູ່ໃນຫ້ອງທົດລອງໂດຍປະຕິບັດຕາມ Le Bissonnais (1996). ເກັບເອົາດິນຕົວຢ່າງຈາກທົ່ງນາຄັ້ງທຳອິດໃນວັນທີ 5 ເດືອນພຶດສະພາ, ພາຍຫຼັງທີ່ຈູດເສດຜົນລະປູກ ແລະ ດິນຄາດໄຖມາກ່ອນໜ້ານີ້. ດິນຈຳນວນຫຼວງຫຼາຍ(5ກິໂລ) ຈະຖືກທ້ອນໂຮມກັນເຂົ້າຈາກຊັ້ນດິນລະດັບ 0.5 ຊມ ແລະ ໃຫ້ມັນຈັບຕົວກັນໃນຂະໜາດ 3-5 ມມ, ຊຶ່ງຈະສຳເລັດໄດ້ດ້ວຍການຮ່ອນດ້ວຍຕະນ່າງ ແລະ ຈາກນັ້ນຈຶ່ງນຳໄປອົບໃຫ້ແຫ້ງໃນເຕົາດ້ວຍອຸນຫະພູມ 40°C ເປັນເວລາ 24 ຊົ່ວໂມງ. ສ່ວນປະກອບຂອງກາກບອນໃນດິນຕົວຢ່າງນັ້ນ ຈະຖືກຄິດໄລ່ດ້ວຍວິທີຂອງ Heanes (1984).

ນອກຈາກນີ້ແລ້ວພາຍຫຼັງເກັບກ່ຽວເຂົ້າ, ກໍ່ຈະມີການເວົ້າເຖິງເລື່ອງໂຄງສ້າງຂອງດິນສຳລັບດັດແປງໃນແຕ່ລະບ່ອນ. ປັດໄຈກຳນົດຕໍ່ໄປນີ້ກໍ່ຈະໄດ້ຮັບການວັດແທກເຊັ່ນກັນ (i) ຈຳນວນ, ປະເພດ (ນັກສຳຫຼວດດິນ, 1999) ແລະ ຄວາມໜາ(ລວມທັງຄວາມໜາຂອງດິນຫຼົມ)ໃນລວງນອນ; (ii) Munsell chroma ທີ່ປຽກຊຸ່ມ ແລະ ຄ່າຂອງມັນ; (iii) ໂຄງສ້າງ ແລະ ລັກສະນະສຳຄັນ. ນອກນັ້ນຍັງມີການວັດແທກເບິ່ງທາດແທ້, ບໍລິມາດຄວາມໜາແໜ້ນ ແລະ ທາດບຳລຸງລ້ຽງທີ່ເປັນກາກບອນກໍ່ຈະໄດ້ປະຕິບັດຢູ່ໃນແຕ່ລະເຂດພື້ນທີ່ທົດລອງ ຈາກດິນຕົວຢ່າງທີ່ເກັບຮວບຮວມມາໃນລະດັບຊັ້ນ 0.5 ຊມ ເພື່ອສຶກສາເບິ່ງລະບົບທີ່ຕັ້ງໃນທົ່ວພື້ນທີ່ເຂດການທົດລອງ. ການກະຕວງເບິ່ງບໍລິມາດຄວາມໜາແໜ້ນແມ່ນໃຊ້ວິທີວັດແທດບໍລິມາດຮູບທໍ່ກົມຂະໜາດ 250 ມິນລີລິດ (Anderson and Ingram 1993).

## ຜົນໄດ້ຮັບ

### ການສູນເສຍນ້ຳໃນດິນ, ຝຸ່ນນອນຕົມ ແລະ ທາດກາກບອນ

ລະດູຝົນປີ 2002, ແຕ່ວັນທີ 25 ເດືອນພຶດສະພາ ຫາ ວັນທີ 25 ເດືອນຕຸລາ, ມີປະລິມານນ້ຳຝົນຕົກລົງມາທັງໝົດ 1,651 ມມ. ໃນລະຫວ່າງນີ້ມີນ້ຳໃນດິນໄຫຼອອກມາ 35 ເທື່ອ, ມີນ້ຳຝົນທັງໝົດ 1,023 ມມ. ປະລິມານນ້ຳຝົນໜ້ອຍສຸດ ແລະ ຫຼາຍສຸດປະມານ 4.5 ແລະ 162 ມມ ຕາມລຳດັບ, ໂດຍມີຄ່າສະເລ່ຍຢູ່ທີ່ 17 ມມ. ໃນລະດັບອ່າງນ້ຳ, ຄ່າສະເລ່ຍຂອງນ້ຳໃນດິນທີ່ເປັນຄ່າສຳປະສິດ (R)ແມ່ນ 0.5 $mm\,mm^{-1}$ ພ້ອມດ້ວຍຄ່າ 0 ໄປຫາ 5.7 $mm\,mm^{-1}$. ໃນລະຫວ່າງຊ່ວງທີ່ມີຝົນຕົກ 5 ຄັ້ງທຳອິດຄ່າສະເລ່ຍຂອງນ້ຳໃນດິນ ທີ່ເປັນຄ່າສຳປະສິດແມ່ນມີຕ່ຳຫຼາຍ ເພີ່ມຂຶ້ນພຽງເລັກໜ້ອຍເທົ່ານັ້ນຂອງຈຳນວນທະວີຄູນທີ່ເກີດຂຶ້ນ. ບໍ່ມີການເຊາະເຈື່ອນຂອງຝຸ່ນນອນຕົມ ຫຼືທາດກາກບອນແຕ່ຢ່າງໃດໃນລະຫວ່າງນີ້. ຕໍ່ມາການເຊາະເຈື່ອນຂອງນ້ຳໃນດິນ ແລະ ຝຸ່ນນອນຕົມ ໄດ້ເພີ່ມທະວີຂຶ້ນໃນເທື່ອທີ່ 30 ຍົກເວັ້ນເທື່ອທີ່ 23. ໃນທ້າຍລະດູຝົນຄ່າທະວີຄູນຂອງນ້ຳໃນດິນແມ່ນ 17 $l/m^{-2}$ ແລະ ຄ່າທະວີຄູນຂອງການສູນເສຍຝຸ່ນນອນຕົມແມ່ນ 0.431 $kg/m^{-2}$.

---

*ການສູນເສຍຝຸ່ນນອນຕົມ ແລະ ທາດກາກບອນນັ້ນແມ່ນມີຢ່າງຫວງຫຼາຍພາຍໃຕ້ການປູກຝັງທີ່ລຽນຕິດຫຼາຍກວ່າການປູກຝັງໃນຮອບວຽນສີ່ປີ.*

---

ຢູ່ພື້ນທີ່ທຳການທົດລອງ, ຄ່າສະເລ່ຍຂອງນ້ຳໃນດິນທີ່ເປັນຄ່າສຳປະສິດແມ່ນ 25 $mm\,mm^{-1}$ ແລະ ການສູນເສຍຝຸ່ນນອນຕົມ ແລະ ທາດກາກບອນແມ່ນ 0.045 $kg/m^{-2}$ ແລະ 34 $g/m^2$ ຕາມລຳດັບ. ນ້ຳໃນດິນແຕກຕ່າງກັນກັບໄລຍະການຄາດໄຖ ທີ່ສຶກສາຄົ້ນຄວ້າ ແຕ່ວ່າການສູນເສຍຝຸ່ນນອນຕົມ ແລະ ທາດກາກບອນນັ້ນແມ່ນມີຢ່າງຫວງຫຼາຍພາຍໃຕ້ ການປູກຝັງທີ່ລຽນຕິດ (F0) ຫຼາຍກວ່າການປູກຝັງໃນຮອບວຽນສີ່ປີ. ການຄາດໄຖແມ່ນພົວພັນ ໂດຍກົງກັບການປູກຝັງ ທີ່ຫຼຸດຜ່ອນການເຊາະເຈື່ອນ ຂອງຝຸ່ນນອນຕົມໄດ້ເຖິງ 54%, ສູນເສຍກາກບອນໄປທັງໝົດ 52%, ແລະຄ່າສະເລ່ຍການຈັບຕົວຂອງຝຸ່ນນອນຕົມ ແລະ ນ້ຳໃນດິນແມ່ນ 34 ແລະ 14% ຕາມລຳດັບ. ປະລິມານດິນນອນຕົມທີ່ສູນເສຍ ໄປທັງໝົດໂດຍສະເລ່ຍໃນການປູກຝັງແບບລຽນຕິດ ແມ່ນຫຼາຍກວ່າສອງເທົ່າຂອງການປູກຝັງແບບຮອບວຽນສີ່ປີ. ໃນຝຸ່ນນອນຕົມທີ່ຖືກກັດເຊາະໄປນັ້ນ ໄດ້ສະແດງໃຫ້ເຫັນປະລິມານ ທາດບຳລຸງລ້ຽງ ກາກບອນທີ່ມີຢ່າງຫຼວງຫຼາຍກວ່າດິນທຳມະດາ. ໃນປີ 2002 ການຄຳນວນປະຈຳປີໄດ້ຊີ້ໃຫ້ເຫັນວ່າ ການກັດເຊາະຂອງທາດກາກບອນແມ່ນ 46 $g/m^{-2}$ ພາຍໃຕ້ເງື່ອນໄຂການປູກຝັງແບບລຽນຕິດ ແລະ 22 $g/m^{-2}$ ພາຍໃຕ້ເງື່ອນໄຂການປູກຝັງໃນຮອບວຽນ 4 ປີ. ຈຳນວນຕົວເລກເຫຼົ່ານີ້ໄດ້ສະແດງໃຫ້ເຫັນວ່າ 4.3% ສຳລັບການປູກຝັງແບບລຽນຕິດ ແລະ 2.1% ສຳລັບການປູກຝັງແບບຮອບວຽນ 4 ປີໃນລະດັບຊັ້ນດິນ 0-5 cm.

ໃນຕອນຕົ້ນຂອງລະດູຝົນ (ແຕ່ວັນທີ 25 ເດືອນພຶດສະພາ ຫາ ວັນທີ 6 ເດືອນມິຖຸນາ) ພາຍໃຕ້ເງື່ອນໄຂຂອງດິນລ້ອນທີ່ມີການເກາະຍຶດຕ່ຳ, ມີສອງສາມຢ່າງທີ່ແຕກຕ່າງກັນລະຫວ່າງການ

ປະຕິບັດຮັກສາ. ຄວາມແຕກຕ່າງທີ່ສາມາດເຫັນໄດ້ຈາກຝົນທີ່ຕົກໃນຄັ້ງທີ່ສິບ. ການເຊາະເຈື່ອນສ່ວນຫຼາຍທີ່ເກີດຂື້ນໃນປີ 2002 ແມ່ນເກີດຂື້ນໃນລະຫວ່າງກາງລະດູຝົນ, ໂດຍສະເພາະແລ້ວແມ່ນໄລຍະທີ່ມີຝົນຕົກໜັກ ຂອງວັນທີ 20 ເດືອນກໍລະກົດ. ຝົນຕົກຄັ້ງນີ້ກວມເອົາ 65% ແລະ 37% ຂອງດິນທີ່ສູນເສຍໄປ ໃນແຕ່ລະປີທັງໃນເງື່ອນໄຂປູກຝັງແບບລຽນຕິດ ແລະ ປູກຝັງແບບຮອບວຽນ 4 ປີ ຕາມລຳດັບ. ນອກຈາກ ນີ້ແລ້ວ, ໃນລະຫວ່າງທີ່ມີຝົນຕົກຫຼາຍນີ້ໄດ້ສຳຫຼວດພົບວ່າການສູນເສຍດິນໃນເງື່ອນໄຂ ການປູກຝັງແບບລຽນຕິດນັ້ນ ແມ່ນມີຫຼາຍກວ່າການປູກຝັງແບບຮອບວຽນ 4 ປີ.

## ການຄິດໄລ່ເບິ່ງຄວາມທົນທານທາງດ້ານໂຄງສ້າງຂອງດິນ

ໃນແຕ່ລະຄຳຕອບຂອງພື້ນທີ່ທົດລອງ, MWD ແລະ ຄ່າຜິດດ່ຽງມາດຕະຖານຂອງມັນໄດ້ຮັບການຄິດໄລ່ຈາກສາມຄຳຕອບໃນຫ້ອງທົດລອງ, MWD ສຳລັບຄຳຕອບທີ່ແຕກຕ່າງກັນແມ່ນ 2.16 ຫາ 3.19 ມມ. ຕົວເລກດັ່ງກ່າວນີ້ແມ່ນອີງໃສ່ Le Bissonnais and Arrouays (1996) ທີ່ເຮັດວຽກຢູ່ເຂດທະເລ Mediterranean ແລະ ພື້ນເຂດຄວບຄຸມ, ທີ່ຖືວ່າຂ້ອນຂ້າງສູງ. ຄ່າສະເລ່ຍສຳລັບເງື່ອນໄຂການປູກຝັງແບບຮອບວຽນ 4 ປີ (3.13ມມ) ແມ່ນຖືວ່າສູງກວ່າເງື່ອນໄຂປູກຝັງແບບລຽນຕິດ (2.94 ມມ). ຄວາມແຕກຕ່າງທີ່ຫຼຸດໂຕນກັນຫຼາຍ ແມ່ນໄດ້ຮັບການສຳຫຼວດເບິ່ງກົນໄກການແຕກແຫງ ຊຶ່ງການປູກຝັງແບບລຽນຕິດເຮັດໃຫ້ດິນບໍ່ຈັບຕົວກັນ. ນອກຈາກນີ້ທີ່ໜ້າແປກໃຈກໍ່ຄື ການປູກຝັງແບບຮອບວຽນ 4 ປີນັ້ນ ໄດ້ສ້າງອັດຕາສ່ວນຜ່າສູນກາງ ການຈັບຕົວຂອງດິນໄດ້ < 2 mm ກົງກັນຂ້າມການປູກຝັງແບບລຽນຕິວັດແທກໄດ້ > 2 mm . ຜົນໄດ້ຮັບເຫຼົ່ານີ້ສະແດງໃຫ້ເຫັນວ່າອັດຕາສ່ວນການແຕກແຫງ ຈາກການກະທົບກະເທືອນຂອງດິນ ແມ່ນມີຕ່ຳກວ່າໃນການຄາດໄຖເພື່ອປູກຝັງຮອບວຽນ 4 ປີ ແມ່ນມີຫຼາຍກວ່າການປູກຝັງແບບລຽນຕິດ. ນອກຈາກນີ້, ມັນຍັງໄດ້ສະແດງໃຫ້ເຫັນການຈັບຕົວ ຂອງດິນປ້ອງກັນການກະທົບຈາກເມັດຝົນ ທີ່ເກີດຂື້ນຈາກການຄາດໄຖ 4 ປີ. ເຖິງແນວໃດກໍ່ຕາມ; ການຄາດໄຖກໍ່ມີຄຸນປະໂຫຍດສອງສາມຢ່າງໃນ Alfisols ໃນດ້ານຂອງການຊ່ວຍໃຫ້ດິນຈັບຕົວກັນ.

## ສົນທະນາ

ການຄາດຄະເນເບິ່ງການສູນເສຍນ້ຳໃນດິນ, ຝຸ່ນນອນຕົມ ແລະ ກາກບອນໃນດິນພ້ອມກັນໃນລະດູຝົນປີ 2002 ໄດ້ປະຕິບັດຢູ່ພື້ນທີ່ທົດລອງຂະໜາດ 1 m$^2$ ພາຍໃຕ້ເງື່ອນໄຂການປູກຝັງແບບລຽນຕິດ ແລະ ແບບຮອບວຽນສີ່ປີຕາມລຳດັບ. ຈຸດປະສົງຕົ້ນຕໍຂອງການສຶກສາຄົ້ນຄວ້າ ແມ່ນເພື່ອຄິດໄລ່ເບິ່ງການເຊາະເຈື່ອນຂອງນ້ຳໃນດິນພາຍໃນອ່າງ ນ້ຳເພື່ອການກະເສດຂະໜາດນ້ອຍທີ່ຢູ່ພາກເໜືອ ຂອງລາວຊຶ່ງມັນໄດ້ສະແດງໃຫ້ເຫັນ ໄລຍະການຄາດໄຖທີ່ແຕກຕ່າງກັນ. ຜົນຂອງມັນກໍ່ຄືລະດັບອ່າງນ້ຳໄດ້ສະແດງໃຫ້ເຫັນຕົວສຳປະສິດຂອງນ້ຳໃນດິນທີ່ຕ່ຳ (<1 mm/mm$^{-1}$) ແລະການສູນເສຍ ດິນໃນລະດັບປານກາງ (0.4 kg/m$^{-2}$) ເມື່ອສົມທຽບກັບການສຶກສາຄົ້ນຄວ້າທີ່ໄດ້ປະຕິບັດມາໃນຂະໜາດ ແລະ ແລະ ເງື່ອນໄຂສິ່ງແວດລ້ອມທີ່ຄ້າຍຄືກັນ. . Gafur et al (2003) ໄດ້ຊີ້ໃຫ້ເຫັນວ່າ ນ້ຳໃນດິນທີ່ມາຈາກອ່າງນ້ຳຂະໜາດໜຶ່ງເຮັກຕາແມ່ນປະມານ 20 mm/mm$^{-1}$ ໃນບັງກະລາແດັສ. ການສູນເສຍຝຸ່ນນອນຕົມ ທີ່ເກີດຈາກການປູກຝັງແມ່ນປະມານ 1.8 kg/m$^{-2}$/y$^{-1}$. ໃນປະເທດແຄມເມີຣູນ, ການສູນເສຍດິນໃນອ່າງນ້ຳຂະໜາດນ້ອຍທີ່ເກີດຈາກການປູກຝັງແມ່ນ 10.9 kg/m$^{-2}$ (Ambassakiki et al. 1999). ການເຊາະເຈື່ອນຂອງນ້ຳທີ່ຕ່ຳກວ່າຢູ່ທາງພາກເໜືອຂອງ

ລາວອາດຈະອະທິບາຍໃຫ້ເຂົ້າໃຈໄດ້ວ່າ ເປັນຍ້ອນຄວາມເປັນໄປໄດ້ໃນການດູດຊຶມມີສູງກວ່າໃນ Alfisols. ຄວາມເປັນໄປໄດ້ ໃນການດູດຊຶມນີ້ອາດຈະເກີດຂຶ້ນຢູ່ຕາມເນີນພູທີ່ຄ້ອຍຕໍ່າ ຫຼື ຍ້ອນລັກສະນະທາງດ້ານຊີວະສາດເຊັ່ນຕົ້ນໄມ້, ຮາກໄມ້ທີ່ຢັ່ງຢາຍອອກເປັນສາຂາ ແລະ ຂຸມໃຫຍ່ໆ ອື່ນໆ. ນອກຈາກນີ້ແລ້ວ, ລະດັບການດູດຊຶມທີ່ສູງນີ້ອາດຈະເກີດຂຶ້ນພາຍໃນໃຈກາງເຂດຫ້ວຍເລິກທີ່ສຳຫຼວດໂດຍ Bryan and Poesen (1989) and Slattery and Bryan (1992). ການດູດຊຶມທີ່ສູງຄືແນວນັ້ນອາດຈະໄປຈຳກັດການລຳລຽງຝຸ່ນນອນຕົມ ດ້ວຍການຈຳກັດຂະບວນການລະບາຍອອກ ແລະ ຂະບວນການລຳລຽງຕາມຄຳສະເໜີຂອງ Kinnel (2000) or Chaplot and Le Bissonnais (2003). ການສູນເສຍກາກບອນແມ່ນ 11 g/m$^{-2}$ ເຊິ່ງຕ່ຳກວ່າທີ່ຄິດໄລ່ໂດຍ Gregorich et al. (1998), at 13 to 49 g m².

## *ໄລຍະການຄາດໄຖໄດ້ຈຳກັດການແຕກແຫງຂອງດິນທີ່ເກີດຈາກເມັດຝົນດ້ວຍການເພີ່ມຄວາມເປັນໄປໄດ້ຂອງການດູດຊຶມ*

ໃນພື້ນທີ່ທົດລອງຂະໜາດນ້ອຍລະດັບນ້ຳໃນດິນ ແລະ ການເຊາະເຈື່ອນທີ່ສູງກວ່າ, ຍິ່ງຈະເຮັດໃຫ້ຄວາມເປັນໄປໄດ້ຂອງການດູດຊຶມ ແລະ ການນອນພື້ນຂອງດິນຕົມທີ່ຢູ່ໃນອ່າງນ້ຳທີ່ສະແດງໂດຍ Le Bissonnais et al (1998). ສູງຂຶ້ນເຊັ່ນກັນ. ຄິດສະເລ່ຍແລ້ວປະລິມານນ້ຳໃນດິນແມ່ນຫຼາຍກວ່າຫ້າສິບເທົ່າ ແລະ ການລຳລຽງຝຸ່ນນອນຕົມ ແລະ ກາກບອນແມ່ນເປັນເຈັດ ແລະ ສາມທົບໃນພື້ນທີ່ທົດລອງຂະໜາດນ້ອຍ ຫຼາຍກວ່າໃນລະດັບອ່າງນ້ຳ. ພາຍໃນອ່າງນ້ຳ, ການສົມທຽບເບິ່ງການເຊາະເຈື່ອນຂອງນ້ຳໃນພື້ນທີ່ທົດລອງ ແມ່ນແຕກຕ່າງກັນພຽງໄລຍະຂອງການຄາດໄຖ ຊຶ່ງມັນໄດ້ສະແດງໃຫ້ເຫັນການເຊາະເຈື່ອນ ທີ່ເກີດຈາກການປູກຝັງແບບລຽນຕິດນັ້ນ ແມ່ນມີສູງກວ່າການປູກຝັງທີ່ປະຕິບັດຕາມໄລຍະການຄາດໄຖ. ການປ້ອງກັນດິນຈາກກົນໄກ ການແຕກແຫງທີ່ດີກວ່າຄືແນວນັ້ນ ພາຍຫຼັງຈາກການຄາດໄຖເປັນເວລາດົນນານແລ້ວ ກໍ່ຍັງບໍ່ສາມາດອະທິບາຍໄດ້ໂດຍກົງເຖິງຄວາມແຕກຕ່າງທາງດ້ານໂຄງສ້າງຂອງດິນ, ສ່ວນປະກອບຂອງດິນໜຽວ ແລະ ດິນກາກບອນໃນການຈັບຕົວກັນ (Le Bissonnais and Singer 1993; Le Bissonnais and Arrouays 1996; Chenu et al. 2000; Malam Issa et al. 2001). ຜົນທີ່ໄດ້ຮັບອີກຢ່າງໜຶ່ງກໍ່ຄືຄວາມທົນທານໃນການຈັບຕົວກັນຂອງດິນທີ່ມີຄວາມຕ້ານທານຕໍ່ການແຕກແຫງສູງໃນການສຶກສາຄົ້ນຄວ້າເບິ່ງ Alfisols. ເຖິງແມ່ນວ່າການປະຕິບັດສອງແບບນີ້ຈະມີຫຼື ບໍ່ມີການຄາດໄຖທີ່ອີງໃສ່ການປູກຝັງທີ່ສະແດງເຖິງການຈັບຕົວທີ່ທົນທານຂອງດິນກໍ່ຕາມ (MWD = 2.94 and 3.13 mm, ຕາມລຳດັບ), ການຈັບຕົວຂອງດິນທີ່ເກີດຈາກການຄາດໄຖດິນ ເປັນເວລາດົນນານສະແດງໃຫ້ວ່າຄວາມຕ້ານທານຕໍ່ກົນໄກການແຕກແຫງນັ້ນແມ່ນມີສູງກວ່າ. ເຖິງແນວໃດກໍ່ຕາມ. ເຖິງແມ່ນວ່າການຈັບຕົວ ຂອງດິນຈະບໍ່ໄດ້ກຳນົດຢ່າງຕາຍຕົວກໍ່ຕາມ, ການສູນເສຍດິນຍັງມີສູງຢູ່ເມື່ອສົມທຽບກັບການສຶກສາຄົ້ນຄວ້າທີ່ມີຢູ່ພາຍໃຕ້ເງື່ອນໄຂລະດັບກາງ (0.1 to 0.20 kg/m$^{-2}$ ສຳລັບຝຸ່ນນອນຕົມທັງໝົດ, Chaplot and Le Bissonnais 2003) ຫຼື ພາຍໃຕ້ເງື່ອນໄຂຄວາມຮ້ອນໃກ້ຄຽງກັນ (0.6 to 3.3 kg/m$^{-2}$, Janeau et al. 2003).

## ສະຫຼຸບ

ການສຶກສາຄົ້ນຄວ້ານີ້ໄດ້ສະແດງໃຫ້ເຫັນບາງຂັ້ນຕອນທີ່ພົວພັນເຖິງການເຊາະເຈື່ອນຂອງຫ້ວຍຮ່ອງ ດ້ວຍການນຳໃຊ້ວິທີການປະສົມປະສານກັນລະຫວ່າງຜົນສຳຫຼວດໃນຫ້ອງທົດລອງ ແລະ ໃນພື້ນທີ່ຕົວຈິງ. ບົດສະຫຼຸບຕົ້ນຕໍແມ່ນເວົ້າເຖິງໄລຍະການຄາດໄຖ ພາຍໃຕ້ວົງຈອນການເຮັດໄຮ່ເລື່ອນລອຍ ທີ່ສາມາດປ້ອງກັນດິນເຊາະເຈື່ອນ, ສະເພາະໃນພື້ນທີ່ທົດລອງ, ດ້ວຍການຈຳກັດການແຕກຕົວ ຂອງດິນອັນເກີດ ມາຈາກເມັດຝົນ, ແລະ ໃນລະດັບອ່າງນ້ຳແມ່ນຊຸກຍູ້ໃຫ້ມີການດູດຊຶມຂອງດິນ.

<u>ຮູບ 1. ແບບຢ່າງການແບ່ງໜ້າທີ່ຂອງນ້ຳ ໃນອ່າງນ້ຳທີ່ເປັນເນີນພູພາຍໃຕ້ເງື່ອນໄຂການເຮັດໄຮ່ເລື່ອນລອຍ. ຈຸດດີຂອງລັກສະນະທາງດ້ານຊີວະສາດເຊັ່ນຮາກໄມ້, ຕໍໄມ້ທີ່ຍັງຄົງຫຼົງເຫຼືອ ຢູ່ພາຍຫຼັງທີ່ມີການຖາງ ແລ້ວຈູດ ເພື່ອບໍ່ໃຫ້ມີນ້ຳດູດຊຶມ ແລະ ການປັບສະພາບນ້ຳໃນດິນຄືນໃໝ່.</u>




ໃນລະດັບອ່າງນ້ຳຂະໜາດນ້ອຍ, ການເຊາະເຈື່ອນຂອງດິນແມ່ນມີຕໍ່າເມື່ອທຽບໃສ່ຄວາມສາມາດໃນການດູດຊຶມທີ່ມີສູງ ຊຶ່ງຈຳກັດການລຳລຽງຂອງຝຸ່ນນອນຕົມ. ໃນລະດັບນີ້, ການເຊາະເຈື່ອນແມ່ນມີຂອບເຂດຈຳກັດ. ເຖິງແມ່ນວ່າການແຕກຕົວຂອງດິນ ແລະ ການຜະລິດນ້ຳໃນດິນອອກມາຈະມີສູງໃນລະດັບພື້ນທີ່ທົດລອງ, ແຕ່ມັນກໍ່ບໍ່ປະກົດມີຢ່າງຈະແຈ້ງໃນປາກອ່າງ, ສະແດງໃຫ້ເຫັນການດູດຊຶມໃນພື້ນທີ່ສະເພາະໃດໜຶ່ງທີ່ມີຢູ່: ຫ້ວຍຮ່ອງຕ່າງໆ ແລະ ລັກສະນະທາງດ້ານຊີວະສາດເຊັ່ນ ຮາກໄມ້ ແລະ ຕໍໄມ້ທີ່ຍັງຄົງຫຼົງເຫຼືອຢູ່ພາຍຫຼັງທີ່ມີການຖາງ ແລ້ວຈູດ(ຮູບ 1). ນອກຈາກນີ້. ລັກສະນະທາງດ້ານຊີວະສາດເຫຼົ່ານີ້ຍັງສະໜອງບ່ອນຢູ່ອາໄສ ແລະ ທາດບຳລຸງລ້ຽງໃຫ້ແກ່ຈຸລະ

ຊີບຕ່າງໆ, ເຮັດໃຫ້ມີເສັ້ນທາງການດູດຊຶມ. ສະນັ້ນ, ໄລຍະການຄາດໄຖແມ່ນຊ່ວຍຫຼຸດຜ່ອນການເຊາະເຈື່ອນຂອງດິນ, ທັງດ້ວຍການຈຳກັດການແຕກຕົວຂອງດິນ ແລະ ການເພີ່ມການດູດຊຶມໃນພື້ນທີ່ສະເພາະທີ່ແນ່ນອນ. ໄລຍະການຄາດໄຖບໍ່ພຽງແຕ່ຈຳກັດການເຊາະເຈື່ອນຂອງນ້ຳໃນດິນໂດຍທົ່ວໄປເທົ່ານັ້ນ ແຕ່ມັນຍັງຊ່ວຍເພີ່ມປຸຍໃນດິນໃນໄລຍະຍາວນຳອີກ. (Sanchez and Hailu 1996) ສຳລັບຕົວຢ່າງການປັບປຸງເພື່ອນຳໃຊ້ທາດບຳລຸງລ້ຽງຄືນໃໝ່ແມ່ນໄດ້ສະແດງໃຫ້ເຫັນຢູ່ພາກເໜືອຂອງຫວຽດນາມ ໂດຍ Fagerstrom et al. (2002).

ສຸດທ້າຍ, ມັນຈຶ່ງເປັນທີ່ຈະແຈ້ງວ່າການກວດກາເບິ່ງອີກຕື່ມນັ້ນແມ່ນມີຄວາມຈຳເປັນໃນການກຳນົດຊ່ວງເວລາທີ່ດີທີ່ສຸດໃນການຄາດໄຖ, ເພື່ອເປັນຕົວຢ່າງເງື່ອນໄຂຂອງດິນ. ການປັບປຸງໃຫ້ມີຄວາມເຂົ້າໃຈນັ້ນຈະຊ່ວຍໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບການເຈື່ອນຂອງດິນ, ແລະ ຊ່ວຍໃຫ້ສາມາດຕັດສິນໃຈໃນດ້ານການຄຸ້ມຄອງດິນໜຽວເຂດຮ້ອນໃນພື້ນທີ່ດິນເນີນພູ.

## ຄວາມຮັບຮູ້

ການສຶກສາຄົ້ນຄວ້າດັ່ງກ່າວນີ້ແມ່ນສ່ວນໜຶ່ງ ຂອງການສະມາຄົມຄຸ້ມຄອງການເຊາະເຈື່ອນ ຂອງດິນ (MSEC), ທີ່ແນໃສ່ເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນກວ່າເກົ່າ ກ່ຽວກັບການເຊາະເຈື່ອນຂອງນ້ຳພາຍໃນອ່າງນ້ຳ. ຜູ້ຂຽນໄດ້ປະກອບສ່ວນດ້ານຄວາມຮູ້ກ່ຽວກັບ ທະນາຄານພັດທະນາອາຊີ(ADB) ແລະ ສະຖາບັນຄຸ້ມຄອງນ້ຳສາກົນ(IWMI) ທີ່ໃຫ້ທຶນໃນໂຄງການນີ້, ແລະ ສູນສຳຫຼວດ ແລະ ວິໄຈດິນ ທີ່ເປັນເຈົ້າພາບນຳພາການສຶກສາຄົ້ນຄວ້າ ຝ່າຍຕ່າງປະເທດໃນລາວ. ຂໍຂອບໃຈເປັນພິເສດນຳທ່ານຄຳປະເສີດ ໄຊຍະທິບ, ທ່ານ Julien Tessier, ທ່ານຄຳໄບ ພົມມີສາ ແລະ ທ່ານ Norbert Silvera ທີ່ໃຫ້ການຊ່ວຍເຫຼືອໃນວຽກງານນີ້, ແລະ ທ່ານ H. Gaillard, O. Duval ທີ່ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການວິເຄາະຂໍ້ມູນ.

Vincent Chaplot, IRD, UR049, Erosion et Changements d'Usage des Terres, BP 06, Vientiane, Laos.
email: chaplotird@laopdr.com

# ວາລະສານການພັດທະນາຂອງລາວ

## ການປະກອບສ່ວນທີ່ຕ້ອງການ

ທີມງານອົງການສະຫະປະຊາຊາດ ສປປ ລາວ ໃຫ້ການສະໜັບສະໜູນການສ້າງວາລະສານກ່ຽວກັບການພັດທະນາທີ່ເອີ້ນວ່າຈຸດປະກາຍ, ຊຶ່ງມີຫົວຂໍ້ວ່າ ທັດສະນະຕໍ່ການພັດທະນາຂອງ ສປປ ລາວ. ຈຸດປະກາຍມີເປົ້າໝາຍເພື່ອກະຕຸກຊຸກຍູ້ໃຫ້ມີການສົນທະນາໃນທຸກບັນຫາທີ່ພົວພັນເຖິງການພັດທະນາໃນ ສປປ ລາວ. ວາລະສານດັ່ງກ່າວນີ້ຈະກະຈາຍຄວາມຮູ້ ແລະ ໃຊ້ເປັນເວທີເພື່ອໂອ້ລົມສົນທະນາ ແລະ ແລກປ່ຽນການຄົ້ນຄວ້າວິເຄາະແບບເລິກເຊິ່ງ, ໃນຂະນະດຽວກັນກໍ່ເປັນການສົ່ງເສີມເປົ້າໝາຍ ແລະ ພັນທະຕາມເນື້ອໃນຖະແຫຼງການສະຫັດສະວັດ.

ວາລະສານທີ່ຈະຈັດພິມຂຶ້ນສາມເທື່ອຕໍ່ປີນີ້ກໍາລັງຊອກຫາການປະກອບສ່ວນທາງດ້ານວຽກການຂຽນຈາກຊຸມຊົນທີ່ມີສ່ວນກ່ຽວຂ້ອງກັບການພັດທະນາ, ລວມທັງນັກພັດທະນາພາຍໃນແລະຈາກສາກົນ, ພະນັກງານລັດ, ພະນັກງານຈາກອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍຕ່າງໆ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ, ນັກຂ່າວ, ນັກວິຊາການ, ນັກຄົ້ນຄວ້າ ຫຼື ຜູ້ໃດກໍ່ຕາມທີ່ມີຜົນປະໂຫຍດໃນ ສປປ ລາວ. ວາລະສານດັ່ງກ່າວນີ້ຈະຖືກຂຽນເປັນພາສາລາວ ແລະ ພາສາອັງກິດ ແລະ ສາມາດຫາອ່ານໄດ້ໃນຮູບແບບພິມ ແລະ ຂໍ້ມູນທາງລະບົບອອນລາຍນ໌.

ອົງການ ສະຫະປະຊາຊາດໃນ ສປປ ລາວ ເຫັນວ່າມັນແມ່ນໂອກາດອັນດີສໍາລັບນັກເຄື່ອນໄຫວການພັດທະນາ ແລະອົງການຈັດຕັ້ງຕ່າງໆທີ່ຢາກເຜີຍແຜ່ບົດລາຍງານ, ການຄົ້ນຄວ້າສຶກສາ ແລະ ຄວາມຄິດເຫັນຕໍ່ແງ່ມຸມໃດໜຶ່ງ ຂອງຫົວຂໍ້ການພັດທະນາປະເທດນີ້. ເອກະສານທັງໝົດທີ່ສົ່ງມາສະເໜີເພື່ອຮັບການພິຈາລະນາ ຈາກຄະນະກໍາມະການຮຽບຮຽງນັ້ນ ຄວນຈະເປັນພາສາອັງກິດ ຫຼື ພາສາລາວ. ບົດຄວາມບໍ່ຄວນຈະຍາວເກີນແປດໜ້າເຈັ້ຍ A4. ເອກະສານຕົ້ນສະບັບຄວນມີບົດສະຫຼຸບສັ້ນໆ (100 ຫາ 120 ຄໍາ) ຂອງບັນຫາທີ່ສະເໜີ, ການຄົ້ນພົບທີ່ສໍາຄັນທີ່ສຸດ ແລະ ບັນຊີລາຍຊື່ຂອງເອກະສານອ້າງອີງທີ່ເໝາະສົມ. ສໍາລັບບົດແນະນໍາສະບັບສົມບູນຄົບຖ້ວນຂອງຈຸດປະກາຍ,ສົ່ງອີເມລມາໄດ້ທີ່ **laodevelopment.journal@undp.org** ຫຼືສົ່ງຈົດໝາຍໄປທີ່ກອງເລຂາ, ຈຸດປະກາຍ c/o UNDP, ຕູ້ໄປສະນີ 345, ວຽງຈັນ, ສ.ປ.ປ.ລາວ.

ຄະນະກໍາມະການຮຽບຮຽງ ຈະຮັບຮອງເອົາຕົ້ນສະບັບໃນຄວາມເຂົ້າໃຈ ທີ່ວ່າພວກມັນຈະໄດ້ຮັບການທົບທວນ. ຜູ້ປະກອບສ່ວນຄວນຈະແຈ້ງ ໃຫ້ຮູ້ວ່າເອກະສານທີ່ສົ່ງມາໃຫ້ນັ້ນ ເຄີຍໄດ້ຮັບການພິມເຜີຍແຜ່ ຫຼື ສົ່ງໄປເພື່ອພິມເຜີຍແຜ່ບ່ອນອື່ນມາກ່ອນຫຼືບໍ່.




**The Secretariat**
**Juth Pakai, c/o UNDP**
**PO Box 345**
**Vientiane**
**Lao PDR**
**Tel. +(856 21) 213390-97**
**e-mail: laodevelopment.journal@undp.org**